# ກອງປະຊຸມປະເມີນຜົນໂຄງການ
# ສົ່ງເສີມການອ່ານແຫ່ງຊາດຄົບຮອບ 10 ປີ
# 1990-2000

## ຄັ້ງທີ I ວັນທີ 15-18 / 12 / 2000
## ທີ່ຫໍວັດທະນະທຳແຫ່ງຊາດ



ຫໍສະໝຸດແຫ່ງຊາດ

# ຄຳນຳ

ກອງປະຊຸມປະເມີນຜົນໂຄງການສົ່ງເສີມການອ່ານແຫ່ງຊາດຄົບຮອບ 10 ປີ 1990-2000 ຄັ້ງທີ I  ວັນທີ 15-18 / 12 / 2000 ທີ່ຫໍວັດທະນະທຳແຫ່ງຊາດກຳແພງນະຄອນວຽງຈັນ.

ກອງປະຊຸມຄັ້ງນີ້ເປັນການປະເມີນການຊ່ວຍເຫລືອຂອງ 3 ອົງການ UNICEF, SVA, ASPB ເພື່ອປະເມີນໂຄງການຫລັງຈາກທີ່ໃຫ້ການຊ່ວຍເຫລືອແລ້ວເປັນເວລາຍາວນານພໍສົມຄວນ ຈຶ່ງໄດ້ມີການເຕົ້າໂຮມພາກສ່ວນຕ່າງ ໆ ປະຕິບັດໄດ້ດີແນວໃດແລະໃນນັ້ນກໍມີການຖອດຖອນບົດຮຽນຊຶ່ງກັນແລະກັນ ເພື່ອໃຫ້ໄດ້ຕາມເປົ້າໝາຍຂອງລັດຖະບານແລະອົງການ.

**ຄະນະຈັດທຳ**

ຂັນທະມາລີ ຍັງນຸວົງ
ຈັນທະລາ ໄຊຍະສິດ
ຫລ້າຊ້ອຍ ແສງສຸວັນ
ອ່ອນຕາ ຊາມຸນຕີ

# ສາລະບັນ


1. ຕາະຕລາງເວລາ 1
2. ລາຍຊື່ຄະນະປະທານ ແລະຄະນະກຳມະການກອງປະຊຸມ 4
3. ລາຍຊື່ແຂກທີ່ເຂົ້າຮ່ວມພິທີເປີດກອງປະຊຸມ 5
4. ລາຍຊື່ຂອງສຳມະນາກອນ 6
5. ບົດລາຍງານສັງລວມຂອງກອງປະຊຸມປະເມີນຜົນຄົບຮອບ 10 ປີ 8
6. ບົດສະຫລຸບຜົນງານຂອງອົງການ SVA 25
7. ບົດລາຍງານຂອງອົງການ ASPB 30
8. ບົດສະຫລຸບຫຍໍ້ຂອງອົງການ ASPB 37
9. ບົດລາຍງານກ່ຽວກັບວຽກງານຫໍສະໝຸດແລະການເລົ່ານິທານຢູ່ກຳປູເຈຍ 42
10. ບົດລາຍງານກ່ຽວກັບພຣະຣາຊອານາຈັກກຳປູເຈຍ 49
11. ບົດຄົ້ນຄວ້າ ແລະທິດທາງວາງແຜນການໃນອນາຄົດຂອງແຕ່ລະກຸ່ມ 55
12. ມະຕິຕົກລົງຂອງກອງປະຊຸມ 72
13. ສະຫລຸບຄ່າໃຊ້ຈ່າຍຂອງກອງປະຊຸມ 73
14. ບົດສະຫລຸບຂອງກອງປະຊຸມ 74
15. ຮູບພາບການເຄື່ອນໄຫວຂອງກອງປະຊຸມ 79

ຕາຕະລາງກອງປະຊຸມປະເມີນຜົນໂຄງການສົ່ງເສີມການອ່ານ
ຈັດຂື້ນໃນວັນທີ 15 - 18/12/2000,ທີ່ນະຄອນຫລວງວຽງຈັນ

| ວັນ,ເດືອນ,ປີ | ເວລາ | ລາຍການ | ສະຖານທີ່ |
|---|---|---|---|
| 15/12/00<br>( ວັນສຸກ ) | 8:00<br>8:30 | ສຳມະນາກອນລົງທະບຽນ<br>ເປີດພິທີເປັນທາງການ<br>- ຜູ້ອຳນວຍການຫໍສະໝຸດແຫ່ງຊາດຜ່ານ<br>ບົດສະຫລຸບໂຄງການສົ່ງເສີມການອ່ານ<br>- ທ່ານລັດຖະມົນຕີກ່າວເປີດພິທີ<br>- ບົດສະຫລຸບຂອງອົງການ SVA<br>- ບົດສະຫລຸບຂອງອົງການ ASPB<br>- ຫົວໜ້າກົມສາມັນສຶກສາ<br>ຂື້ນປະກອບຄຳຄິດເຫັນ<br>- ວິທະຍາກອນຈາກປະເທດກຳປູເຈຍ<br>ຂື້ນປະກອບຄຳຄິດເຫັນ | ຫໍວັດທະນາທຳ<br>ຊັ້ນ 3 |
| | 9:30<br>9:45 | ພັກຜ່ອນ<br>ແນະນຳຫົວຂໍ້ປະເມີນຜົນໂດຍປະທານປະຊຸມ<br>ແນະນຳຄະນະຮັບຜິດຊອບກອງປະຊຸມ<br>ແລະພະນັກງານແຕ່ລະພາກສ່ວນ<br>- ສຳມະນາກອນແນະນຳຕົວເອງ ພ້ອມດ້ວຍ<br>ວຽກງານທີ່ຕົວເອງຮັບຜິດຊອບ | |
| | 11:30 | ຮັບປະທານອາຫານທ່ຽງ | |
| | 13:30 | ຜູ້ອຳນວຍການຫໍສະໝຸດແຫ່ງຊາດ<br>ສະເໜີບົດລາຍງານວຽກງານ<br>ໂຄງການສົ່ງເສີມການອ່ານ<br>- ວິທະຍາກອນຈາກປະເທດ ກຳປູເຈຍ<br>ເລົ່າຄວາມເປັນມາຂອງວຽກງານສົ່ງເສີມ<br>ການອ່ານຢູ່ປະເທດກຳປູເຈຍ | |
| | 15:00 | ພັກຜ່ອນ | |

24/VII
ຫ້າມຈຳໜ່າຍ

| | | | |
|---|---|---|---|
| | 15:15<br>16:30 | ສົນທະນາແລະຖອດຖອນບົດຮຽນ<br>ປິດກອງປະຊຸມ | |
| 16/12/00<br>( ວັນເສົາ ) | 8:30 | ອົງການ ASPB ລາຍງານກ່ຽວກັບວຽກງານ<br>ສົ່ງເສີມການອ່ານພ້ອມນະໂຍບາຍຂອງອົງການ | ຫໍວັດທະນາທໍາ<br>ຊັ້ນ 3 |
| | 9:15 | ອົງການ SVA ລາຍງານກ່ຽວກັບວຽກງານ<br>ສົ່ງເສີມການອ່ານພ້ອມນະໂຍບາຍ | |
| | 9:45 | ພັກຜ່ອນ | |
| | 10:00 | ແບ່ງກຸ່ມຂອງສະມານາກອນອອກເປັນ 7 ກຸ່ມ | |
| | 10:10 | ໂດຍມີຫົວຂໍ້ປະຊຸມ 5 ຂໍ້ໃຫຍ່ຄື :<br>1.ການນໍາໃຊ້ຕູ້ປື້ມ,ຖົງປື້ມມີຈຸດດີແລະຈຸດອ່ອນຄື<br>ແນວໃດ?ວິທີການແກ້ໄຂມີແບບໃດ?<br>2. ວິທີການດຶງດູດເດັກມາຊົມໃຊ້ປື້ມມີແບບໃດ?<br>3. ການພົວພັນລະຫວ່າງບ້ານ, ໂຮງຮຽນ,<br>ສຶກສານິເທດ,ພາກສ່ວນອື່ນໆມີແບບໃດ?<br>4.ການຈັດອົບຮົມຜ່ານມາເປັນແນວໃດ?<br>5. ຂໍ້ສະເໜີເພື່ອປັບປຸງແລະແກ້ໄຂຕໍ່ໂຄງການ? | |
| | 11:30 | ຮັບປະທານອາຫານທ່ຽງ | |
| | 13:30 | ແຕ່ລະກຸ່ມຄົ້ນຄວ້າ | |
| | 15:00 | ພັກຜ່ອນ | |
| | 15:30 | ຫົວໜ້າກຸ່ມມາສ່ອງແສງລາຍງານບັນຫາ | |
| | 16:00 | ແຕ່ລະກຸ່ມກະກຽມລາຍງານ | |
| | 16:30 | ປິດກອງປະຊຸມ | |
| 17/12/00<br>( ວັນອາທິດ ) | 8:30 | ແຕ່ລະກຸ່ມຂື້ນມາລາຍງານ | ຫໍວັດທະນາທໍາ<br>ຊັ້ນ 3 |
| | 10:00 | ພັກຜ່ອນ | |
| | 10:15 | ສືບຕໍ່ລາຍງານ | |
| | 11:30 | ຮັບປະທານອາຫານທ່ຽງ | |
| | 13:30 | ຄົ້ນຄວ້າແຜນການໃນອານາຄົດ<br>ໃນແຕ່ລະກຸ່ມ,ມີ 3ຫົວຂໍ້ຄື: | |

| | | | |
|---|---|---|---|
| | | 1./ທິດທາງການຕອບສະໜອງບຸກຂະລາກອນ ຂອງແຕ່ລະພາກສ່ວນມີແນວໃດ? | |
| | | 2./ນະໂຍບາຍກ່ຽວກັບວຽກງານສົ່ງເສີມການອ່ານ ແຕ່ລະພາກສ່ວນມີແນວໃດ? | |
| | | 3./ ການພົວພັນຮ່ວມມືແຕ່ຂັ້ນພື້ນຖານເຖິງສູນກາງ ມີຄືແນວໃດ? | |
| | 15:00 | ພັກຜ່ອນ | |
| | | ສືບຕໍ່ຄົ້ນຄວ້າ/ສະຫລຸບ | |
| | 16:00 | ຂື້ນລາຍງານແຕ່ລະກຸ່ມ | |
| | 16:30 | ປິດກອງປະຊຸມ | |
| 18/12/00 | | | |
| ( ວັນຈັນ ) | 8:00 | ອອກເດີນທາງໄປທັດສະນະໂຮງຮຽນ | ໂຮງຮຽນ ໂພນທັນ |
| | | 4ແຫ່ງທີ່ມີຫ້ອງສະໝຸດ | _,,_ ສວນມອນ |
| | 11:30 | ພົບກັນຢູ່ຫ້ອງປະຊຸມ | _,,_ ໜອງບົວທອງ |
| | 11:45 | ຮັບປະທານອາຫານທ່ຽງ | _,,_ ໜອງໜ້ຽວ |
| | 13:30 | ກະກຽມສະຫລຸບ | |
| | 14:00 | ພັກຜ່ອນ | |
| | 14:45 | ພິທີປິດເປັນທາງການ | |
| | 15:00 | ກອງເລຂາຂື້ນອ່ານຜົນສຳເລັດຂອງກອງປະຊຸມ | |
| | | ຕາງໜ້າສຳມະນາກອນສະແດງຄວາມຮູ້ສືກ | |
| | | ຕາງໜ້າກົມສາມັນປະກອບຄຳເຫັນ | |
| | 16:00 | ທ່ານລັດຖະມົນຕີກ່າວປິດ | |
| | | ຊົມການສະແດງຂອງເດັກນ້ອຍຫ້ອງຮັກອ່ານ | |
| | | ສະມາຄົມ ASPB | |
| | 17:00 | ຮັບປະທານອາຫານເບົາ | |
| | | ປິດກອງປະຊຸມເປັນທາງການ | |

## ຄະນະປະທານກອງປະຊຸມ

| | |
|---|---|
| 1. ທ່ານ ນາງ ກິງເດືອນ ເນດຕະວົງ | ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດ |
| 2. ທ່ານ ວິລັດ ອຸດົມສຸກ | ຮອງຫົວໜ້າພະແນກສາມັນສຶກສາ |
| 3. ທ່ານ ນາງ ດວງເດືອນ ບຸນຍາວົງ | ທີ່ປຶກສາສະມາຄົມສົ່ງປື້ມຮູບເດັກລາວ-ຍີ່ປຸ່ນ ( ASPB ) |
| 4. ທ່ານ ນາງ ຈັນທະສອນ ອິນທະວົງ | ປະທານສະມາຄົມສົ່ງປື້ມຮູບເດັກລາວ-ຍີ່ປຸ່ນ ( ASPB ) |
| 5. ທ່ານ ຕາເກະຮິໂລະ ໂອໂນະ | ຫົວໜ້າອົງການພັດທະນາເດັກລາວ-ຍີ່ປຸ່ນ ( SVA ) |

## ຄະນະກຳມະການກອງປະຊຸມ

| | |
|---|---|
| 1. ທ່ານ ບຸນອ້ຽງ ຈຸນລະມຸນຕີ | ຫົວໜ້າຫ້ອງສະໝຸດສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ |
| 2. ທ່ານ ພຽງສະຫວັນ | |
| 3. ທ່ານ ນາງ ຫລ້າຊ້ອຍ ແສງສຸວັນ | ວິຊາການຫໍສະໝຸດແຫ່ງຊາດ |
| 4. ທ່ານ ນາງ ຂັນທະມາລີ ຍັງນຸວົງ | ວິຊາການຫໍສະໝຸດແຫ່ງຊາດ |
| 5. ທ່ານ ນາງອ່ອນຕາ ຊາມຸນຕີ | ວິຊາການຫໍສະໝຸດແຫ່ງຊາດ |
| 6. ທ່ານ ນາງ ຈັນທະລາ ໄຊຍະສິດ | ວິຊາການຫໍສະໝຸດແຫ່ງຊາດ |
| 7. ທ່ານ ນາງ ສຸພາພອນ ວິຊາປຣາ | ຜູ້ປະສານງານຝ່າຍລາວຂອງອົງການ (SVA ) |
| 8. ທ່ານ ນາງ ສົມເພັດ ພົງພະຈັນ | ຜູ້ປະສານງານຝ່າຍລາວຂອງອົງການ ( ASPB ) |
| 9. ທ່ານ ນາງ ຄຳປ້ອງ ດວງສັກ | ພະນັກງານ ( SVA ) |
| 10. ທ່ານ ນາງ ບໍ່ແກ້ວ ສຸ້ຍຍະວົງ | ພະນັກງານ ( ASPB ) |
| 11. ທ່ານ ນາງ ບົງອອນ ພັນທະວົງ | ພະນັກງານ ( ASPB ) |
| 12. ທ່ານ ນາງ ພູວຽງ ສິດທິວົງ | ພະນັກງານຫໍສະໝຸດແຫ່ງຊາດ |
| 13. ທ່ານ ນາງ ສົມເພັດ ມະໂນກຸນ | ພະນັກງານຫໍສະໝຸດແຫ່ງຊາດ |

# ລາຍຊື່ແຂກທີ່ເຂົ້າຮ່ວມພິທີເປີດກອງປະຊຸມ

1. ທ່ານ ແຂກແກ້ວ ສ້ອຍໄຊຍະ ລັດຖະມົນຕີຊ່ວຍວ່າການກະຊວງຖະແຫລງຂ່າວແລະວັດທະນະທຳ
2. ທ່ານ ຄຳຮຸ່ງ ສັກລໍຄຳ ຫົວໜ້າກົມສາມັນສຶກສາກະຊວງສຶກສາ
3. ທ່ານ ກາວິນ ກຽງຄຳຊົນນີ ຮອງຫົວໜ້າກົມພິມຈຳໜ່າຍແລະຫໍສະໝຸດ
4. ທ່ານ ນາງ ແສງເດືອນ ຫລ້າຈັນທະບູນ ຫົວໜ້າກົມສ້າງຄູກະຊວງສຶກສາ
5. ທ່ານ ນາງ ພອງຄຳ ສິມສະນິດ ຮ/ ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
6. ທ່ານ ນາງ ປາທຣີຊີອາ ນໍແລນດ໌ ເລຂາສອງສະຖານທູດສະຫະລັດອາເມລິກາ
7. ທ່ານ ອາຈານ ດຣ. ເພັນສີ ກວຍສຸວັນ ຜູ້ຈັດການສຳນັກງານພູມີພາກເອເຊຍຂອງສະຫະພັນລະຫວ່າງປະເທດວ່າດ້ວຍສະມາຄົມແລະສະຖາບັນຫ້ອງສະໝຸດ
8. ຄະນະອາຈານຈາກສະຖາບັນວິຈັຍສິລະປະວັດທະນະທຳອີສານມະຫາວິທະຍາລັຍມະຫາສາລະຄາມ
9. ທ່ານ ນັດ ບຸນເຮືອນ ຫົວໜ້າອຳນວຍການກົມກໍ່ສ້າງຄູກະຊວງສຶກສາຊາວໜຸ່ມແລະກິລາປະເທດກຳປູເຈຍ
10. ທ່ານ ທອງ ຊິນໂຕ ຮອງຜູ້ອຳນວຍການຫ້ອງການແຂວງກອນດາລ ປະເທດກຳປູເຈຍ
11. ທ່ານຜູ້ຕາງໜ້າສູນຂໍ້ມູນຂ່າວສານສະຫະພັນແມ່ຍິງ
12. ທ່ານຜູ້ຕາງໜ້າອົງການ CAA
13. ທ່ານຜູ້ຕາງໜ້າອົງການ UNDP
14. ທ່ານຜູ້ຕາງໜ້າອົງການ CWS
15. ທ່ານຜູ້ຕາງໜ້າອົງການ PADET
16. ທ່ານຜູ້ຕາງໜ້າອົງການສູນມິນໄຊ

# ລາຍຊື່ສຳມະນາກອນ

| | |
|---|---|
| 1. ອຈ ໄຊມ້າວ ແສງຈັນ | ແຂວງ ຜົ້ງສາລີ |
| 2. ອຈ ບຸນແສງ | - // - |
| 3. ອຈ ແສງຄຳ | ແຂວງ ຫລວງນ້ຳທາ |
| 4. ອຈ ຢ້ອນ | - // - |
| 5. ອຈ ຈາຍ | - // - |
| 6. ອຈ ຄຳ ເຊື່ອນ | ແຂວງ ບໍ່ແກ້ວ |
| 7. ອຈ ກອງແສງ | - // - |
| 8. ອຈ ມຸ່ຍລາວັນ | ແຂວງ ຫົວພັນ |
| 9. ອຈ ໄມວອນ | - // - |
| 10. ອຈ ບຸນມີ ນັນທະພອນ | ແຂວງ ຊຽງຂວາງ |
| 11. ອຈ ສົມໃຈ | - // - |
| 12. ອຈ ຫວັນບົວສີ | ແຂວງ ອຸດົມໄຊ |
| 13. ອຈ ອຸ່ນເອື້ອຍ | - // - |
| 14. ອຈ ວິໄລເສົາ | - // - |
| 15. ອຈ ບົວແວງ | ແຂວງ ໄຊຍະບູລີ |
| 16. ອຈ ບົວຈັນ | - // - |
| 17. ອຈ ບົວວັນ | - // - |
| 18. ອຈ ສຸວັນ | - // - |
| 19. ອຈ ບົວທອງ | ແຂວງ ຫລວງພະບາງ |
| 20. ອຈ ບົວພັນ | - // - |
| 21. ອຈ ຕຸ້ຍ | - // - |
| 22. ອຈ ຄົວເຈ້ຍ ດະເຊັ້ງ | ເຂດພິເສດ ໄຊສົມບຸນ |
| 23. ອຈ ປາວວ່າງ ວ່າຢື້ງຕູ້ວີ | - // - |
| 24. ອຈ ທອງໃບ | ແຂວງ ວຽງຈັນ |
| 25. ອຈ ສົມບຸນ | - // - |
| 26. ອຈ ເພັດສີທອງ | - // - |

| | |
|---|---|
| 27. ອຈ ບຸນຍອດ ບໍລະບຸດ | ແຂວງ ກຳແພງນະຄອນ |
| 28. ອຈ ຄຳ ຫວັນ | - // - |
| 29. ອຈ ບົວວອນ | - // - |
| 30. ອຈ ພູມີ ກິ່ງຄີລີສັກ | ແຂວງ ບໍລິຄຳໄຊ |
| 31. ອຈ ກອງລີ ມະໂນກຸນ | - // - |
| 33. ອຈ ສຸວັນນະລີ | - // - |
| 34. ອຈ ວາດສະໜາ | - // - |
| 35. ອຈ ຄຳຜິນ ແສງປະທຸມ | - // - |
| 36. ອຈ ທອງສາ ພູນະລິງ | - // - |
| 37. ອຈ ຈັນທອນ ໄຊຍະແສງ | ແຂວງ ສະຫວັນນະເຂດ |
| 38. ອຈ ບຸນທັນ | - // - |
| 39. ອຈ ບຸນລ້ຳ | - // - |
| 40. ອຈ ສົມໝອນ | ແຂວງ ສາລະວັນ |
| 41. ອຈ ມັດສາ | - // - |
| 42. ອຈ ບຸນເຫຼືອ | ແຂວງ ເຊກອງ |
| 43. ອຈ ວົງເພັດ | - // - |
| 44. ອຈ ໜູພັດ | ແຂວງ ຈຳປາສັກ |
| 45. ອຈ ຄັດສະໄໝ | - // - |
| 46. ອຈ ພູວົງ | ແຂວງ ອັດຕະປື |
| 47. ອຈ ຄຳກ້ອນ | - // - |

24 / VII
ຫ້າມຈຳໜ່າຍ

# ບົດລາຍງານສັງລວມ

ສະເໜີໃນກອງປະຊຸມປະເມີນຜົນໂຄງການສົ່ງເສີມການອ່ານແຫ່ງຊາດຄັ້ງທີ 1

ຄົບຮອບ 10 ປີ 1990-2000

ອຸປະຖຳໂດຍ : - ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວແຫ່ງປະເທດຍີ່ປຸ່ນ( ASPB )

- ອົງການແມ່ແລະເດັກ ( UNICEF )
- ອົງການພັດທະນາເດັກລາວຍີ່ປຸ່ນ ( SVA )

ສະເໜີໂດຍ ກິ່ງເດືອນ ເນດຕະວົງ

ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດ

ຜູ້ອຳນວຍການຫໍສະໝຸດແຫ່ງຊາດ

## ຄວາມເປັນມາແລະການດຳເນີນງານໂຄງການ

### I.ຄຳນຳ

ຈາກສະຖິຕິພື້ນຕໍ່ແຫ່ງ ສ.ປ.ປ.ລາວ 1975-2000 ຂອງສູນສະຖິຕິແຫ່ງຊາດ, ຄະນະກຳມະການແຜນການແຫ່ງລັດ ພົບວ່າໃນປີ 1999 ມີປະຊາກອນທັງໝົດ 5,091.100 ຄົນ ຍິງ 2,575.000 ຄົນ ຊາຍ 2, 516100 ຄົນ ໃນນັ້ນເດັກນ້ອຍເກນອາຍຸຢູ່ໃນໄວກ່ຽມ ອະນຸບານສຶກສາ 801,400 ຄົນ, ປະຖົມສຶກສາແລະ ມັດທະຍົມຕອນຕົ້ນ (6-14 ປີ ) 1.450.200 ຄົນ ສັງລວມີດໄລ່ເປັນອັດຕາສ່ວນຮ້ອຍ ເທົ່າກັບ 44,1% ຂອງພົນລະເມືອງລາວ. ນັບວ່າມີເດັກນ້ອຍເກືອບຈະເຖິງເຄິ່ງຍັງຢູ່ ໃນໄວກ່ຽມ ແລະເຂົ້າຮຽນຂັ້ນພື້ນຖານແລະກໍຢູ່ໃນເປົ້າໝາຍຂອງໂຄງການສົ່ງເສີມການອ່ານ.

ປະຊາຊົນລາວບັນດາເຜົ່າ ສ່ວນໃຫ່ຍອາໄສ ໃນຊົນນະບົດຈຳນວນນ້ອຍຈະຢູ່ໃນຕົວເມືອງ. ການບໍລິການ ທາງການສຶກສາ ໃນເມືອງ ໂດຍສະເພາະໃນນະຄອນຫລວງວຽງຈັນ ,ເທສບານເມືອງຕ່າງໆຂອງ 17 ແຂວງແລະ 1 –ເຂດພິເສດໄຊສົມບູນ ດີກວ່າໃນຊົນນະບົດ.

ໂອກາດທາງສຶກສາຂອງຄົນໃນຊົນນະບົດນ້ອຍກວ່າຄົນໃນເມືອງ ໃນຈຳນວນນີ້ ຍັງມີປະຊາກອນທີ່ບໍ່ຮູ້ໜັງສືແລ້ວ,ມາໃນໄລຍະຫລັງກັບຄືນກືກໜັງສືອີກ.

ອີງຕາມມະຕິຂອງກົມການເມືອງສູນກາງພັກກໍດີຂອງລັດຖະບານລາວໂດຍເລີ່ມແຕ່ມະຕິ 4 ໄດ້ເນັ້ນໜັກໃຫ້ໜ່ວຍງານທີ່ກ່ຽວຂ້ອງກໍຄືກະຊວງສຶກສາທິການ,ກະຊວງຖະແຫລງຂ່າວແລະວັດທະນະທຳໃຫ້ເອົາໃຈໃສ່ຕໍ່ຄວາມສຳຄັນ ໃນການພັດທະນາກິດຈະການທາງການສຶກສາ ປວງຊົນແລະກິດຈະກາ ຫ້ອງສະໝຸດ, ສູນບໍລິການຂ່າວ ໃນ ສ.ປ.ປ ລາວ ເຮັດໃຫ້ປະຊາຊົນບັນດາເຜົ່າ ໃນຕົວເມືອງກໍຄືໃນຊົນນະບົດໃຫ້ທ້ອງຖິ່ນຫ່າງໄກສອກຫລີກໄດ້ຮັບຂ່າວສານອັນມີປະໂຫຍດທີ່ເອື້ອອຳນວຍແກ່ການດຳລົງຊີວິດ, ໃຫ້ສິດສອນ ນັກຮຽນເດັກນ້ອຍ ກ່ອນໄວຮຽນ. ປະຖົມສຶກສາໃຫ້ຮູ້ຈັກອ່ານ, ຮຽນຮູ້ ໃຫ້ມີ ມີ້ນັບກ້າວໜ້າເພື່ອປະກອບສ່ວນເຂົ້າໃນພາລະກິດສ້າງສາປະເທດຊາດ.

ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ ໃນປີ 1975 ຄວາມຈຳເປັນໃນການປະຕິຮູບແລະພັດທະນາວຽກງານສຶກສາໄດ້ເຮັດໃຫ້ປະລິມານໂຮງຮຽນຊັ້ນປະຖົມເພີ່ມຂຶ້ນຢ່າງໄວວາ(ຈາກຕົວເລກ)

ຈຳນວນນັກຮຽນ ກໍເພີ້ມຂຶ້ນສູງພໍສົມຄວນ ເນື່ອງຈາກວ່າເດັກນ້ອຍອາຍຸຄົບ 6 ຂວບ ຈຳຕ້ອງເຂົ້າໂຮງຮຽນ ໃນລະດັບປະຖົມສຶກສາ.ໃນ 15 ປີ ຄືນຫລັງ ພວກເຮົາແລ່ນນຳປະລິມານຫລາຍກວ່າຄຸນນະພາບ, ເພື່ອໃຫ້ທັນກັບສະພາບຄວາມຕ້ອງການໃນເມື່ອກອ່ນ. ຈະເຫັນໄດ້ວ່າໃນໂລກທີ່ກຳລັງປ່ຽນແປງໃນຢ່າງໄວວານີ້ການສຶກສາເປັນຫລັກການອັນສຳຄັນໃນການພັດທະນາຊັບພະຍາກອນມະນຸດແລະພັດທະນາຊົນນະບົດ, ພັກ ( ລັດຖະບານ ) ລາວໄດ້ລົງເຫັນເຖິງຄວາມທຸກຍາກລຳບາກ, ສຸຂະພາບທີ່ບໍ່ສົມບູນ ການຂາດຄວາມຮູ້ຄວາມເຂົ້າໃຈແລະ ການອ່ານໜັງສືບໍ່ອອກຂອງປະຊາຊົນໂດຍສະເພາະເຂດຫ່າງໄກສອກຫລີກ ເຊິ່ງເປັນອຸປະສັກທີ່ສຳຄັນຂອງການພັດທະນາປະເທດຊາດໃຫ້ຫລຸດ ພົ້ນອອກໄພແຫ່ງຄວາມທຸກຍາກ.

ພັກລັດຖະບານໄດ້ລົງເຫັນຄວາມສຳຄັນຂອງການສຶກສາຕໍ່ເນື່ອງຂອງປະຊາຊົນໂດຍສະເພາະຢ່າງຍິ່ງການສົ່ງເສີມການສຶກສາທຸກຮູບແບບ ໃນລະບົບການສຶກສາ ນອກໂຮງຮຽນ.

ເມື່ອພິຈາລະນາເຖິງການຈັດການສຶກສາໃນໄລຍະຜ່ານມາເຖິງໃນປະຈຸບັນພົບວ່າໜ່ວຍງານໜຶ່ງທີ່ສຳຄັນທີ່ຈະຊ່ວຍຊຸກຍູ້ໃຫ້ແກ່ການພັດທະນາການສຶກສາແຫ່ງຊາດແລະພັດທະນາຄຸນນະພາບຊີວິດຂອງປວງຊົນ ກໍຄື ຫໍສະຫມຸດແຫ່ງຊາດ ເຊິ່ງພັກລັດຖະບານໄດ້ມອບໝາຍພາລະໜ້າທີ່ຕົ້ນຕໍໃຫ້ຈັດຕັ້ງແລະຊີ້ນຳ.

ຕັ້ງແຕ່ ປີ 1990-2000 ຫໍສະຫມຸດແຫ່ງຊາດ ໄດ້ເຮັດວຽກຢ່າງເປັນລະບົບຕໍ່ເນື່ອງຮ່ວມກັບກົມສາມັນ-ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ-ກົມສຶກສານອກລະບົບ-ກົມກໍ່ສ້າງບໍາລຸງຄູໃນໂຄງເຂດວຽກງານສົ່ງເສີມການອ່ານໜັງສື.

II. <u>ທີ່ມາຂອງໂຄງການສົ່ງເສີມການອ່ານແຫ່ງຊາດ.</u>

ປີ 1976-1982 ກົມຫໍສະຫມຸດແຫ່ງຊາດແລະ ກົມສາມັນສຶກສາທີ່ຂຶ້ນກັບກະຊວງສຶກສາໄດ້ດໍາເນີນການສໍາຫລວດກ່ຽວກັບການອ່ານໜັງສື ໃນຂອບເຂດທົ່ວປະເທດ ເພື່ອພັດທະນາໃຫ້ແກ່ວຽກງານສຶກສາແລະ ຊີວິດການເປັນຢູ່ຂອງປວງຊົນ ໃນສັງຄົມໃຫ້ມີຄຸນນະພາບທີ່ດີ, ໝັ້ນຄົງແລະ ເຊື່ອຖືໄດ້. ການດໍາເນີນ ການເກັບກໍາຂໍ້ມູນໄດ້ ປະຕິບັດມາເປັນເວລາຕໍ່ເນື່ອງເຖິງ 10 ປີແລະໄດ້ແກ້ໄຂດ້ວຍຫລາຍຮູບແບບພ້ອມທັງເປັນການທົດລອງແຕ່ປະກົດວ່າສະພາບການອ່ານໜັງສືໃນກຸ່ມເດັກນ້ອຍນັກຮຽນຊັ້ນປະຖົມ-ມັດທະຍົມຍັງອ່ອນຫລາຍແລະ ໃນໝູ່ປວງຊົນກໍເຊັ່ນດຽວກັນ.

ຍັງມີທາງສຽງແລະຄວາມວິພາກວິຈານຈາກສາກົນວ່າຄົນລາວບໍ່ມັກອ່ານໜັງສື. ຕາມສະຖານທີ່, ສາທາລະນະຊົນບໍ່ຄ່ອຍເຫັນຄົນລາວອ່ານ ໜັງສືພິມ, ເໝືອນກັບປະເທດອື່ນ, ຈາກຄວາມຄິດດັ່ງກ່າວນີ້ໄດ້ເຮັດໃຫ້ກົມຫໍສະໝຸດແຫ່ງຊາດ ເຊິ່ງເປັນໜ່ວຍງານຫລັກທີ່ຮັບຜິດຊອບວຽກງານ ບໍລິການການອ່ານໜັງສືໄດ້ເລີ່ມເກັບກໍາຂໍ້ມູນພື້ນຖານເພື່ອສະເໜີແກ້ບັນຫາຕໍ່ລັດຖະບານກໍຄືຕໍ່ກະຊວງສຶກສາແລະໄດ້ຄົ້ນຄວ້າເຖິງອະດີດຄືນຫລັງ. ຕັ້ງແຕ່ໃດໆ ມາປະຊາຊົນລາວເຄີຍມີມູນເຊື້ອ ທາງດ້ານການຂີດຂຽນແຕ່ງກາບກອນ ວັນນະຄະດີ ອັນມີຊື່ລືນາມມາແຕ່ສະໄໝຍ້ອນຫລັງຄືນເຖິງສະຕະວັດທີ 15 –ໂດຍຢັ້ງຢືນຈາກຫລັກຖານທາງດ້ານປະຫວັດສາດ ໃນສະໄໝ ປະເທດລາວເປັນດິນແດນແຫ່ງອານາຈັກລ້ານຊ້າງ, ມີຫລາຍແສນຜູກທີ່ຂຽນກ່ຽວ ວັນນະຄະດີແລະ ສາດອື່ນໆທີ່ດີເດັ່ນຂອງລາວທີ່ຄົງຕົວຢູ່ ໃນໜັງສືຜູກໃບລານລາວ.

ປະຊາຊົນລາວແຕ່ເໜືອຕະຫລອດໃຕ້ໄດ້ໂຊກຊາຕາກໍາອັນແສນທໍລະມານແລະໜົດສິດເສລີພາບທີ່ຈະຟື້ນຟູແລະພັດທະນາຕົນເໝືອນກັບປະເທດອື່ນ,ເຄີຍຈົມຢູ່ໃນແປວໄຟແຫ່ງສົງຄາມລ່າເມືອງຂຶ້ນທັງແບບເກົ່າແລະ ໃໝ່ຫລາຍສັດຕະວັດ.

ແຕ່ໃດມານອກຈາກຈະມີ ຫໍພຣະໄຕ ປີດົກຢູ່ຕາມວັດວາອາຮາມມາແລ້ວຫລາຍໆແຫ່ງ, ເກືອບມີທຸກໆວັດເກົ່າແກ່ຂອງລາວ ແຕ່ບໍ່ມີຫ້ອງສະຫມຸດສໍາຫລັບໃຫ້ປວງຊົນ ຊົນຊັ້ນຄົນທໍາມະດາໄດ້ຊົມໃຊ້.

ສາມາດເກັບກຳຂໍ້ມູນຈາກປວງຊົນ, ນັກຮຽນ, ນັກສຶກສາແລະຈາກການວິໄຈຂໍ້ມູນຈຶ່ງສາມາດຄົ້ນພົບສາເຫດຕົ້ນຕໍທີ່ວ່າເປັນຫຍັງຄົນລາວບໍ່ມັກອ່ານໜັງສື?

ຄວາມຈິງຄົນລາວທຸກຄົນມັກອ່ານໜັງສື ແຕ່ເນື່ອງຈາກການຂາດແຄນດ້ານໜັງສື, ຫ້ອງສະໝຸດແຫລ່ງບໍລິການຂ່າວສານມາເປັນເວລາຍາວນານເກືອບສັດຕະວັດໄດ້ເຮັດໃຫ້ຄົນລາວຂາດນິໄສມັກການອ່ານໜັງສືເໝືອນຊາດອື່ນ ໆ.

ຫໍສະໝຸດແຫ່ງຊາດໄດ້ຮ່າງດຳລັດສະເໜີຕໍ່ລັດຖະມົນຕີກະຊວງສຶກສາທິການເພື່ອອອກແລະນຳໃຊ້ໃນໂຮງຮຽນຕ່າງໆໂດຍເນັ້ນໜັກໃຫ້ຈັດຕັ້ງຫ້ອງສະໝຸດໂຮງຮຽນແຕ່ປະຖົມສຶກສາເຖິງມັດທະຍົມສຶກສາໂດຍອີງໃສ່ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນຄື :

- ໂຮງຮຽນປະຖົມທີ່ມີນັກຮຽນແຕ່ 500 ຄົນຂຶ້ນໄປບັງຄັບໃຫ້ມີຫ້ອງສະໝຸດ 1 ແຫ່ງ.
- ໂຮງຮຽນກິນນອນ ນັກຮຽນແຕ່ 200 ຄົນຂຶ້ນໄປໃຫ້ມີຫ້ອງສະໝຸດໂຮງຮຽນ 1 ແຫ່ງ.
- ໂຮງຮຽນມັດທະຍົມທີ່ມີນັກຮຽນ 500 ຄົນຂຶ້ນໄປໃຫ້ມີຫ້ອງສະໝຸດ.

ໃນປີ 1978-80 ກະຊວງສຶກສາມອບພາລະດັ່ງກ່າວໃຫ້ຫ້ອງສະໝຸດແຫ່ງຊາດຈັດຕັ້ງປະຕິບັດ, ສາມາດສ້າງຫ້ອງອ່ານໜັງສືໃຫ້ແກ່ໂຮງຮຽນປະຖົມມັດທະຍົມໄດ້ 72 ຫ້ອງ ໃນຂອບເຂດທົ່ວປະເທດ.

ໃນປີ 1982-1989 ຫ້ອງສະໝຸດດັ່ງກ່າວໄດ້ຖືກຍຸບຕົວເນື່ອງຈາກວ່າໃນໄລຍະນັ້ນ, ຄວາມຈຳເປັນທີ່ຈະນຳໃຊ້ຫ້ອງຮຽນສຳຫລັບນັກຮຽນມີຄວາມຈຳເປັນເພີ່ມຂຶ້ນ,ຫ້ອງສະໝຸດດັ່ງກ່າວກໍສະຫລາຍໄປໃນຕົວໜັງສືກໍໝົດໄປເຊັ່ນດຽວກັນ.

ໃນປີ1982,ຫໍສະໝຸດແຫ່ງຊາດໄດ້ມີໂອກາດໄປຮ່ວມກອງປະຊຸມສະຫະພັນຫ້ອງສະໝຸດສາກົນ ( IFLA ) ທີ່ປະເທດເຢຍລະມັນໄດ້ພົບກັບ ອາຈານ ສົມບູນ ສິງຄະມະນັນ ຜູ້ລິເລີ່ມແລະບຸກເບີກການສົ່ງເສີມການອ່ານ,ການພັດທະນາການອ່ານໃນກຸ່ມເດັກປະຖົມສຶກສາໃນເມືອງແລະຊົນນະບົດຂອງປະເທດໄທ, ໄດ້ພົບປະກັບຫລາຍຊ່ຽວຊານດ້ານການສົ່ງເສີມການອ່ານຈາກຫລາຍປະເທດແລະໄດ້ໃຫ້ຂໍ້ຄິດເຫັນກ່ຽວກັບບັນຫາຂອງປະເທດລາວ.

"ສຳຫລັບປະເທດລາວຍັງບໍ່ທັນຫລ້າສວາຍເທື່ອ, ຄວນຈະລິເລີ່ມຈາກການປູກນິໄສມັກອ່ານໃນກຸ່ມເດັກປະຖົມສຶກສາປະເທດລາວບໍ່ມີງົບປະມານພຽງພໍໃນການສ້າງຫ້ອງສະໝຸດເປັນຫລັງໃຫ້ໂຮງຮຽນແຕ່ລະແຫ່ງ ຄວນຈະເລີ່ມຕົ້ນດ້ວຍການນຳໜັງສືຈຳນວນໜຶ່ງໃສ່ຖົງ ຫລືຕູ້ໜັງສືນ້ອຍ ໆໄປແຈກຢາຍໃຫ້ໂຮງຮຽນປະຖົມຕ່າງ ໆແທນການສ້າງຫ້ອງສະໝຸດຖາວອນ. ສິ່ງສຳຄັນຄື ບັນນາຮັກຕ້ອງລົງໄປຫາເດັກນຳພາເດັກສ້າງກິດຈະກຳຕ່າງ ໆກ່ຽວກັບການອ່ານ, ນຳເດັກເຂົ້າສູ່ປຶ້ມ, ນຳປຶ້ມໄປສູ່ເດັກ."

ໃນປີ 1989-ຫໍສະໝຸດແຫ່ງຊາດໄດ້ມີໂອກາດໄປທັດສະນະສຶກສາທີ່ປະເທດໄທຈຶ່ງໄດ້ສະເໜີໄປຢ້ຽມຢາມໂຄງການສົ່ງເສີມການອ່ານຂອງອາຈານ ສົມບູນ ສິງຄະມະນັນ ທີ່ມະຫາວິທະຍາລັຍສີນະຄະຣິນທະຣະວິໂຣດແລະໄດ້ໄປເຂົ້າອົບຮົມກ່ຽວກັບການອ່ານໜັງສືແລະການຜະລິດໜັງສືທີ່ດີສຳຫລັບເດັກທີ່ສູນກາງວັດທະນະທຳອາຊຽນເພື່ອອົງການອຸຍແນດສະໂກປະເທດຍີ່ປຸ່ນ( ACCU ).

ໃນປີດຽວກັນຫໍສະໝຸດແຫ່ງຊາດໄດ້ຂຶ້ນກັບກະຊວງຖະແຫລງຂ່າວແລະວັດທະນະທຳ ໄດ້ນຳແນວຄິດດັ່ງກ່າວມາສ້າງເປັນໂຄງການຮ່ວມມືນຳສະເໜີຕໍ່ທ່ານຫົວໜ້າກົມສາມັນ ( ທ່ານ ບຸນຖອງ ວິໄຊສັກ ) ເພື່ອດຳເນີນໂຄງການຮ່ວມມືນຳກັນໂດຍມີຫໍສະໝຸດແຫ່ງຊາດ, ກົມສາມັນສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແລະຕໍ່ມາມີວົງນະສິນຮ່ວມນຳ.

ໂຄງການນີ້ມີຊື່ວ່າໂຄງການສົ່ງເສີມການອ່ານແຫ່ງຊາດໂດຍມີທ່ານຫົວໜ້າກົມສາມັນເປັນຫົວໜ້າຊີ້ນຳລວມ,ສ່ວນຫໍສະໝຸດເປັນຄະນະຈັດຕັ້ງປະຕິບັດແລະດຳເນີນການຂໍທຶນຈາກສາກົນ.

ຫລັງຈາກໂຄງການດຳເນີນໄດ້ 2 ປີ, ທ່ານຫົວໜ້າກົມສາມັນມອບໃຫ້ຜູ້ອຳນວຍການຫໍສະໝຸດແຫ່ງຊາດເປັນຫົວໜ້າໂດຍກົງມາຈົນເຖິງປະຈຸບັນ.ໂຄງການນີ້ໄດ້ວາງຄາດໝາຍໄວ້ປະມານ 10 ປີ ເພື່ອໃຫ້ສຳເລັດ.

<u>ວັດຖຸປະສົງຫລັກຂອງໂຄງການ</u>

ບັນດາວັດຖຸປະສົງຂອງໂຄງການມີດັ່ງຕໍ່ໄປນີ້ :

1. ປູກນິໄສຮັກການອ່ານໜັງສືໃຫ້ແກ່ເດັກນັກຮຽນປະຖົມເຮັດໃຫ້ເຂົາເຫລົ່ານັ້ນກາຍເປັນນັກອ່ານທີ່ດີຂອງສັງຄົມເພື່ອອະນາຄົດສ້າງໃຫ້ໄດ້ສັງຄົມການອ່ານ.
2. ສ້າງຕູ້ໜັງສືເຄື່ອນທີ່ ເພື່ອແຈກຢາຍໃຫ້ໂຮງຮຽນປະຖົມສຶກສາທຸກແຫ່ງ, ແຫ່ງລະ 1 ໜ່ວຍ. (ພ້ອມທັງຈັດຕັ້ງການສຳມະນາແນະນຳວິທີນຳໃຊ້ໃຫ້ຖືກຕ້ອງ )

( ສຳຫລັບບາດກ້າວທີ 1)

3. ສ້າງຫ້ອງສະໝຸດໂຮງຮຽນແບບຖາວອນໃຫ້ແກ່ໂຮງຮຽນປະຖົມ ( ສຳຫລັບບາດກ້າວ 2 )
4. ຝຶກອົບຮົມນັກຮຽນໃຫ້ຮູ້ວິທີປົກປັກຮັກສາແລະນຳໃຊ້ປຶ້ມແບບຮຽນໃຫ້ໝົດຄຸນນະພາບອາຍຸການຂອງວັດຖຸພາບຢ່າງນ້ອຍປຶ້ມຫົວໜຶ່ງໃຊ້ໄດ້ 10 ເທື່ອຄືປະມານ 10 ປີ.
5. ຝຶກອົບຮົມ ນັກຂຽນ, ນັກແຕ້ມໜັງສືສຳຫລັບເດັກໃນໝູ່ນັກຮຽນແລະຄູອາຈານ. ( ໃຫ້ຮູ້ນຳໃຊ້ເຄື່ອງພິມຜ້າໃໝໂຕຊາບານ- ບຸນຊູ )

## ເປົ້າໝາຍຂອງໂຄງການ

- ທຸກ ໆໂຮງຮຽນປະຖົມສຶກສາໃນຂອບເຂດທົ່ວປະເທດ.
- ໂຮງຮຽນມັດທະຍົມຕົ້ນ-ປາຍ ( ກໍລະນີພິເສດ )

## III. ການດໍາເນີນງານໂຄງການແລະສະໜັບສະໜູນຂອງຜູ້ອຸປະຖໍາ

ໂຄງການສົ່ງເສີມການອ່ານແຫ່ງຊາດນີ້ເປັນໂຄງການພິເສດແລະແຕກຕ່າງກັບໂຄງການທົ່ວໄປທີ່ໜ່ວຍງານຕ່າງໆຂອງລັດຖະບານລາວໄດ້ຮັບທຶນຊ່ວຍ, ມັນແຕກຕ່າງຢູ່ບ່ອນວ່າເປັນໂຄງການນໍ້າໃຈ, ສຸດແລ້ວແຕ່ຄວາມສັດທາຂອງຜູ້ອຸປະຖໍາ, ທາງໂຄງການຍິນດີຮັບເອົາການອຸປະຖໍາເລີ່ມແຕ່ບຸກຄົນເຖິງອົງການ,ທີ່ຢາກມີສ່ວນຮ່ວມກັບໂຄງການເຊັ່ນຈະມາຊ່ວຍທາງດ້ານວິຊາການເປັນວິທະຍາກອນ, ຮັບຝຶກພະນັກງານ ( ທີມງານສົ່ງເສີມການອ່ານ ) ປະກອບວັດຖຸພາຫະນະ ຈັດພິມໜັງສືສໍາຫລັບເດັກ ໜັງສືຄົ້ນຄວ້າ ບໍລິຈາກ ງົບປະມານສ້າງຕູ້ໜັງສື ສ້າງຫ້ອງສະຫມຸດ ຫ້ອງອ່ານໜັງສື .

ນອກຈາກຫໍສະໝຸດຈັດທໍາກິດຈະກໍາເອງແລ້ວຍັງແນະນໍາແລະຮ່ວມມືທາງດ້ານວິຊາການນໍາໜ່ວຍງານລັດຖະບານ,ອົງການເອກະຊົນ(NGO ) ທີ່ເຮັດໂຄງການສົ່ງເສີມການອ່ານເຊິ່ງມີລັກສະນະເອກະພາບ ທາງດ້ານເນື້ອໃນແລະ ຈຸດປະສົງອັນດຽວກັນ.

ໂຄງການສົ່ງເສີມການອ່ານແຫ່ງຊາດ ເປັນໂຄງການແມ່ຫລັກເຊິ່ງປະກອບດ້ວຍ ໂຄງການຍ່ອຍຫລາຍໂຄງການທີ່ຊ່ວຍອໍານວຍຄວາມສະດວກໃຫ້ແກ່ທີມງານໄດ້ສໍາເລັດໜ້າທີ່ຕາມວັດຖຸປະສົງຂອງໂຄງການ.

ໃນໄລຍະ 10 ປີ ແຫ່ງການປະຕິບັດງານ, ໄດ້ມີການປ່ຽນແປງຫລາຍວິທີແລະ ໄດ້ຮັບເອົາການສະໜັບສະໜູນ ທາງດ້ານແນວຄິດ, ງົບປະມານຈາກບັນດາຜູ້ອຸປະຖໍາ ເຊັ່ນ : ປີ 1990, ໃນເບື້ອງຕົ້ນໂຄງການນີ້ໄດ້ຮັບທຶນສະໜັບສະໜູນ ຈາກອົງການແມ່ແລະເດັກ ( UNICEF ) ໂດຍມີເນື້ອໃນຂອງໂຄງການຄື :

1. ສ້າງຕູ້ໜັງສືເຄື່ອນທີ່ແຈກໃຫ້ ຣ.ຮ ປະຖົມແຫ່ງລະ 1 ໜ່ວຍ.
2. ນໍາໜັງສືແບບຮຽນໄປມອບໃຫ້ໂຮງຮຽນປະຖົມເພື່ອເຊົ່າແລະນໍາທຶນກັບໄປຊື້ໜັງສືໃຫ້ໂຮງຮຽນແຫ່ງໃໝ່ຕໍ່ ( ໃຫ້ຂະຫຍາຍຈາກ 1 ເປັນ 2 ເປັນ 3 )
3. ຕອບສະໜອງອຸປະກອນສຶກສາ
4. ປຸກສ້າງໂຮງຮຽນປະຖົມໂດຍທຶນສົມທົບປະຊາຊົນກັບອົງການແມ່ແລະ ເດັກ

ໂຄງການນີ້ດໍາເນີນ 2 ປີ ຫລັງຈາກນັ້ນທາງກົມສາມັນກໍ່ໄດ້ດໍາເນີນຕໍ່ໃນຮູບແບບໃໝ່ໂດຍຫັນທິດໄປຊ່ວຍໂຮງຮຽນທີ່ມີຄູບໍ່ມາດຖານ ( ມີການຝຶກອົບຮົມແລະ ແນະນໍາວິທີນໍາໃຊ້ຕູ້ໜັງສື

ໃນເວລາເປີດການອົບຮົມຄູດັ່ງກ່າວໂດຍ ຫໍສະໝຸດແຫ່ງຊາດ ໄດ້ສົ່ງພະນັກງານໄປຮ່ວມເປັນວິທະຍາກອນນຳໄລຍະໃດໜຶ່ງ.

ຫໍສະໝຸດແຫ່ງຊາດຍັງສືບຕໍ່ຮ່ວມມືກັບກົມສາມັນມາໂດຍຕະຫລອດແຕ່ໄດ້ລົງເລິກສະເພາະການສ້າງຕູ້ໜັງສື ແລະສ້າງຫ້ອງອ່ານເທົ່ານັ້ນ.

<u>ໃນປີ 1992-2000</u>

ເນື່ອງຈາກຄວາມຮຽກຮ້ອງຕ້ອງການອັນຮີບດ່ວນແລະປະລິມານຂອງໂຮງຮຽນປະຖົມສຶກສາເພີ່ມຂຶ້ນ ຈາກຕົວເລກທີ່ວາງເປົ້າໝາຍໄວ້ ເບື້ອງຕົ້ນ ຈຳນວນ 6.316 ໂຮງຮຽນ ປີ 1990, ຂຶ້ນເປັນ 8.140 ແຫ່ງ ໃນປີ 2000

ຈຳເປັນໄດ້ຮຽກຮ້ອງເປີດກວ້າງທຶນຈາກອົງການຈັດຕັ້ງສາກົນອົງການເອກະຊົນທີ່ບໍ່ຂຶ້ນກັບລັດຖະບານປະເທດຕ່າງໆ ໃນທົ່ວໂລກທີ່ມີສຳນັກງານ ໃນ ສປປ ລາວ.

- ອົງການທີ່ໃຫ້ການອຸປະຖຳຕໍ່ເນື່ອງແຕ່ລະປີ ໂດຍມີການເຊັນສັນຍາຮ່ວມໄລຍະຍາວແລະ ໄດ້ຮັບອະນຸຍາດ ຈາກລັດຖະບານລາວມີຄື.
- ອົງການບັນເທົາທຸກ ( JSRC ) ໃນເມືອກ່ອນ, ປະຈຸບັນມີຊື່ວ່າອົງການພັດທະນາເດັກລາວຍີ່ປຸ່ນ ( SVA )
- ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ ( ASPB ) ນອກຈາກນັ້ນກໍຍັງມີຫລາຍ 10 ອົງການທີ່ໄດ້ໃຫ້ການສະໜັບສະໜູນເປັນບາງໂອກາດ ເຊັ່ນ : ສະຫະປະຊາດເພື່ອການພັດທະນາ UNDP
- ອົງການ ເມັນໂນນາຍ M.C.C
- ອົງການ ຊິດເຊ ( CIDSE )
- ອົງການ ຊີດັບຢູແອັສ (CWS)
- ອົງການ ຊີເອເອ (CAA)
- ອົງການສູນມິນໄຊ ຍີ່ປຸ່ນ
- ອົງການ ປາແດກ ( PADET )
- ອົງການ ສະຖາບັນວິຈັຍ ສິນລະປະ ວັດທະນະທຳອີສານ, ມະຫາສາຣະຄາມ ( ທຶນລັດຖະບານໄທ )
- ອົງການ ໂຮງຮຽນໄຮ້ພົມແດນ (ESF)
- ສະຖານທູດ ອິດສະຕາລີ ( ລັດຖະບານອິດສະຕາລີ )
- ລັດຖະບານຍີ່ປຸ່ນ ( ຜ່ານສະຖານທູດທີ່ວຽງຈັນ )

- ລັດຖະບານເຢຍລະມັນ
- ອົງການ ການາດາຟັນ ( CANADAFUND)
- ອົງການ ຢາແປັນຟາວເດເຊິນ ( Japan Foundation )
- ອົງການ ໄທອິບີ ( Thai IBBY )
- ທືນພຣະຣາຊທານຂອງສົມເດັດພຣະເທບຣັດຕະນະຣາຊສຸດາ ສະຍາມຣາຊກຸມາຣີ
- ສະມາຄົມອະດີດ ນັກສຶກສາລາວ- ເຢັຍລະມັນ.
- ຫໍສະໝຸດແຫ່ງຊາດແລະ ພະນັກງານ.
- OCC ຍີ່ປຸ່ນ
- ພຣະຍີ່ປຸ່ນ /ຊາວພຸດ
- ອົງການ ຊີຟີແຂວງອີບາຣາກີ ( ກອງທືນເພື່ອການສຶກສາ )
- ສະມາຄົມ 1-2-3 ຍີ່ປຸ່ນ
- ອຸຍແນສໂກ ( UNESCO )
- ອົງການແມ່ຂອງ 2000 ( ຝຣັ່ງເສດ )
- ນອກຈາກນັ້ນຍັງມີອົງການອື່ນໆແລະ ບັນດາບຸກຄົນຕ່າງໆເປັນຈຳນວນຫລາຍໂດຍສະເພາະບັນດາເພື່ອນຮ່ວມຊາດທີ່ໄດ້ຕັ້ງຖິ່ນຖານຢູ່ຕ່າງປະເທດ,ລະນຶກເຖິງອະດີດທີ່ເຄີຍໄດ້ຮ່ຳຮຽນຢູ່ໃນໂຮງຮຽນປະຖົມຕ່າງໆ ຫລືບ້ານເກີດເມືອງນອນຂອງຕົນສຳຫລັບອົງການອື່ນໆທີ່ໄດ້ມີໂຄງການພັດທະນາທ້ອງຖິ່ນເຊິ່ງໂຄງການພວມດຳເນີນຢູ່ນັ້ນກໍຢາກມີການອຸປະຖຳໝູ່ບ້ານຫລືໂຮງຮຽນ.

ສະນັ້ນຮູບແບບຂອງການປະກອບສ່ວນໃນວຽກງານສົ່ງເສີມການອ່ານແກ່ໂຄງການ ຫໍສະໝຸດແຫ່ງຊາດຈຶ່ງຂຶ້ນກັບເປົ້າໝາຍບ່ອນທີ່ເຂົາເຈົ້າຢາກຈະໃຫ້.ເລີ່ມແຕ່ປີ1995ເປັນຕົ້ນມາການປະກອບສ່ວນທັນມາສ້າງຫ້ອງອ່ານໜັງສື,ສ້າງຫ້ອງສະໝຸດ(ເຄິ່ງປວງຊົນແລະໂຮງຮຽນໄດ້ເກີດຂຶ້ນຫລາຍແຫ່ງ ພາຍໃຕ້ການຊີ້ນຳຂອງໂຄງການສົ່ງເສີມການອ່ານ).

ສຳຫລັບການແຈກຢາຍຕູ້ໜັງສືເຄື່ອນທີ່ ໃຫ້ແກ່ໂຮງຮຽນ ປະຖົມສຶກສາ ໃນແຂວງທີ່ຖືກແບ່ງປັນ, ທຸກໆໂຮງຮຽນກໍຕ້ອງໄດ້ຮັບການເຂົ້າຮ່ວມສຳມະນາກ່ຽວກັບວິທີການນຳໃຊ້ຕູ້ໜັງສື, ການຄຸ້ມຄອງແລະການປົກປັກຮັກສາສ້ອມແປງຕູ້ແລະປື້ມທີ່ບັນຈຸໃນຕູ້ຢ່າງເປັນລະບົບ,ແນະນຳແລະສາທິດວິທີວິທະຍາໃນການເລົ່ານິທານແລະກິດຈະກຳກ່ຽວກັບການເລົ່ານິທານໃຫ້ແກ່ຜູ້ເຂົ້າອົບຮົມ.

ແຕ່ກໍຍັງມີບາງອົງການ,ໜ່ວຍງານຂອງລັດທີ່ເຮັດວຽກງານສົ່ງເສີມການອ່ານໂດຍນຳຕູ້ປຶ້ມໄປແຈກຕາມຈຸດເປົ້າໝາຍຂອງເຂົາເຈົ້າແຕ່ບໍ່ໄດ້ມີການຈັດຕັ້ງສຳມະນາດັ່ງທີ່ໂຄງການສົ່ງເສີມການອ່ານແຫ່ງຊາດ ວາງອອກເພາະມີຈຳນວນຕູ້ບໍ່ເທົ່າທຽມກັນຄືນັບແຕ່ 1 ໜ່ວຍ ເຖິງ 300-400 ໜ່ວຍ.

ໂຄງການທີ່ດຳເນີນເປັນປົກກະຕິຕາມແຜນການແຈກຢາຍປະຈຳປີຂອງຫໍສະຫມຸດແຫ່ງຊາດ ເຊິ່ງໄດ້ທຶນອຸປະຖຳໂດຍສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍແຫ່ງຍີ່ປຸ່ນ, ອົງການພັດທະນາເດັກລາວຍີ່ປຸ່ນນັ້ນໄດ້ມີການຈັດຕັ້ງການສຳມະນາຕິດຕາມປະເມີນຜົນໂດຍມີການລົງຄັ້ງທີ 2 ຫລັງຈາກໄດ້ແຈກຢາຍໄປແລ້ວເທື່ອໜຶ່ງຈຳນວນໜຶ່ງໄປເພີ່ມໃຫ້ໂຮງຮຽນທີ່ໄດ້ຮັບຕູ້ແລະໄດ້ຈັດຕັ້ງແນະນຳໃຫ້ແກ່ພະນັກງານຫລັກແຫລ່ງລະດັບຂັ້ນເມືອງ( ສຶກສານິເທດ ) ພະນັກງານວັດທະນະທຳເມືອງເພື່ອລົງຕິດຕາມຜົນໄດ້ຮັບຕໍ່ໄປ.ສ່ວນໂຄງການທີ່ໄດ້ຮັບການອຸປະຖຳຈາກອື່ນໆບໍ່ໄດ້ມີການຕິດຕາມ.ໄປຄຽງຄູ່ກັບການແຈກຢາຍຕູ້ໜັງສື,ຈະມີໂຄງການແຈກຢາຍປຶ້ມອ້າງອີງພ້ອມດ້ວຍການສຳມະນາໃຫ້ແກ່ໂຮງຮຽນປະຖົມສຶກສາ, ໂຮງຮຽນມັດທະຍົມຕົ້ນແລະປາຍ ເຊິ່ງອຸປະຖຳໂດຍສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ.

ໃນໄລຍະປີ 1995-2000 ຍັງໄດ້ມີໂຄງການເພີ່ມເຕີມກ່ຽວກັບການຝຶກຄູອະນຸບານສຶກສາເຊິ່ງເຫັນວ່າມີຄວາມຈຳເປັນຢ່າງຍິ່ງເພື່ອປູພື້ນຖານໃຫ້ແກ່ການສົ່ງເສີມການອ່ານໃນລະດັບຂັ້ນປະຖົມໃຫ້ມີຄຸນະພາບດີຂຶ້ນກ່ອນເກົ່າ,ຈຳເປັນຕ້ອງເລີ່ມຈາກອະນຸບານ,ອົງການພັດທະນາເດັກລາວຍີ່ປຸ່ນໄດ້ແນະນຳ ໃຫ້ຮ່ວມມືກັບອົງການຊີຟີ ກອງທຶນອາຊຽນເພື່ອການສຶກສາຂອງແຂວງອີບາຣາກິ.

ໃນໄລຍະດຽວກັນເພື່ອເປັນການປຸກລະດົມເດັກນ້ອຍທີ່ດ້ອຍໂອກາດເຂົ້າໂຮງຮຽນອະນຸບານແລະພໍ່ແມ່ຜູ້ປົກຄອງເດັກທີ່ຍັງຂາດຄວາມຊັກຈູງລູກເຕົ້າເຂົ້າສູ່ການອ່ານໜັງສື, ທາງອົງການພັດທະນາເດັກລາວຍີ່ປຸ່ນ ( SVA ) ຍັງໄດ້ແນະນຳແລະໃຫ້ ຫໍສະໝຸດແຫ່ງຊາດ ຮ່ວມມືກັບສູນນິທານລະຄອນຫຸ່ນ OCC ຂອງປະເທດຍີ່ປຸ່ນ, ຈັດຕັ້ງໂຄງການສະແດງນິທານລະຄອນຫຸ່ນໂດຍມີຊື່ໜ່ວຍເຄື່ອນໄຫວວຽກນີ້ວ່າ " ຄະນະນິທານລະຄອນຫຸ່ນວຽງຈັນ ຄາຣາວານ "

ພາຍຫລັງການແຈກຢາຍຕູ້ສະໝຸດເຄື່ອນທີ່ແລ້ວ ຄະນະລະຄອນຫຸ່ນວຽງຈັນ ຄາຣາວານຈະລົງຕິດຕາມສະແດງລະຄອນໃຫ້ນັກຮຽນປະຖົມແລະ ພໍ່ແມ່ປະຊາຊົນ ໃນໝູ່ບ້ານຕ່າງໆໃນຂອບເຂດທົ່ວປະເທດພ້ອມທັງແຈກຢາຍປຶ້ມນິທານປະກອບຮູບພາບກ່ຽວກັບບົດລະຄອນເລື່ອງທີ່ສະແດງ(ແຂວງທີ່ບໍ່ທັນໄດ້ໄປສະແດງມີ ຊຳເໜືອ-ຊຽງຂວາງ-ຫລວງນ້ຳທາ-ບໍ່ແກ້ວ ແລະເຂດພິເສດໄຊສົມບູນ).

ແຕ່ລະປີຄະນະນີ້ຈະສະແດງໃຫ້ຄົບ 58 ຄັ້ງ ການປຸກລະດົມ ນັກຮຽນແລະ ປວງຊົນໃຫ້ເຂົ້າມາສູ່ການອ່ານໜັງສືໂຄງການຍັງໄດ້ນໍາໜ່ວຍງານລົດສະໝຸດເຄື່ອນທີ່ໄປບໍລິການໃນຕົວເມືອງຂອງກໍາແພງນະຄອນວຽງຈັນແລະ 4 ຕົວເມືອງ ແຂວງວຽງຈັນ ໂດຍການອອກບໍລິການ 4 ວັນຕໍ່ອາທິດ.

IV ໝາກຜົນທີ່ໄດ້ຮັບ-ສັງເກດຕີລາຄາ-ຖອດຖອນບົດຮຽນຈາກການດໍາເນີນໂຄງການ

4.1 ໝາກຜົນທີ່ໄດ້ຮັບ :

ກ່ອນປີ 1990 ຫລືໄລຍະຕົ້ນຂອງການດໍາເນີນໂຄງການສົ່ງເສີມການອ່ານ, ສະພາບການອ່ານໜັງສື ໃນກຸ່ມນັກຮຽນປະຖົມແຕ່ ປ 1 ເຖິງ ປ 5 ອ່ອນຫລາຍເດັກນ້ອຍແຕ່ ປ 1 ເຖິງ ປ 3 ອ່ານໜັງສືບໍ່ຕິກ, ເກືອບໝົດທຸກຄົນຈະອ່ານຂື້ນໃຈເທົ່ານັ້ນ ມີຈໍານວນນ້ອຍເກືອບວ່າຮ້ອຍລະ 30 ຈະອ່ານໄດ້.

ເດັກນ້ອຍຈະບໍ່ຮູ້ຮອດປື້ມອ່ານເພີ່ມແລະບໍ່ເຄີຍໄດ້ອ່ານໜັງສືນອກຈາກປື້ມຕໍາລາຮຽນ ມີບາງໂຮງຮຽນຄູທີ່ສອນໜັງສືບໍ່ມີຮອດປື້ມຕໍາລາແບບຮຽນ ( ຕົວຢ່າງຂອງໂຮງຮຽນປະຖົມດອນກອຍ ) ໂຮງຮຽນປະຖົມສຶກສາເກືອບເຄິ່ງຂອງຈໍານວນໂຮງຮຽນທັງໝົດບໍ່ຮູ້ວ່າຫ້ອງສະໝຸດໝາຍເຖິງຫຍັງ ແລະນໍາໃຊ້ເພື່ອປະໂຫຍດຫຍັງ.ການອ່ານໜັງສືເພີ່ມເຕີມແລະການເລົ່ານິທານໃນໂຮງຮຽນເກືອບຈະບໍ່ມີເລີຍ.

ສະພາບແກ່ຍາວມາຮອດປີ 1993 ພາຍຫລັງໂຄງການດໍາເນີນມາໄດ້ 3 ປີ ຄວາມປ່ຽນແປງຢ່າງໄວວາສ້າງໃຫ້ໂຮງຮຽນທີ່ໄດ້ຮັບຕູ້ໜັງສືໄປບໍລິການ,ມີຄຸນນະພາບການອ່ານການຮຽນການສອນຂອງໂຮງຮຽນນັ້ນໆດີຂື້ນເກືອບເທົ່າຕົວ.

- ການນໍາໃຊ້ປື້ມແບບຮຽນຂອງບັນດາເດັກນັກຮຽນ ເຊິ່ງໃນເມື່ອກ່ອນສິ້ນເປືອງຫລາຍມີນັກຮຽນໃຊ້ປື້ມແບບຮຽນປີລະ 2-3 ຫົວ, ແຕ່ປີເລີ່ມຕົ້ນໂຄງການພຽງປີດຽວ ນັກຮຽນສາມາດຮັກສາປື້ມແບບຮຽນຂອງຕົນຫລືຂອງໂຮງຮຽນໄດ້ສະອາດແລະໃໝ່ເໝືອນເດີມ, ສາມາດນໍາໃຊ້ໄດ້ສໍາຫລັບລຸ້ນຕໍ່ໄປ ( ຕົວຢ່າງທີ່ເດັ່ນ :ໂຮງຮຽນບ້ານ ຫີນຂັນໝາກ )

-ເຮັດໃຫ້ປື້ມອ່ານສໍາຫລັບເດັກນ້ອຍລາວມີຈໍານວນເພີ້ມຂື້ນເດືອນ100%ແລະມີການພັດທະນາຄຸນນະພາບດີຂື້ນ, ພ້ອມທັງໄດ້ສ້າງນັກຂຽນ, ນັກແຕ້ມນິທານສໍາຫລັບເດັກຜູ້ໜຸ່ມນ້ອຍເຊິ່ງກ່ອນປີ 1990 ມີຈໍານວນບໍ່ເຖິງ 5 ຄົນ ປະຈຸບັນເກືອບ 50 ກວ່າຄົນ.

ປື້ມອ່ານສຳຫລັບເດັກກ່ອນປີ 1990 ມີບໍ່ເຖິງ 5 ຫົວນອກນັ້ນເປັນນິທານແປຈາກປື້ມຕ່າງປະເທດ ແຕ່ມາໃນປະຈຸບັນມີເກືອບ 150 ຫົວເລື່ອງ(ແຕ່ລະອົງການສະເໜີຜົນງານທີ່ເຂົາເຈົ້າຊ່ວຍເຫລືອໃນການພິມໄລຍະ 10 ປີຜ່ານມາ ).

–ໂຮງຮຽນທີ່ບໍ່ມີຫ້ອງສະໝຸດໃນເມື່ອກ່ອນ ໄດ້ຮັບຕູ້ໜັງສືຫລືຖົງປື້ມເຄື່ອນທີ່ປະຈຸບັນສາມາດຕອບສະໜອງໄດ້ 5.737 ໜ່ວຍ ໃນນັ້ນໄດ້ແຈກຕາມຊຸມຊົນແລະຊົນນະບົດປະມານ 400 ໜ່ວຍ ( 300 ໜ່ວຍ ແມ່ນຂອງກົມສຶກສານອກລະບົບ ພາຍໃຕ້ໂຄງການສຶກສາທາງໄກ ).

–ໂຮງຮຽນທີ່ມີເງື່ອນໄຂທາງດ້ານສະຖານທີ່ແລະ ມີຄວາມເອົາໃຈໃສ່ຕໍ່ວຽກງານສົ່ງເສີມການອ່ານໄດ້ດີ ກໍໄດ້ຂະຫຍາຍເປັນຫ້ອງອ່ານໜັງສືຖາວອນ, ປະຈຸບັນມີ 71 ແຫ່ງ.

- ການກໍ່ສ້າງພະນັກງານຮັບຜິດຊອບວຽກງານຫ້ອງສະໝຸດ ໃນໂຮງຮຽນໄດ້ມີການຂະຫຍາຍຕົວໃນເມື່ອກ່ອນໂຄງການບໍ່ມີ ປະຈຸບັນມີຈຳນວນ 3.500 ຄົນ ( ຄູ, ອາຈານ ) ໄດ້ຜ່ານການຝຶກອົບຮົມວິຊາບັນນາຮັກເບື້ອງຕົ້ນຢູ່ພາຍໃນແລະ ຕ່າງປະເທດ ຄູອະນຸບານເຮັດວຽກສົ່ງເສີມການອ່ານລະດັບອະນຸບານ ຈຳນວນ 350 ຄົນ ໄດ້ໄປຝຶກຕ່າງປະເທດ.

- ການສະໜັບສະໜູນທຶນໃຫ້ແກ່ໂຄງການ ໃນເບື້ອງຕົ້ນມີພຽງອົງການແມ່ແລະ ເດັກ, ອົງການພັດທະນາເດັກນ້ອຍລາວຍີ່ປຸ່ນ ແລະ ສະມາຄົມສົ່ງປື້ມຮູບໃຫ້ເດັກລາວຍີ່ປຸ່ນ ມາປະຈຸບັນເກືອບ 20 ອົງການແລະຫຸກຄົນຕ່າງໆໄດ້ເຂົ້າຮ່ວມ ( ໝາຍເຖິງຫຸ້ກຄົນຮ່ວມໃຈສ້າງຕູ້ໜັງສື, ພິມໜັງສືແລະຫ້ອງສະໝຸດໃຫ້ແກ່ໂຮງຮຽນແລະເດັກນ້ອຍລາວ ).

### 4.2 <u>ບັນຫາຕົ້ນຕໍ</u>

ຜ່ານການດຳເນີນໂຄງການສົ່ງເສີມການອ່ານມາໃນໄລຍະ 10 ປີ 1990-2000, ບັນຫາຕົ້ນຕໍທີ່ພົບແລະຍັງຄ້າງຄາບໍ່ທັນສາມາດແກ້ໄຂໄດ້.

### 4.3 <u>ສະພາບດິນຟ້າອາກາດ, ພູມສັນຖານຂອງປະເທດ</u>

ກາຍເປັນບັນຫາທີ່ເກາະກ່າຍເຖິງຫລາຍ ໆບັນຫາສ້າງຄວາມຫຍຸ້ງຍາກໃຫ້ແກ່ໂຄງການແລະຝ່າຍເປົ້າໝາຍທີ່ຮັບຜິດຊອບຈັດຕັ້ງປະຕິບັດຕົວຈິງ : ຕົວຢ່າງ : ໝູ່ບ້ານຢູ່ຫ່າງໄກກັນຫລາຍ, ບ່ອນຫ່າງໄກສອກຫລີກກໍບໍ່ໄດ້ຮັບຄວາມສະດວກແລະໄດ້ຮັບການຊົມໃຊ້.

-ເວລາທີ່ໂຄງການສະເໜີແບ່ງຕົວເລກລົງເຖິງແຂວງ, ການຈັດການແຈກຢາຍກໍມັກຈະຈັດເອົາໃຫ້ແຕ່ໂຮງຮຽນທີ່ໄປມາສະດວກ, ເພື່ອຫລີກເວັ້ນການຂົນສົ່ງ.

- ບ້ານຢູ່ໄກບໍ່ໄດ້ຮັບຕູ້, ບ້ານຢູ່ໃກ້ໄປມາສະດວກຊ້ຳພັດໄດ້ຮັບຄວາມສະດວກດີໂພດ, ບາງໂຮງຮຽນໄດ້ຮັບຊ້ຳກັນ 2-3 ຕູ້.

-ໂຮງຮຽນພັກຍາມລະດູຝົນ, ໂຮງຮຽນຫ່າງໄກຈາກບ້ານເວລານ້ຳຖ້ວມກໍ່ສາມາດເກັບມ້ຽນໄວ້ທັນເຮັດໃຫ້ຕູ້ຈົມຢູ່ໃນກະແສນ້ຳ. ( ແຕ່ລະປີມັກຈະໄດ້ຮັບລາຍງານນ້ຳຖ້ວມຕູ້ປຶ້ມ ).

- ບາງໂຮງຮຽນນ້ຳບໍ່ຖ້ວມແຕ່ປະໄວ້ດົນບໍ່ດູແລ, ໜູ, ປວກແລະຄວາມຊື້ນຂອງອາກາດທຳລາຍໄປສະພາບຕູ້ໃຊ້ການບໍ່ໄດ້ອີກ.

4.2.2 <u>ສະພາບທາງເສດຖະກິດກໍເປັນບັນຫາຫຍຸ້ງຍາກ :</u>

- ບາງໂຮງຮຽນກໍບໍ່ມີຄວາມປອດໄພ, ບາງໂຮງຮຽນມີແຕ່ຫລັງຄາ ຝາ ປະຕູບໍ່ມີ ເມື່ອໄດ້ຮັບຕູ້ໄປແລ້ວກໍຕ້ອງລຳບາກຂົນຍ້າຍເພື່ອມາບໍລິການທ້າວທັນແຕ່ຕົ້ນ ຫລັງຈາກນັ້ນກໍເຊົາບໍລິການ.

- ບາງບ່ອນກໍນຳໃຊ້ເຮືອນຂອງຄູເພື່ອເປັນບ່ອນບໍລິການຕູ້ປຶ້ມໃຫ້ນັກຮຽນທີ່ຕ້ອງການອ່ານ ຄູບໍ່ມີເວລາພຽງພໍຈະມານັ່ງຢູ່ບ້ານເພື່ອບໍລິການ ສະພາບປີ 1990-93.

-ໂຮງຮຽນບໍ່ສາມາດກຸ້ມຕົນເອງໄດ້ທາງດ້ານການຈັດຫາປຶ້ມໃໝ່ເຂົ້າມາເພີ່ມ,ລໍຖ້າແຕ່ຫໍສະໝຸດແຫ່ງຊາດແລະການຊ່ວຍເຫລືອຂອງໂຄງການ ມີຫລາຍໂຮງຮຽນບໍລິການໄດ້ 1 ປີ ຫລື 2 ປີປຶ້ມຂາດແລະເສັຍຫາຍໄປໃຊ້ການບໍ່ໄດ້ ຜູ້ທີ່ຈະມາຊົມໃຊ້ຕໍ່ກໍບໍ່ຢາກຈັບຢາກອ່ານອີກ, ລໍຖ້າປຶ້ມໃໝ່, ເຫລືອແຕ່ຕູ້ເປົ່າ.

4.2.3 <u>ສະພາບຄວາມເຂົ້າໃຈຕໍ່ການບໍລິການຫ້ອງສະໝຸດກັບການໃຫ້ບໍລິການທາງການສຶກສາ.</u>

- ຄວາມເຂົ້າໃຈຂອງຄູຕໍ່ບັນຫາຕູ້ໜັງສື, ຕໍ່ປຶ້ມກໍມີຫລາຍໂຮງຮຽນໄດ້ສະເໜີມາວ່າປຶ້ມທີ່ໃຫ້ໄປແລ້ວນັ້ນທຸກຄົນອ່ານໝົດແລ້ວ, ຢຸດບໍລິການ. ຄວາມຈິງແລ້ວຄູຄວນເຂົ້າໃຈຕໍ່ການອ່ານປຶ້ມທີ່ມີໃນຕູ້ນັ້ນອາດໃຊ້ໄດ້ຕະຫລອດແລະເປັນປຶ້ມໃໝ່ສຳຫລັບຮຸ່ນທີ່ເຂົ້າມາຮຽນໃໝ່ຕໍ່ໄປ,ປຶ້ມໃນຕູ້ນັ້ນອາດຈະເກົ່າສຳຫລັບນັກຮຽນເກົ່າແຕ່ໃໝ່ສຳຫລັບນັກຮຽນເຂົ້າໃໝ່. ຄວນບໍລິການຢ່າງຕໍ່ເນື່ອງແລະປົກປັກຮັກສາໄວ້ໃຫ້ມີສະພາບທີ່ດີ ຖ້າຄູເອົາໃຈໃສ່, ອະທິບາຍທຸກ ໆປີມີວິທີການນຳໃຊ້ແລະການປົກປັກຮັກສາໃຫ້ນັກຮຽນໄດ້ຮູ້ຕູ້ໜຶ່ງ ໆອາຍຸການໃຊ້10 ປີຢ່າງນ້ອຍ.

- ກົງກັນຂ້າມມີບາງໂຮງຮຽນຮັກສາປຶ້ມໄວ້ດີໂພດຢ້ານປຶ້ມຂາດ ຢ້ານໂຄງການຕຳນິ, ເມື່ອໄດ້ຕູ້ແລ້ວປິດໃສ່ກະແຈເອົາໄວ້ຫ້ອງອຳນວຍການ, ນັກຮຽນບໍ່ໄດ້ຊົມໃຊ້ຈົນໂຄງການລົງໄປພົບ, ບາງບ່ອນກໍຍັງຄົງສະພາບດີບໍ່ໄດ້ມີການນຳໃຊ້. ແຕ່ບາງບ່ອນໂຊກບໍ່ອຳນວຍໄຂຕູ້ອອກມາປວກກິນຈົນໝົດ.

- ມີບາງໂຮງຮຽນຢາກໄດ້ຕູ້ ແຕ່ບໍ່ມີເງື່ອນໄຂເອົາເມືອໄດ້ ເພາະການເດີນທາງຫຍຸ້ງຍາກຕ້ອງຍ່າງນ້ອຍ 10 ວັນ.

4.2.4 ຖອດຖອນບົດຮຽນທີ່ໄດ້ຮັບ :

- ບ່ອນໃດມີການພົວພັນດີກັບໂຄງການ, ແລະຜູ້ຮັບຜິດຊອບຕູ້ສະໝຸດ ຖົງປື້ມຫລືຫ້ອງອ່ານ ມັກກ່ຽວກັບວຽກການສົ່ງເສີມການອ່ານ ຊຸກຍູ້ຊັກຈູງເດັກເຂົ້າສູ່ການອ່ານໄດ້ດີ, ສະພາບຂອງຕູ້ຖົງ ແລະຫ້ອງສະໝຸດຈະຄົງທົນຖາວອນບໍ່ມີບັນຫາດ້ານໜັງສືເສັຍຫາຍ, ຄູຜູ້ຮັບຜິດຊອບນັ້ນຈະຕ້ອງມີ ຈິດໃຈເສັຍສະລະສູງພໍສົມຄວນ.

- ຄະນະນຳ (ຂັ້ນອຳນວຍການ ) ເອົາໃຈໃສ່ຕໍ່ບັນຫາວຽກງານນີ້ຢ່າງເຂັ້ມງວດນີ້, ປະກົດວ່າຄູ ແລະນັກຮຽນໂຮງຮຽນນັ້ນໄດ້ນຳໃຊ້ຕູ້ປື້ມເປັນປະໂຫຍດແລະມີຄວາມຂະຫຍາຍຕົວໄດ້ດີ, ການຮຽນ ການສອນໄດ້ຮັບຜົນດີ.

- ກະຊວງສຶກສາມີຄວນມີຄຳສັ່ງໃຫ້ເປັນເອກະພາບແນະນຳພະແນກສຶກສາແຕ່ລະແຂວງໃຫ້ຕິດ ຕາມ, ນຳບັນຫາການນຳໃຊ້ຕູ້ໜັງສື,ຫ້ອງສະໝຸດໃຫ້ຕິດພັນກັບຫລັກສູດການສຶກສາເປັນການບັງຄັບ ໃຫ້ແລະນັກຮຽນນຳໃຊ້ຫ້ອງສະໝຸດຫລືຕູ້ໜັງສືເພື່ອເສີມສ້າງຄວາມຮູ້ຮອບຕົວແລະເພື່ອຊ່ວຍການ ຮຽນການສອນໂດຍອາໄສບັນດາຄູສຶກສານິເທດລົງກວດກາແລະແນະນຳເປັນປະຈຳ.

- ຄວນອະນຸຍາດໃຫ້ແຕ່ລະໂຮງຮຽນໄດ້ນຳໃຊ້ເງິນງົບປະມານສ່ວນໜຶ່ງສະເພາະໄວ້ຊື້ໜັງສືໃໝ່ ເຂົ້າສູ່ຕູ້ຫລືຫ້ອງສະໝຸດເປັນປະຈຳປີລະເທື່ອ/ 2 ເທື່ອ -

- ຫໍສະໝຸດແຫ່ງຊາດກໍຄືໂຄງການສົ່ງເສີມການອ່ານຄວນຈະສືບຕໍ່ຕິດຕາມແລະຊ່ວຍເຫລືອ ໂຮງຮຽນໃດທີ່ມີຄວາມຈຳເປັນໂດຍສະເພາະໂຮງຮຽນທີ່ຢູ່ຫ່າງໄກສອກຫລີກໂຮງຮຽນທີ່ຍັງດ້ອຍ ພັດທະນາ ຄວນສົ່ງເສີມເປັນພິເສດ.

- ຫໍສະໝຸດແຫ່ງຊາດຄວນຈະຕ້ອງປຶກສາກັບອົງກອນທີ່ໃຫ້ການສະໜັບສະໜູນທຶນທີ່ຢາກຊ່ວຍ ບໍລິຈາກປື້ມຫລືຕູ້ໜັງສື, ຈັດບັນຊີບ່ອນບໍລິຈາກຄວນຈະສະເໜີໃຫ້ອົງການຊ່ວຍເປັນລະບົບ, ຫັດກຸ່ມ ບໍ່ກະແຈກກະຈາຍ.

-ໃນປະຈຸບັນກໍຄືຕໍ່ໜ້າ ແຕ່ນີ້ຫາປີ 2010,ຫໍສະໝຸດແຫ່ງຊາດກັບກົມສາມັນແລະພະແນກສຶກສາ, ພະແນກວັດທະນະທຳແຂວງ ຄວນເຂົ້າໃຈເລິກເຊິ່ງຕໍ່ວຽກງານສົ່ງເສີມການອ່ານນີ້ແລະຕ່າງຝ່າຍຕ່າງ ອຳນວຍຄວາມສະດວກໃຫ້ແກ່ກັນ, ເພື່ອເຮັດແນວໃດໃຫ້ເດັກນ້ອຍລາວ ປະຊາຊົນລາວໄດ້ກາຍເປັນ ນັກອ່ານສ້າງສັງຄົມນັກອ່ານ, ການອ່ານໃຫ້ປະກົດຜົນເປັນຈິງດັ່ງວັດຖຸປະສົງຫລັກຂອງໂຄງການວາງ ຄາດໝາຍໄວ້.

- ສຳຫລັບການສຶກສາປວງຊົນ, ຫໍສະໝຸດແຫ່ງຊາດກັບກົມສາມັນສຶກສານອກລະບົບທີ່ຂຶ້ນກັບ ກະຊວງສຶກສາຈະຕ້ອງຮ່ວມມືກັນຢ່າງສະນິດແໜ້ນແລະມີແຜນການຂະຫຍາຍຕາໜ່າງ

ຫ້ອງສະໝຸດປວງຊົນໃນຊຸມຊົນ ທ້ອງຖິ່ນ, ຫ່າງໄກສອກຫລີກ, ຈັດຕັ້ງການປຸກລະດົມປວງຊົນເຂົ້າໃນວຽກງານການອ່ານການນຳໃຊ້ຂ່າວສານໃນຊີວິດປະຈຳວັນໃຫ້ນັບມື້ນັບຫລາຍ.

- ໜ້າທີ່ຕົ້ນຕໍຂອງຫໍສະໝຸດແຫ່ງຊາດແລະກົມສາມັນສຶກສານອກລະບົບຄ້າຍຄືກັນຄືຄວາມມຸ່ງໝາຍເພື່ອແກ້ບັນຫາການບໍ່ຮູ້ໜັງສືຂອງປວງຊົນ, ຈັດການສຶກສາແກ່ບຸກຄົນທີ່ດ້ອຍໂອກາດທາງການສຶກສາຈັດການສຶກສາທາງອາຊີວະສຶກສາໃນໄລຍະສັ້ນສົ່ງເສີມແລະບົ່ມນິໄສການອ່ານໃນບຸກຄົນ, ຈັດຕັ້ງພິພິດທະພັນທາງການສຶກສາ ຈັດແລະບໍລິຫານສື່ການສຶກສາເພື່ອປວງຊົນ ( ສູນບໍລິການຂໍ້ມູນຂ່າວສານເພື່ອການສຶກສາຜູ້ໃຫຍ່ ) ຂຶ້ນໃນຊຸມຊົນໃນໝູ່ບ້ານແບບຢ່າງວັດທະນະທຳ ເພື່ອສົ່ງເສີມການສຶກສາແລະຄວາມສາມາດຂອງປະຊາຊົນ ເພື່ອຊ່ວຍໃຫ້ມີມາດຕະຖານຊີວິດຄວາມເປັນຢູ່ທີ່ດີຂຶ້ນ.

ການໃຫ້ບໍລິການທາງການສຶກສາໃນຮູບແບບຕ່າງໆເຫລົ່ານີ້ທຳໃຫ້ເກີດການປະສານສົມທົບເຊື່ອມໂຍງການສຶກສາໃນລະບົບໂຮງຮຽນແລະນອກລະບົບໂຮງຮຽນເຂົ້າດ້ວຍກັນ ປະຊາຊົນສາມາດມີໂອກາດຮັບຄວາມຮູ້ແລະປະສົບການບໍ່ທາງໃດທາງໜຶ່ງຫລືສອງທາງໃນເວລາດຽວກັນກໍ່ໃຫ້ເກີດຄວາມພັດທະນາຕົນເອງແລະສັງຄົມ.

V. <u>ນະໂຍບາຍຕໍ່ໜ້າຂອງວຽກງານສົ່ງເສີມການອ່ານແຫ່ງຊາດ :</u>

ໂດຍຍຶດໝັ້ນນະໂຍບາຍຫລັກທີ່ໄດ້ວາງອອກໃນເບື້ອງຕົ້ນຂອງການລິເລີ່ມໂຄງການກໍຄືການຕອບສະໜອງໂອກາດທາງດ້ານການອ່ານແລະການບໍລິການຂໍ້ມູນຂ່າວສານໃຫ້ແກ່ເດັກນ້ອຍລາວແລະປວງຊົນໃນທົ່ວປະເທດເພື່ອຟື້ນຟູຄືນມູນເຊື້ອທີ່ເຄີຍຮຸ່ງເຮືອງມາແຕ່ອະດີດເຖິງບັນພະບຸລຸດລາວປະໄວ້ເຊິ່ງກ່ຽວພັນກັບ : ການຂຽນ, ການອ່ານ, ການເລົ່າແລະການຟັງ, ສາມາດຖອດເປັນແນວທາງແລະບົດຮຽນອັນປະເສີດໃຫ້ປວງຊົນລາວໃນປະຈຸບັນກ້າວເປັນນັກອ່ານໃນທົ່ວສັງຄົມ.

ຫໍສະໝຸດແຫ່ງຊາດມີແຜນການພັດທະນາຫ້ອງສະໝຸດໂຮງຮຽນແລະຫ້ອງສະໝຸດປວງຊົນໃຫ້ທົ່ວເຖິງໃນຂອບເຂດທົ່ວປະເທດ, ແຕ່ນີ້ເຖິງປີ 2010 ໄປ

ຄຽງຄູ່ກັບການພັດທະນາດັ່ງກ່າວສິ່ງທີ່ຈຳເປັນຕົ້ນຕໍກໍຄືການຊຸກຍູ້ການພິມປື້ມທີ່ມີລັກສະນະວິທະນາສາດ ວິທະຍາການ ອອກໃຫ້ພຽງພໍເພື່ອຕອບສະໜອງໃຫ້ແກ່ຫ້ອງສະໝຸດທຸກປະເພດທີ່ມີຢູ່ແລ້ວແລະຈະສ້າງຂຶ້ນໃໝ່.

- ເອົາໃຈໃສ່ການຝຶກອົບຮົມວິຊາບັນນາຮັກສາດເບື້ອງຕົ້ນໃຫ້ແກ່ບຸກຄະລາກອນທີ່ຮັບຜິດຊອບຫ້ອງສະໝຸດໂຮງຮຽນ, ຫ້ອງສະໝຸດປວງຊົນໃຫ້ສາມາດດຳເນີນງານຫ້ອງສະໝຸດແລະຄຸ້ມຄອງດ້ວຍຕົນເອງ.

ສະໜັບສະໜູນດ້ານວິຊາການແລະຮ່ວມມືນຳທຸກໜ່ວຍງານລັດຖະບານແລະເອກະຊົນເພື່ອການຝຶກອົບຮົມ ຄູ, ອາຈານ, ພະນັກງານຮັບຜິດຊອບຫ້ອງສະໝຸດແລະເປີດໂອກາດໃຫ້ໜ່ວຍງານຕ່າງ ໆເຫລົ່ານັ້ນໄດ້ຊ່ວຍພັດທະນາຫ້ອງສະໝຸດໃນ ສ.ປ.ປ.ລາວ.

VI. ພາກສະເໜີຫລືຄຳຮຽກຮ້ອງ

ຄວາມຕ້ອງການຕູ້ໜັງສືຫ້ອງສະໝຸດໂຮງຮຽນແລະຫ້ອງສະໝຸດປວງຊົນ :

ປະຈຸບັນການຕອບສະໜອງຕູ້ໜັງສືຖົງປຶ້ມຫລືຫ້ອງສະໝຸດໂຮງຮຽນແລະຫ້ອງສະໝຸດປວງຊົນ ໃຫ້ແກ່ໂຮງຮຽນປະຖົມ ມັດທະຍົມແລະໝູ່ບ້ານ ຍັງໜັກໜ່ວງຫລາຍ ຍັງຕ້ອງການການສະໜັບສະໜູນຈາກບັນດາຜູ້ອຸປະຖຳຫລາຍກວ່າເກົ່າ ສຳຫລັບຕູ້ຍັງຕ້ອງການອີກ 5000 ໜ່ວຍສ່ວນຫ້ອງສະໝຸດນັ້ນກໍເຊັ່ນດຽວກັນແລ້ວແຕ່ສັດທາຂອງຜູ້ອຸປະຖຳຈະຊ່ວຍສ້າງໃຫ້.

ຄວາມຮ່ວມມືລະຫວ່າງພາກລັດຖະບານກັບບັນດາຜູ້ອຸປະຖຳ :

ຂໍຮຽກຮ້ອງມາຍັງບັນດາທ່ານຜູ້ອຸປະຖຳທາງພາຍແລະພາຍນອກກັບບັນດາທ່ານຜູ້ປະຕິບັດຈົ່ງຮ່ວມມືກັນຢ່າງຕັ້ງໜ້າເຮັດໃຫ້ທົ່ວສັງຄົມມີການພັດທະນາທີ່ເຮັດໃຫ້ຄຸນນະພາບຊີວິດຂອງປວງຊົນໄດ້ມາດຕະຖານ.

# ສັງລວມສະຖິຕິການແຈກຢາຍຕູ້ໜັງສື-ຖົງປື້ມ
# ແລະຈຳນວນຫ້ອງສະໝຸດໂຮງຮຽນ
# 1990-2000

## ສະຖິຕິໂຮງຮຽນ

| ເນື້ອໃນ | 1990 | 1995 | 2000 |
|---|---|---|---|
| ຣ.ຮ ປະຖົມສຶກສາ | 6316 | 7591 | 9204 |
| ຣ.ຮ ມັດທະຍົມຕົ້ນ | 682 | 705 | 760 |
| ຣ.ຮ ມັດທະຍົມປາຍ | 119 | 129 | 197 |
| ລວມ | 7117 | 8425 | ~~10697~~ 10161 |

## ສະຖິຕິ-ຕູ້ໜັງສື-ຖົງໜັງສື

| ເນື້ອໃນ | 1990 | 1995 | 2000 | ລວມ |
|---|---|---|---|---|
| ຈຳນວນຕູ້ປື້ມ | 250 | 2430 | 2037 | 4717 |
| ຈຳນວນຖົງປື້ມ | | 130 | 590 | 620 |
| ຕູ້ສຳຫລັບປວງຊົນ | | | 400 | 400 |
| ຫ້ອງສະໝຸດໂຮງຮຽນ | 4 | 7 | 60 | 71 |
| ລວມສະເພາະຕູ້ແລະຖົງ | | | | 5737 |

## ສະຖິຕິໂຮງຮຽນ-ຕູ້-ຖົງປື້ມ-ຫ້ອງສະໝຸດ ປີ 2000

| ເນື້ອໃນ | ປີ 2000 |
|---|---|
| ຈຳນວນໂຮງຮຽນປະຖົມ-ມັດທະຍົມຕົ້ນປາຍ | ~~10698~~ 10.161 |
| ຈຳນວນຕູ້ປື້ມ-ຖົງປື້ມ | 5737 |
| ຫ້ອງສະໝຸດໂຮງຮຽນ | 71 |

# ສັງລວມສະຖິຕິ ການແຈກຢາຍ ຕູ້ຫນັງສື-ຖົງປື້ມ ແລະ ຈຳນວນຫ້ອງສະໝຸດ ໂຮງຮຽນ 1990 - 2000




- ຈຳນວນ ໂຮງຮຽນ
- ຈຳນວນຕູ້ຫນັງສື ແລະ ຖົງ
- ຖົງປື້ມ
- ຫ້ອງສະໝຸດ ໂຮງຮຽນ

## ສະຖິຕິໂຮງຮຽນ ຕູ້ປື້ມ-ຖົງປື້ມ ແລະ ຫ້ອງສະໝຸດ ປີ 2000




1 ໂຮງຮຽນ ປ/ຖ - ມ/ຍ

2 ຕູ້ປື້ມ

3 ຫ້ອງສະໝຸດ ຮຮ

# ບົດລາຍງານ

(ສະເໜີໃນກອງປະຊຸມ ປະເມີນຜົນ)

ໂຄງການສົ່ງເສີມການອ່ານແຫ່ງຊາດ(1990-2000)

ອຸປະຖໍາໂດຍ: ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງປະເທດຍີ່ປຸ່ນ (ASPB)

Unicef, SVA.

(ຕູ້ປ.ນ1518, ວຽງຈັນ ສປປລາວ, ໂທລະສັບ/ແຟກສ໌): 85621213449,

(E-mail:aspb@laotel.com)

ສະເໜີ ໂດຍ *ດວງເດືອນ ບຸນຍາວົງ* , ທີ່ປຶກສາ ອາວຸໂສ ດ້ານວິຊາການ ຂອງສະມາຄົມ.

## *ຄວາມເປັນມາ ແລະການສະໜັບສະໜຸນ ຂອງ ສະມາຄົມ*

### *I . ເປັນຫຍັງ ຈຶ່ງຊື່ວ່າ ສະມາຄົມ ສົ່ງປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ ?*

ສະມາຄົມນີ້ເປັນອົງກອນເອກະຊົນທີ່ຈັດຕັ້ງຂຶ້ນຢູ່ໃນປະເທດຍີ່ປຸ່ນໂດຍກຸ່ມບຸກຄົນຈໍານວນນຶ່ງ ຊຶ່ງລ້ວນແຕ່ເປັນຜູ້ຮູ້ຈັກປະເທດລາວ ແລະຄວາມຕ້ອງການຂອງເດັກນ້ອຍລາວໃນເລື່ອງອຸປະກອນການຮຽນເຄື່ອງຫລິ້ນກິລາ ແລະດົນຕີ. ສະມາຄົມນີ້ຕ່າງກັບອົງກອນເອກະຊົນອື່ນໆໃນໂລກເພາະມັນເກີດຂຶ້ນຕາມອຸດົມການຂອງຄົນລາວຜູ້ນຶ່ງທີ່ໄປສຶກສາຢູ່ປະເທດຍີ່ປຸ່ນເປັນເວລາເຫິງນານ, ໄດ້ເຫັນຄວາມເອົາໃຈໃສ່ການລົງທຶນໃສ່ການສຶກສາຮໍ່າຮຽນຂອງເດັກນ້ອຍໃນປະເທດຂອງເຂົາເຈົ້າ. ດັ່ງນັ້ນເມື່ອໄດ້ມາເຫັນສະພາບຂາດເຂີນອຸປະກອນການສຶກສາປຶ້ມອ່ານພາສາລາວ, ເວົ້າລວມອຸປະກອນພື້ນຖານອັນຈໍາເປັນແກ່ການສຶກສາແລະເຄື່ອງຫລິ້ນ ທີ່ສົ່ງເສີມໃຫ້ເດັກນ້ອຍຮໍ່າຮຽນຢ່າງມີປະສິດຜົນ,ຈຶ່ງຄຶດຫາວິທີການສະໜັບສະໜຸນກິດຈະກໍາ ທີ່ຈະຊ່ອຍ ພັດທະນາມັນສະໝອງສະຕິປັນຍາຂອງເດັກນ້ອຍ ລາວ.

ເມື່ອປຶກສາຫາລືກັນແລ້ວກໍຕົກລົງກັບໝູ່ຄູ່ຮ່ວມອຸດົມການຈັດຕັ້ງກັນຂຶ້ນເປັນສະມາຄົມນ້ອຍໆອັນນຶ່ງຂຶ້ນໃນປີ1982ທີ່ນະຄອນໂຕກຽວປະເທດຍີ່ປຸ່ນເວລານັ້ນຍັງບໍ່ທັນໄດ້ໃສ່ຊື່ແນ່ນອນອັນໃດມີແຕ່ຈຸດປະສົງຕົ້ນຕໍຄືອົນຂວາຍ ຫາອຸປະກອນເພື່ອການສຶກສາມາໃຫ້ເດັກນ້ອຍລາວ ຕໍ່ມາເພື່ອນໍາສະເໜີຂໍອະນຸຍາດຢ່າງເປັນທາງການຈຶ່ງໄດ້ຕັ້ງ ຊື່ນີ້ຂຶ້ນ ຕາມຈຸດປະສົງດັ້ງເດີມຂອງຄະນະກໍ່ຕັ້ງ, ຄືໃຫ້ຊື່ວ່າ: ສະມາຄົມສົ່ງປຶ້ມຮູບ ໃຫ້ເດັກນ້ອຍ ລາວແຫ່ງຍີ່ປຸ່ນ.

ໃນຂັ້ນເລີ່ມຕົ້ນລະຍະ 1982 - 90: ສະມາຄົມຍັງບໍ່ໄດ້ມາເຄື່ອນໄຫວໂດຍກົງຢູ່ໃນປະເທດລາວພຽງແຕ່ເຕົ້າໂຮມເອົາເຄື່ອງບໍລິຈາກທີ່ສະມາຊິກຢູ່ຍີ່ປຸ່ນຊອກຫາມາໄດ້ແລ້ວຈັດສົ່ງມາໃຫ້ເດັກນ້ອຍລາວໂດຍຜ່ານຄະນະ ກໍາມາທິການ ເພື່ອປີເດັກນ້ອຍສາກົນເຊິ່ງຂຶ້ນກັບກະຊວງສຶກສາທິການ ແລະມີນີ້ລາງທ່ານ *ພູມີ ວົງວິຈິດ* ອະດີດລັດຖະມຸນຕີກະຊວງສຶກສາ ເປັນປະທານຈົນຮອດເວລາເພິ່ນຍ້າຍໄປເປັນປະທານສູນກາງແນວລາວສ້າງຊາດ ໃນທ້າຍປີ1989 ທາງສະມາຄົມກໍໄດ້ຕິດຕາມສົ່ງເຄື່ອງຂອງໃຫ້ຄະນະກໍາມະການດັ່ງກ່າວ ຮັບຜິດຊອບແຈກຢາຍ ໄປຕາມໂຮງຮຽນອະນຸບານແລະປະຖົມ.

ມາເຖິງຕົ້ນປີ 90 ປະທານສະມາຄົມໄດ້ເປິກສາຫາລື ກັບຄະນະບຸກຄົນທີ່ເຮັດວຽກຢູ່ໃນວົງການສຶກສາວັດທະນະທໍາ ແລ້ວໄດ້ຫັນປ່ຽນຈາກວິທີການສົ່ງເຄື່ອງມາຊ່ອຍເປັນບາງໂອກາດ ດັ່ງເຄີຍເຮັດຜ່ານມາ, ມາເປັນການຂຶ້ນໂຄງການຮ່ວມມືກັບອົງກອນແຫ່ງລັດຢູ່ລາວທີ່ເຮັດວຽກເພື່ອການພັດທະນາເດັກນ້ອຍໂດຍກົງທັງນີ້ໄດ້ ເນັ້ນໃສ່ການໃຊ້ສື່ພາສາລາວເຊັ່ນການສະໜອງປຶ້ມອ່ານ ແລະອຸປະກອນຮັບໃຊ້ການສຶກສາພັດທະນາອື່ນໆ.ດັ່ງນັ້ນມາເຖິງລະຫວ່າງ ປີ1990-91 ສະມາຄົມຈຶ່ງໄດ້ຮັບອະນຸຍາດຈາກກະຊວງການຕ່າງປະເທດ ຕັ້ງຫ້ອງການ ຢູ່ ວຽງຈັນ ເພື່ອປະຕິບັດບາງໂຄງການຮ່ວມກັບຝ່າຍລາວ, ແຈ້ງການ ເລກທີ 1805/ທສລ

ປະທັບກາສຳນັກງານນາຍົກ ນັບແຕ່ນັ້ນມາສະມາຄົມກໍໄດ້ຕັ້ງຜູ້ປະສານງານແລະມີຫ້ອງການ ເພື່ອຕິດຕໍ່ກັບເພື່ອນຮ່ວມງານຝ່າຍລາວ. ເພື່ອນຮ່ວມງານໃນເວລານັ້ນມີ: ກົມສາມັນສຶກສາ ຫໍສະຫມຸດແຫ່ງຊາດ ກົມວັນນະຄະດີ ວາລະສານ ວັນນະສິນ ວາລະສານຊາວຫນຸ່ມ ວາລະສານເຍົາວະຊົນ... ວຽກງານຕົ້ນຕໍ ແມ່ນການອຸປະຖຳຄ່າຂຽນເລື່ອງເພື່ອເດັກນ້ອຍ ທີ່ລົງ ພິມໃນຫນ້າວາລະສານເຫລົ່ານັ້ນທັງນີ້ເພື່ອເປັນກຳລັງໃຈແລະຊຸກຍູ້ນັກຂຽນນັກປະພັນໃຫ້ຂຽນເລື່ອງເພື່ອເຍົາວະຊົນຫລາຍຂຶ້ນ, ວຽກງານນີ້ປະຕິບັດຢູ່ປີນຶ່ງຈາກນັ້ນ ທາງສະມາຄົມ ກໍເລືອກເຟັ້ນເອົາເລື່ອງຈຳນວນນຶ່ງມາຈັດພິມເປັນເຫລັ້ມແລ້ວແຈກຢາຍລ້າໃຫ້ໂຮງຮຽນຕ່າງໆ ໃນທົ່ວປະເທດ.ຕໍ່ມາຫໍສະຫມຸດແຫ່ງຊາດໄດ້ລິເລີ່ມໂຄງການສົ່ງເສີມການອ່ານຂຶ້ນໃນປີ1990 ໂດຍກຳນົດຈຸດປະສົງຫລັກວ່າຈະສະຫນອງຕູ້ປຶ້ມໃຫ້ທຸກໂຮງຮຽນປະຖົມ ທົ່ວປະເທດ ພາຍໃນກຳນົດ 10 ປີ (1990-2000), ດ້ວຍຄວາມເຊື່ອຫມັ້ນ ແລະສັດທາໃນໂຄງການດັ່ງກ່າວ ທາງສະມາຄົມໄດ້ຕັດສິນໃຈລະດົມທຶນມາສະຫນັບສະຫນຸນໂຄງການແຫ່ງຊາດອັນນີ້ຢ່າງຈິງຈັງແລະຈິງໃຈຄຽງຄູ່ກັບອົງການອື່ນໆມາເທົ່າເຖິງປະຈຸບັນ (ລາຍລະອຽດຂອງການຊ່ອຍເຫລືອ ມີຢູ່ໃນເອກະສານຫ້ອຍທ້າຍ).

## *II. ກິດຈະກຳ,ການສະຫນັບສະຫນູນ ຂອງສະມາຄົມ ຕໍ່ວຽກງານສົ່ງເສີມການອ່ານ*

ເບິ່ງຕາມປະຫວັດແລ້ວ ຈະເຫັນວ່າສະມາຄົມພວກເຮົາ ເຂົ້າມາມີບົດບາດປະກອບສ່ວນຊຸກຍູ້ຊ່ອຍເຫລືອເດັກນ້ອຍຢູ່ໃນ ສປປລາວນີ້ ກໍເປັນເວລາເກືອບຊາວປີ (20) ເຂົ້າແລ້ວ (ແຕ່ ປີ 1982 - 2000). ແຕ່ເປັນທີ່ຫນ້າ ສັງເກດວ່າຍັງມີຫລາຍພາກສ່ວນຫລາຍທ້ອງຖິ່ນຍັງບໍ່ທັນຮູ້ຈັກສະມາຄົມ ແມ່ນແຕ່ບາງອົງການທັງພາກລັດ ແລະເອກະຊົນກໍບໍ່ທັນຮູ້ແຈ້ງຫລືບໍ່ຮັບຮູ້ບົດບາດເຫລົ່ານັ້ນຂອງສະມາຄົມ ທັງນີ້ຄົງເປັນຍ້ອນການເຜີຍແຜ່ ແລະການໂຄສະນາປະຊາສຳພັນຂອງພວກເຮົາຍັງບໍ່ທັນທົ່ວເຖິງພຽງພໍເທື່ອ. ດັ່ງນັ້ນໃນໂອກາດກອງປະຊຸມຄັ້ງນີ້ພວກເຮົາຈຶ່ງຂໍສະເຫນີຜົນງານກິດຈະກຳທີ່ເດັ່ນໆຂອງສະມາຄົມໃນລະຍະທີ່ຜ່ານມາພໍໃຫ້ເຂົ້າໃຈແລະຮັບຮູ້ນຳກັນ .

ກິດຈະການ ວຽກງານ ຂອງສະມາຄົມ ນອນຢູ່ໃນ ຫ້າຄງການໃຫຍ່ ສາມາຈຳແນກລະອຽດໄດ້ ດັ່ງຕໍ່ໄປນີ້:

1. ສະຫນອງທຶນໃຫ້ຈັດພິມປຶ້ມ , ລະຄອນເຈ້ຽ(ກາມີຊິບາຍ) ທີ່ເປັນຜົນງານຂອງນັກຂຽນລາວ ນັກແຕ້ມລາວ ທີ່ເຂົ້າ ຮ່ວມເຝິກປະຕິບັດຕົວຈິງລະອຽດ.

2. ຈັດເຝິກອົບຮົມກິດຈະກຳສົ່ງເສີມການອ່ານ ໂດຍມີຜູ້ຊ່ຽວຊານອາສາສະຫມັກຍີ່ປຸ່ນ ມາຊ່ອຍຢ່າງເປັນຂະບວນ ເຊັ່ນເຝິກອົບຮົມໃຫ້ຜູ້ຮັບຜິດຊອບຕູ້ປຶ້ມ ວິທີຄຸ້ມຄອງບໍລິຫານຕູ້ ວິທີສ້າງ ຄວາມດຶງດູດ ເດັກນ້ອຍໃຫ້ມາຫ້ອງອ່ານ. ທຸກຄັ້ງທີ່ລົງໄປແຈກຢາຍປຶ້ມໃຫມ່ ຫລື ຕູ້ປຶ້ມ ຈະມີການເຝິກອົບຮົມພ້ອມ.

3.ຈັກເຝິກອົບຮົມວິທີສ້າງປຶ້ມ ແລະຜະລິດປຶ້ມສຳລັບເດັກ ວິທີສ້າງຮູບປະກອບເລື່ອງ ແບບຕ່າງໆເຊັ່ນ ປຶ້ມຮຽນຕົວຫນັງສືຊຸດ ໂຕຫຍັງແດ່ 3 ເຫລັ້ມ ແລະນັບຫມາກໄມ້.

4.ໃຫ້ທຶນສົມທົບ ສ້າງຕັ້ງ ສ້ອມແປງ ຫ້ອງອ່ານ ທັງປະກອບປຶ້ມອ່ານ ແລະອຸປະກອນໃຫ້ຄົບຊຸດແກ່ໂຮງ ຮຽນປະຖົມ ແລະມັດທະຍົມ ທັງຫມົດ 56 ແຫ່ງ

5.ໃຫ້ທຶນສະຫນັບສະຫນຸນກໍ່ຕັ້ງສູນວັດທະນທຳເດັກແຫ່ງທຳອິດຢູ່ວຽງຈັນທີ່ຂຶ້ນກັບກະຊວງຖະແຫລງຂ່າວແລະວັດທະນະທຳ , ຕໍ່ມາໃຫ້ທຶນສ້ອມແປງກໍ່ສ້າງ ແລະອຸປະຖຳ ບໍລິຫານ ວິຊາການ ກິດຈະກຳຕ່າງໆຢູ່ ສ.ວ.ດ. 3 ແຂວງ ຄື: ໄຊຍະບຸລີ ຫລວງພະບາງ ແລະ ບໍລິຄຳໄຊ ມາເຖິງປະຈຸບັນ ເຫລືອສາມແຫ່ງຄື ໄຊຍະບຸລີ ຫລວງພະບາງ ສ.ວ.ດ. ບໍລິຄຳໄຊ (ທຶນບໍລິຫານ 100%)

6. ໃຫ້ທຶນແກ່ພະນັກງານ ສ.ວ.ດ. ໄປທັດສະນະສຶກສາຕ່າງປະເທດ ແລະສະຫນັບສະຫນຸນງານບຸນມະໂຫລານ ການພົບປະ ສ.ວ.ດ. ຕ່າງໆ ແລະກອງປະຊຸມຕ່າງໆກ່ຽວກັບໂຄງການສົ່ງເສີມການອ່ານ ເຊັ່ນ:

ກອງປະຊຸມ ປະເມີນຜົນທົ່ວປະເທດການແຈກຢາຍຕູ້ ແລະ ເວົ້າລວມ ໂຄງການສົ່ງເສີມການອ່ານແຫ່ງຊາດ.

ນອກນີ້ ກໍຍັງມີກິດຈະກຳສົ່ງເສີມການອ່ານອື່ນໆອີກ ໂດຍຫ້ອງການສະມາຄົມເອງ ສະມາຊິກ ແລະ ອາສາສະຫມັກທັງລາວແລະຕ່າງປະເທດລົງເຄື່ອນໄຫວຮ່ວມກັບຫໍສະຫມຸດແຫ່ງຊາດແລະຫ້ອງຮັກອ່ານອື່ນໆ. ສະພາະຢູ່ທີ່ຫ້ອງຮັກອ່ານ ຂອງສະມາຄົມທີ່ຕັ້ງຢູ່ບ້ານສີຫອມ ເມືອງຈັນທະບຸລີ ກຳແພງນະຄອນວຽງຈັນເອງກໍໄດ້ເປີດບໍລິການໂດຍມີນັກສົ່ງເສີມກິດຈະກຳລາວມາປະຕິບັດຫນ້າທີ່ຢ່າງຟົດຟື້ນເຮັດໃຫ້ເດັກນ້ອຍຈຳນວນ ນຶ່ງທີ່ຢູ່ໃນຫ້ອງກຸ່ມອ້ອມແອ້ມ ໄດ້ມາໃຊ້ເວລາຫວ່າງຂອງພວກເຂົາຢ່າງມີປະໂຫຍດແລະມ່ວນຊື່ນ ອັນເປັນການກອບກູ້ພວກເຂົາອອກຈາກເສັ້ນທາງອະບາຍຍະມຸກເຊັ່ນ ການມົ່ວເມົານຳຢາເສບຕິດ ຫລິ້ນການພະນັນ ຮ່ວມກຸ່ມ ສ້າງຄວາມບໍ່ສະຫງົບ ...

## *III. ຫມາກຜົນທີ່ໄດ້ຮັບ -ກອດກອນບົດຮຽນ ຈາກການປະຕິບັດ ໂຄງການ*

***ຫມາກຜົນທີ່ໄດ້ຮັບ ຢ່າງເປັນຮູບປະທຳ ມີ***

1.ເຮັດໃຫ້ປຶ້ມອ່ານສຳລັບເດັກນ້ອຍລາວພັດທະນາທັງໃນດ້ານຄຸນນະພາບເນື້ອໃນຮູບປະກອບແລະ ມີປະລິມານຫລາຍຂຶ້ນ. ຕົວຢ່າງແຕ່ກ່ອນປຶ້ມເກືອບທັງຫມົດ ພິມຂາວດຳ ເຈ້ຍເຫລືອງປົກອ່ອນໆ ມາເຖິງປີ 96 ປຶ້ມທີ່ພິມອອກມີປົກສີ ພິມເຈ້ຍງາມ ມີຮູບແຕ້ມປະກອບຫລາຍ ຂຶ້ນແລະ ດີຂຶ້ນ, ຄຸນ ນະພາບຂອງບົດຫລາກຫລາຍ ...) ມີທັງນິທານພື້ນເມືອງຂອງລາວເລື່ອງຕ່າງປະເທດປຶ້ມບາງຫົວທີ່ທາງສະມາຄົມໃຫ້ການອຸປະຖຳ ຄ່າຂຽນແລະຄ່າພິມນັ້ນ ຖືວ່າມີຄວາມສຳຄັນຕໍ່ວົງການສຶກສາໂດຍກົງ ເຊັ່ນປຶ້ມ "ວັດຈະນານຸກົມປະກອບຮູບ ສຳລັບເດັກປະຖົມແລະມັດທະຍົມ "ຜ່ານມາໃນປະເທດລາວຂອງເຮົາ ຍັງບໍ່ມີປຶ້ມຊະນິດນີ້ອອກມາຮັບໃຊ້ການຮຽນຂອງເດັກນ້ອຍເລີຍ ທັງໆທີ່ປຶ້ມປະເພດນີ້ ໃນທົ່ວໂລກ ທຸກຊາດທຸກພາສາຖືວ່າແມ່ນອຸປະກອນຊ່ອຍການຮຽນອັນພື້ນຖານທີ່ສຸດສຳລັບເດັກນ້ອຍ, ຢູ່ໃນປະເທດອື່ນໆ ທັງພາກລັດຖະບານ ແລະເອກະຊົນຕ່າກໍຊ່ວງເສັງກັນຜະລິດປຶ້ມປະເພດນີ້ອອກມາ ໃຫ້ເດັກນ້ອຍໃນປະເທດເຂົາເຈົ້າຊົມໃຊ້, ແຕ່ເປັນທີ່ຫນ້າເສຽດາຍ ທີ່ນັບແຕ່ສະມາຄົມພວກເຮົາ ໄດ້ຈັດພິມອອກມາດ້ວຍຈຳນວນຈຳກັດ ແລະແຈກຢາຍໄປກໍຍັງບໍ່ທົ່ວເຖິງທຸກໂຮງຮຽນປະຖົມນັ້ນ, ໄດ້ 6-7 ປີ ມາແລ້ວຍັງບໍ່ປາກົດມີຜູ້ສະຫນັບສະຫນູນການຜະລິດຕື່ມເລີຍ ບໍ່ວ່າພາກລັດ ຫລືອົງກອນນາໆຊາດອື່ນໆ ຫລືເອກະຊົນນັບວ່າເປັນເລື່ອງຫນ້າເສຽດາຍທີ່ສຸດທີ່ອົງກອນກ່ຽວຂ້ອງຮັບຜິດຊອບໂດຍກົງກັບ ການສຶກສາ ແລະສັງຄົມທົ່ວໄປ ບໍ່ທັນກ້າຕັດສິນໃຈເສຽສະຫລະທຶນຮອນໃສ່ສິ່ງທີ່ເປັນປະໂຫຍດສຳລັບເດັກນ້ອຍແນວນີ້. ປຶ້ມອື່ນທີ່ທາງສະມາຄົມໄດ້ຈັດພິມມາແລ້ວບໍ່ຕ່ຳກວ່າ 50 ຫົວເລື່ອງບາງເລື່ອງ ພິມຊ້ຳຫລາຍເທື່ອຕາມຄວາມຮຽກຮ້ອງຂອງຜູ້ອ່ານ. ປຶ້ມບາງຫົວມີຄຸນນະພາບສູງເນື້ອໃນເລິກເຊິ່ງ ມີຄຸນຄ່າເປັນສາກົນຕໍ່ມວນມະນຸດ ເຊັ່ນປຶ້ມ ຕຳນານດາວປະຫລາດ ວັນນະກຳລ້ຳສະໄຫມ ຂອງຍີ່ປຸ່ນທີ່ໄດ້ຮັບການແປເຖິງ 30 ພາສາໃນທົ່ວໂລກ (ແຕ່ອັນນີ້ ກໍຄືກັນ ບໍ່ຮູ້ວ່າຄູອາຈານພວກເຮົາໄດ້ຊ່ອຍຊຸກຍູ້ ໃຫ້ນັກຮຽນຮູ້ວິທີນຳໃຊ້ປຶ້ມບໍ່). ອີກຫົວນຶ່ງ ທີ່ຈັດພິມເມື່ອ 1999 ນີ້ ແມ່ນເລື່ອງ " *ໂຕະໂຕຈັງ ນາງນ້ອຍ ຂ້າງປ່ອງຢ້ຽມ* " ເຊິ່ງກໍແມ່ນວັນນະກຳຍອດຢ້ຽມ ເຫມາະສຳລັບພໍ່ແມ່ ຄູສອນນັກເຄື່ອນໄຫວກິດຈະກຳກັບເດັກທົ່ວໆໄປ.

ດັ່ງນັ້ນ ກໍ່ຈະເວົ້າວ່າ ສະມາຄົມ ເປັນອົງກອນນຶ່ງ ທີ່ເປີດເສັ້ນທາງໂລກແຫ່ງວັນນະກຳໃຫ້ແກ່ເດັກນ້ອຍລາວກໍຄົງບໍ່ຜິດບໍຕ່າງຫຍັງກັບສຳນັກພິມນຶ່ງ . ເພາະວ່າ ເມື່ອໂລກວັນນະກຳກວ້າງອອກ ຈິນຕະນາການຂອງເດັກກໍຂະຫຍາຍຕົວໄດ້ ແລະມັນກໍຈະໄປກະຕຸ້ກຫົວຄິດປະດິດສ້າງອື່ນໆຂອງເດັກນ້ອຍ ໃນລະຍະທີ່ພວກເຂົາພວມເຕີບໃຫຍ່ໃນທຸກດ້ານ. ສຳລັບຜູ້ອາວຸໂສທີ່ເປັນຄູບາອາຈານ ສະມາຄົມກໍໄດ້ ຈັດພິມປຶ້ມຄູ່ມືຫາຍາກເຊັ່ນປຶ້ມຕຳນານ ຂຸນບູລົມ, ຕຳລາແຕ່ງກາບກອນຂອງລາວ ເປັນຕົ້ນ. ນອກຈາກນຳສະເຫນີນິທານພື້ນເມືອງສັ້ນໆໃນແບບປຶ້ມປະກອບຮູບແລ້ວ ສະມາຄົມ ຍັງສົ່ງເສີມໃຫ້ມີການຮຽບຮຽງນິທານຄຳກອນຍາວໆ ອັນມີຊື່ສຽງຂອງລາວອອກເປັນວັນນະຄະດີສຳລັບເດັກ ເຊັ່ນເລື່ອງ ກ່ຳພ້າຜີນ້ອຍ ສິນໄຊ ຂຸນລູນາງອົ້ວ ສີທົນ

ມະໂນລາ. ເຮັດໃຫ້ເດັກນ້ອຍລາວເຮົາໄດ້ຮັບ ຮູ້ລົດຊາດອັນມ່ວນໆຂອງວັນນະຄະດີພື້ນເມືອງເຮົາ ຄຽງຄູ່ກັບສິລະປະວັນນະຄະດີຂອງຕ່າງປະເທດ ທີ່ຫລັ່ງໄຫລເຂົ້າມາໃນຮູບແບບສີຕ່າງໆ ແລະມັກຈະມີອິດທິພົນເໜືອສິລະປະວັນນະຄະດີຂອງຊາດ ເຮົາໄປ .

2. ວົງການນັກຂຽນ ນັກແຕ້ມ ນັກເລົ່ານິທານທັງຂັ້ນສູນກາງ ແລະທ້ອງຖິ່ນ ຂະຫຍາຍກວ້າງອອກ ມີນັກຮຽນຮູ້ ຜູ້ສົນໃຈສະໝັກເຂົ້າຮັບການເຝິກອົບຮົມຫລາຍຂຶ້ນ ມີການປະກອບສ່ວນເສຍສະຫລະຂອງສ່ວນບຸກຄົນ ເຊັ່ນ ແຕ່ກ່ອນເວລາຈັດເຝິກອົບຮົມທາງຜູ້ເຂົ້າຮ່ວມ ຮຽກຮ້ອງໃຫ້ຕອບສະໜອງຄ່າຢູ່ກິນ ຄ່າເດີນທາງ ແລະອື່ນໆ ແຕ່ລະຍະຫລັງມານີ້ ຜູ້ເຂົ້າຮ່ວມສະໝັກໃຈມາເອງໂດຍບໍ່ໄດ້ຮັບຄ່າຕອບແທນໃດໆ ເຊັ່ນ ຕົວຢ່າງການເຝິກອົບຮົມຜະລິດປຶ້ມເດັກນ້ອຍ ລະຫວ່າງປີ 99 - 2000 , ການປະກວດ ຮູບແຕ້ມປະກອບຄຳກອນ ຫລືປະກວດນິທານປະກອບຮູບ (ດາວຍິບຍັບ) ກໍມີຄົນເຂົ້າຮ່ວມຕັ້ງ 30 ກວ່າ ຄົນ, ຜູ້ສົ່ງມາແຕ່ຕ່າງແຂວງກໍມີ, ນັກຮຽນລະດັບປະຖົມສະມາຊິກ ສ.ວ.ດ. ຫລາຍແຫ່ງ ສະແດງແວວປະດິດແຕ່ງຫລາຍຂຶ້ນ. ຄູອາຈານສອນແຕ້ມຮູບ, ນັກຮຽນວິຈິດຕະກຳ ແລະຜູ້ມັກແຕ້ມຫລາຍຄົນ ມີເວທີສະແດງສີມືຄວາມສາມາດ ໃນການແຕ້ມຮູບປະກອບປຶ້ມຂອງຕົນ.

3. ອົງກອນຊ່ວຍເຫລືອສາກົນອື່ນໆ ແລະພາກສ່ວນຕ່າງໆຂອງລັດ ເລີ່ມເຫັນຄວາມສຳຄັນຂອງການໃຫ້ທຶນສຳລັບພິມປຶ້ມໃຫ້ເດັກນ້ອຍລາວຫລາຍຂຶ້ນ ເຊັ່ນ ກົມປ່າໄມ້ ພະແນກປົກປັກຮັກສາສິ່ງແວດລ້ອມ ອົງການຊາວໜຸ່ມ ເຍົາວະຊົນ ອົງການ ຊິດເຊ ...

*ບາງບົດຮຽນທີ່ຖອດຖອນໄດ້ :*

1. ທາງສະມາຄົມ ບໍ່ສາມາດກຳນົດແຜນການຮ່ວມມື ເປັນລະຍະຍາວກັບພາກສ່ວນລັດ ແລະຕ່າງແຂວງໄດ້

2. ບໍ່ທັນສາມາດຕອບສະໜອງທຶນຮອນ ທີ່ຝ່າຍລາວ ຮຽກຮ້ອງຕ້ອງການສຳລັບສ້າງຕັ້ງຫ້ອງອ່ານ ຕູ້ປຶ້ມ , ຈັດພິມປຶ້ມໃໝ່ ...

3. ບໍ່ທັນສາມາດຊຸກຍູ້ ໃຫ້ ສ.ວ.ດ. ແຕ່ລະບ່ອນ ແລະຫ້ອງຮັກອ່ານ ເປັນເຈົ້າການໃນເລື່ອງບໍລິຫານ ແລະກຸ້ມຕົນເອງໄດ້ , ບໍ່ທັນເຮັດໃຫ້ ຜູ້ປົກຄອງ ແລະພາກສ່ວນອ້ອມຂ້າງເຂົ້າມາມີສ່ວນຮ່ວມສົ່ງເສີມໂຄງການ ຢ່າງເຕັມເມັດເຕັມໜ່ວຍ

4. ບໍ່ທັນສາມາດປຸກລະດົມປວງຊົນ ກໍຄືສັງຄົມພາກລັດທີ່ກ່ຽວຂ້ອງ ເຫັນໄດ້ຄວາມສຳຄັນຂອງການລົງທຶນໃສ່ການຜະລິດປຶ້ມອ່ານສຳລັບເດັກ, ການຊຸກຍູ້ຜູ້ລົງທຶນໃສ່ຮ້ານຂາຍປຶ້ມຍັງບໍ່ໄດ້ດີ ບໍ່ໄດ້ໃຫ້ການສະໜັບສະໜູນ ...

5. ທາງສະມາຄົມ ບໍ່ທັນມີພະນັກງານ ວິຊາການພຽງພໍ ເພື່ອປະສານງານ ລົງຕິດຕາມຊ່ວຍເຫລືອຫ້ອງອ່ານ ຫລື ສ.ວ.ດ. ຢ່າງເປັນລະບົບ ແລະລົງປາຖະກະຖາ ໂຄສະນາກ່ຽວກັບໂຄງການ.

6. ສາມາດລະດົມ ຜູ້ຊ່ຽວຊານຍີ່ປຸ່ນ ອາສາສະໝັກ ມາຊ່ວຍຈັດຕັ້ງເຝິກອົບຮົມວິຊາການ.

## IV. ນະໂຍບາຍ ແລະຍຸດທະສາດ ຂອງສະມາຄົມ ໃນຕໍ່ໜ້າ (ແຕ່ປະຈຸບັນ ເຖິງມື້ສ້ຽງສຸດ ໂຄງການ 2000 -200? )

ລົງເປັນທີ່ເຂົ້າໃຈກັນດີວ່າ ຄວາມສຳເລັດຂອງໂຄງການສົ່ງເສີມການອ່ານ ຈະຖືກຢັ້ງຢືນດ້ວຍການເຕີບໃຫຍ່ຂະຫຍາຍຕົວຂອງຫໍສະໝຸດ ຫ້ອງອ່ານປຶ້ມໃນທົ່ວປະເທດ, ມີປຶ້ມອ່ານພາສາລາວຫລາຍຂຶ້ນ ແລະມີຄຸນນະພາບດີ .ໃນທົ່ວທຸກແຫ່ງ ສະຖິຕິການອ່ານປຶ້ມຈະສູງຂຶ້ນຈຳນວນຄູ ຜູ້ຮັບຜິດຊອບ ນັກກິດຈະກຳ ນັກ

ເຄື່ອນໄຫວ ຈະມີຢ່າງພຽງພໍ ຈະມີຮ້ານຂາຍປຶ້ມເກີດຂຶ້ນອ້ອມຂ້າງໂຮງຮຽນ, ຈະມີການໃຫ້ລາງວັນປະຈໍາປີ ແກ່ນັກຂຽນ ນັກແຕ້ມ ນັກເລົ່ານິທານ ນັກອ່ານເຍົາວະຊົນ ມີບຸນມະໂຫລານປະຈໍາປີ ຫລືງານວາງສະແດງປຶ້ມເດັກ ມີນັກສະແດງ ນັກເລົ່ານິທານ ອັດສຽງນິທານປະກອບເພງ ຈໍາຫນ່າຍວາງຂາຍຄືກະແຊັດ ຫລື ຊີດີເພງທົ່ວໆໄປ ມີລາຍການເລົ່ານິທານ ສະແດງກິດຈະກໍາກ່ຽວກັບການອ່ານອອກທາງວິທະຍຸ ແລະໂທລະພາບ. ເວລາມີບຸນຢູ່ໂຮງຮຽນ ຈະມີການສະແດງເລົ່ານິທານ ຫລິ້ນລະຄອນເວທີ ຮ້ອງເພງ ເລົ່າລະຄອນເຈ້ຍ ປະກວດແຕ້ມຮູບ ແຕ່ງກາບກອນ ..

*ເປົ້າຫມາຍສຸດຍອດ* ຂອງໂຄງການສົ່ງເສີມການອ່ານ ແມ່ນ*ການສ້າງສັງຄົມນັກອ່ານ* ດັ່ງທີ່ເຄີຍເວົ້າກັນມານັ້ນແລ້ວແລະ ຜົນສໍາເລັດຂອງໂຄງການຈະເປັນສິ່ງຍັ້ງຍືນ ເມື່ອໃດຫາກກິດຈະກໍາເຫລົ່ານີ້ ກາຍເປັນຮີດຄອງປະເພນີ ປະພຶດປະຕິບັດກັນຢູ່ໃນໂຮງຮຽນປະຖົມ ມັດທະຍົມ ໃນຂັ້ນບ້ານ ເມືອງ ແລະອື່ນໆ ...

ດັ່ງນັ້ນ ເຖິງວ່າໃນລະຍະຜ່ານມາ ທາງສະມາຄົມໄດ້ປະກອບສ່ວນຫລາຍຮູບຫລາຍແບບເພື່ອສະຫນັບສະຫນຸນການປະຕິບັດໂຄງການສົ່ງເສີມການອ່ານແຫ່ງຊາດມາເປັນເວລາເຂົ້າສິບປີມາແລ້ວ ມີທັງຈຸດດີ ຈຸດອ່ອນຄ້າງຄາຢູ່ບໍ່ຫນ້ອຍ ແຕ່ເມື່ອຊັ່ງຊາແລ້ວ ເຫັນວ່າກິດຈະກໍາຕ່າງໆທີ່ທາງສະມາຄົມໄດ້ຮ່ວມມື ແລະໃຫ້ການສະຫນັບສະຫນຸນນັ້ນ ມີຫມາກຜົນພໍສົມຄວນແລະຈະມີຜົນກະທົບຍາວນານ ໃນແງ່ບວກ ໃສ່ການພັດທະນາຊັບພະຍາກອນມະນຸດຜູ້ຫນຸ່ມນ້ອຍຂອງປະເທດຊາດ ທັງນີ້ ໂດຍສອດຄ່ອງກັບແນວທາງນະໂຍບາຍ ແລະຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງພັກ ແລະລັດຖະບານແຫ່ງ ສ.ປ.ປ.ລາວ, ເພື່ອສືບຕໍ່ໃຫ້ການສະຫນັບສະຫນຸນ ມີຫມາກຜົນດີກວ່າເກົ່າ ສະມາຄົມ ຈຶ່ງກໍານົດນະໂຍບາຍ ແລະຍຸທະສາດ ບາງຢ່າງ ເພື່ອຫລຸດຜ່ອນຈຸດອ່ອນຕ່າງໆ ແລະເສີມຂະຫຍາຍຈຸດດີ ທີ່ເປັນຜົນສໍາເລັດຮ່ວມກັບທຸກພາກສ່ວນກ່ຽວຂ້ອງໃນສັງຄົມ ທັງເປັນການເລັ່ງລັດໃຫ້ໂຄງການສົ່ງເສີມການອ່ານແຫ່ງຊາດນີ້ ສ້ຽງສຸດລົງດ້ວຍຜົນສໍາເລັດ ຕາມກໍານົດເວລາ ແລະບັນລຸເປົ້າຫມາຍທີ່ວາງໄວ້.

1. ນະໂຍບາຍຫລັກຂອງສະມາຄົມ ມີດັ່ງນີ້ :

- ສືບຕໍ່ໃຫ້ທຶນສ້ອມແປງ ສົມທົບກໍ່ຕັ້ງຫ້ອງຮັກອ່ານ ໃນໂຮງຮຽນປະຖົມ ແລະມັດທະຍົມ ໃນບ່ອນທີ່ເຫັນວ່າມີເງື່ອນໄຂເຫມາະສົມ (ມີສະຖານທີ່ ມີຜູ້ຮັບຜິດຊອບ ແລະມີການປະກອບສ່ວນ ຈາກພື້ນຖານ ມີອໍານາດການປົກຄອງບ້ານ ສະມາຄົມພໍ່ແມ່ນັກຮຽນ ເຂົ້າຮ່ວມ ...
- ສືບຕໍ່ໃຫ້ທຶນຮອນຈັດພິມປຶ້ມອ່ານ ນິທານລາວ, ແປ ແລະພິມເລື່ອງເອກຕ່າງປະເທດ ທີ່ເຫມາະສົມກັບລະດັບວັດທະນະທໍາ ແນວຄຶດຂອງເດັກນ້ອຍ ແລະ ຜູ້ອ່ານລາວທົ່ວໆໄປ
- ສືບຕໍ່ຂົນຂວາຍຫາທຶນມາສະຫນັບສະຫນຸນ ການປຸກສ້າງສ້ອມແປງອາຄານສະຖານທີ່ ທີ່ເຫມາະສົມແກ່ແຂວງ ກໍາແພງຫລືເມືອງ ໃຫ້ເປັນ ສ.ວ.ດ. ຕາມເງື່ອນໄຂການມີສ່ວນຮ່ວມຂອງພື້ນຖານ
- ສືບຕໍ່ຈັດຕັ້ງເຝິກອົບຮົມວິຊາການດ້ານປະດິດແຕ່ງ ແຕ້ມຮູບປະກອບປຶ້ມສໍາລັບເດັກ ເລົ່ານິທານ ຫລິ້ນລະຄອນ ຫັດຖະກໍາ ສີມືຈັກສານ ປັ້ນດິນ ປະດິດຂອງຫລິ້ນ ແລະອື່ນໆ
- ຂະຫຍາຍການຮ່ວມມືກັບທຸກອົງການຈັດຕັ້ງ ຂອງລັດ ແລະສາກົນ ເພື່ອດໍາເນີນກິດຈະກໍາ
- ສະຫນັບສະຫນູນດ້ານທຶນ ແລະວິຊາການ ເພື່ອເຝິກອົບຮົມນັກຮຽນໂຮງຮຽນສ້າງສ້າງຄູ ລະບົບ 11+3 ໃນທົ່ວປະເທດແລະຄູບໍາລຸງຂັ້ນປະຖົມ ໃຫ້ເປັນນັກເຄື່ອນໄຫວກິດຈະກໍາສົ່ງເສີມການ ອ່ານທຸກຮູບແບບຢ່າງເປັນລະບົບຕໍ່ເນື່ອງ

2. ຮ່າງຍຸດທະສາດລວມ(ຍັງຕ້ອງພິຈາລະນາລະອຽດຕື່ມ) :

ເພື່ອເຮັດໃຫ້ນະໂຍບາຍຂ້າງເທິງນັ້ນເກີດເປັນຈິງ ຈໍາເປັນຕ້ອງໃຊ້ຍຸດທະສາດບາງອັນ ເຊິ່ງສາມາດປັບປຸງດັດແປງໃຫ້ສອດຄ່ອງ ກັບເງື່ອນໄຂທ້ອງຖິ່ນໄດ້

- ຈັດຕັ້ງອົງກອນ ຫລື ສະມາຄົມພໍ່ແມ່ ຜູ້ປົກຄອງ ອໍານາດການປົກຄອງອ້ອມຂ້າງສຶກສາ

ວັດທະນະທຳ ເພື່ອເຂົ້າມາເປັນເຈົ້າການຮັບຜິດຊອບບໍລິຫານຫ້ອງອ່ານ, ຈັດຕັ້ງງານບຸນຕ່າງໆໃນໂຮງຮຽນ ທີ່ຕ້ອງມີກິດຈະກຳສົ່ງເສີມການອ່ານ, ພໍ່ແມ່ ຄູຜູ້ປົກຄອງ ເຂົ້າຮ່ວມປະຕິບັດກິດຈະກຳ.

- ສ້າງກອງທຶນ ໃຫ້ຮາງວັນແກ່ຜູ້ມີຜົນງານໃນທ້ອງຖິ່ນ

- ໃຫ້ທຶນພິເສດແກ່ນັກສຶກສາ ນັກຮຽນຢູ່ວິທະຍາໄລຄູ ແຫ່ງຕ່າງໆເຂົ້າຮ່ວມການເຝິກອົບຮົມວິຊາການສົ່ງເສີມກິດຈະກຳ ແລະຊຸກຍູ້ສ້າງຫລັກສູດກາວອນ ໃຫ້ແກ່ໂຮງຮຽນສ້າງຄູ

- ໃຫ້ທຶນສະຫນັບສະຫນູນ ແກ່ຜູ້ຈະເຮັດທຸລະກິດກ່ຽວກັບການຜະລິດປື້ມ ຈຳຫນ່າຍປື້ມ ສຳລັບເດັກຫລື ເປີດຫ້ອງອ່ານປື້ມນ້ອຍໆໃນຊຸມຊົນ (ບ້ານ) ໃນວັດ ໃນເຮືອນ ຂອງຕົນເອງ

- ຈັດຕັ້ງສະໂມສອນ ສະມາຊິກ ສ.ວ.ດ. ແລະຫ້ອງຮັກອ່ານທົ່ວປະເທດ ອອກວາລະສານ ເພື່ອໃຫ້ເປັນເວທີສະເຫນີຜົນງານການຂຽນ ການແຕ່ງ ການແຕ້ມ ການປະດິດສ້າງອື່ນໆ ຂອງສະມາຊິກ ແລະຜູ້ອື່ນໆ ອັນຈະເປັນການຂະຫຍາຍຕາຫນ່າງຜູ້ອ່ານອອກໄປເລື້ອຍໆ.

## V. ສະຫລຸບ:

ເຫັນໄດ້ວ່າ ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວ ແຫ່ງປະເທດ ຍີ່ປຸ່ນນີ້ ເປັນພຽງອົງການເອກະຊົນນ້ອຍໆ ທີ່ຍຶດຫມັ້ນນຳອຸດົມການນຶ່ງຄືສະຫນັບສະຫນູນການສຶກສາເດັກນ້ອຍຢູ່ໃນ ສປປລາວ ດ້ວຍການສົ່ງເສີມ ການອ່ານ ອັນເຮັດໃຫ້ເດັກນ້ອຍມີໂອກາດເຝິກຝົນຕົນເອງ ພາຍໃຕ້ເງື່ອນໄຂທຳມະດາງ່າຍດາຍ ທີ່ສາມາດເສີມຂະຫຍາຍ ແລະຍືນຍົງ. ຄວາມມຸ່ງຫວັງອັນນຶ່ງ ຂອງສະມາຄົມ ແມ່ນຝັງຮາກແກ້ວ ແຫ່ງການມັກອ່ານລົງໃສ່ຫົວສະຫມອງຂອງເດັກນ້ອຍ ເພື່ອວ່າເມື່ອເຕີບໃຫຍ່ຂຶ້ນ ພວກເຂົາຈະຕິດນິໄສມັກອ່ານ ບໍ່ຫລາຍກໍຫນ້ອຍ ເມື່ອຕົກເຂົ້າໄປຢູ່ສັງຄົມໃຫມ່ ທີ່ມີລະດັບການສຶກສາສູງ ພວກເຂົາຈະບໍ່ໄດ້ມີປົມດ້ອຍ ຄືດັ່ງທີ່ຮຸ່ນພໍ່ຮຸ່ນແມ່ ຮຸ່ນອ້າຍເອື້ອຍຂອງພວກເຂົາເຄີຍປະສົບມາ. ຄວາມມຸ່ງຫວັງຂອງສະມາຄົມພວກເຮົາເລັກນ້ອຍຫລາຍ ເມື່ອປຽບໃສ່ເປົ້າຫມາຍໃນຊີວິດຂອງຄົນຜູ້ນຶ່ງ ທີ່ຕ້ອງການຄວາມສົມບູນພູນສຸກ ຄວາມຢູ່ສຸກສະບາຍ ແລະຄວາມສຳເລັດຢ່າງອື່ນໆຫລາຍອັນ. ຄວາມຈິງມີຢູ່ວ່າ ກ້າຄົນເຮົາສາມາດເຮັດສິ່ງເລັກໆນ້ອຍໆ ສຳເລັດແລ້ວ ເຂົາກໍຈະສາມາດເຮັດສິ່ງຍິ່ງໃຫຍ່ສຳເລັດໄດ້ ດັ່ງນັ້ນ ເປົ້າຫມາຍຫລັກຂອງສະມາຄົມ ກໍຄື ໂຄງການແມ່ນເຮັດໃຫ້ເດັກນ້ອຍມ່ວນ ຫລືຕິດໃຈນຳການສຶກສາຮ່ຳຮຽນ, ມີຄວາມກ້າຫານສະແດງອອກ ໂດຍການສົ່ງເສີມໃຫ້ເຂົາມີໂອກາດໄດ້ອ່ານ ແລະເຝິກຝົນຕົນເອງດ້ວຍກິດຈະກຳສົ່ງເສີມການອ່ານເປັນຕົ້ນຕໍ.

ພວກເຮົາຖືວ່າ ຄວາມສຳເລັດເລັກໆນ້ອຍຂອງພວກເຮົາໃນວັນນີ້ທຸກຢ່າງມີຄຸນຄ່າສູງ ມັນເກີດຂຶ້ນໄດ້ຍ້ອນຄວາມພະຍາຍາມ ຄວາມບຸກບືນ ການເສຽສະຫລະຂອງຫລາຍຄົນ ຫລາຍກຸ່ມຫລາຍລະດັບ ແຕ່ສູນກາງເຖິງທ້ອງຖິ່ນ. ສິ່ງນຶ່ງທີ່ຢາກຝາກໄວ້ນຳບັນດາທ່ານທຸກຄົນ ທີ່ມີສ່ວນກ່ຽວຂ້ອງກັບໂຄງການນີ້ ແມ່ນຂໍໃຫ້ທຸກທ່ານມີຄວາມພາກພູມໃຈ ຫມັ້ນໃຈໃນຜົນງານທີ່ສ້າງມາຮ່ວມກັນນີ້ ຈົ່ງເຊື່ອວ່າ ສິ່ງທີ່ພວກເຮົາເຮັດໃນມື້ນີ້ ຖືກຕ້ອງທີ່ສຸດແລ້ວ ແລະຈະມີຜົນກະທົບໃນທາງບວກ ຕໍ່ລູກຫລານເຍົາວະຊົນຂອງເຮົາໃນພາຍພາກຫນ້າຢ່າງແນ່ນອນ ແລະສິ່ງສຸດທ້າຍທີ່ຂໍຝາກໄວ້ອີກກໍຄືແມ່ນການສ້າງຜູ້ສືບທອດ ຂົນຂວາຍໂຄສະນາ ໃຫ້ຫລາຍຄົນຫລາຍພາກສ່ວນເຂົ້າໃຈເປັນເຈົ້າການ ແລະເຂົ້າຮ່ວມສະຫນັບສຸຫນູນໃນກິດຈະກຳເຫລົ່ານີ້ ດ້ວຍຄວາມສະຫມັກໃຈ ແລະເສຽສະຫລະ .

ເອກກະສານເພີ່ມເຕີມ:

1. ບັນຊີລະອຽດ ປື້ມທີ່ຈັດພິມ

2. ປື້ມພາສາລາວແລະຕ່າງປະເທດ (ຕົວຢ່າງໃນຕູ້ນຶ່ງ

ຕົວຢ່າງປື້ມໃນຫ້ອງອ່ານນຶ່ງໆ ແລະຈຳນວນປື້ມທີ່ຊື້ໃສ່ຕູ້,

3. ລາຍການຈັດເຝິກອົບຮົມສຳມະນາ ວິຊາການ ແຕ່ ປີ 92 - 2000

# ບົດສະຫລຸບຜົນງານ

## ແຕ່ປີ 1992-2000

## ຂອງອົງການພັດທະນາເດັກລາວຍີ່ປຸ່ນ (SVA)

## Shanti Volunteer Association

(ຊື່ພາສາອັງກິດເດີມແມ່ນ **Japan Sotoshu Relief Committee " JSRC"** )

1. <u>ຄວາມເປັນມາຂອງອົງການ</u>

ອົງການພັດທະນາເດັກລາວ-ຍີ່ປຸ່ນ ( **Shanti Volunteer Association /SVA** ) ເປັນອົງການຈັດຕັ້ງນອກລັດຖະບານ (Non– Governmetal Organisation / NGO ) ສ້າງຕັ້ງຂື້ນໃນປີ ຄ. ສ 1979 ແລະໄດ້ຮັບການສະຫນັບສະຫນູນທາງດ້ານທືນຮອນຈາກພາກສ່ວນປະຊາຊົນ ແລະພາກສ່ວນເອກະຊົນໃນປະເທດຍີ່ປຸ່ນ.

ຕໍ່ມາໃນປີ ຄ. ສ 1980 ໄດ້ເປີດສໍານັກງານຢູ່ປະເທດໄທ ( Bangkok )ຕັ້ງຢູ່ຊຸມຊົນແອອັດ(ຄອງເຕີຍ) ໂດຍໄດ້ເຮັດຫນ້າທີ່ເປັນສູນກາງດໍາເນີນງານ ໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ເຊີ່ງໄດ້ແກ່ປະເທດລາວ ,ກໍາປູເຈຍ . ໂດຍຊ່ວຍເຫລືອອົບພະຍົບຊາວລາວແລະກໍາປູເຈຍໃນສູນອົບພະຍົບບ້ານວີໃນ, ສູນອົບພະຍົບເຂົາອີ່ດ່າງ ເຊີ່ງເຮັດຫນ້າທີ່ຊ່ວຍເຫລືອທາງດ້ານ ຫ້ອງສະຫມຸດ

ຕໍ່ມາໄດ້ເປີດສໍານັກງານຢູ່ພະນົມເປັນ ແລະ ປີ ຄ. ສ 1992 ໄດ້ຮັບອະນຸຍາດໃຫ້ດໍາເນີນວຽກງານຢູ່ ສປປລາວ. ແຫລ່ງທືນທີ່ໃຫ້ການສະຫນັບສະຫນູນແມ່ນໄດ້ມາຈາກ ກະຊວງໄປສະນີແຫ່ງປະເທດຍີ່ປຸ່ນ, ບໍລິສັດເອກະຊົນ ແລະ ປະຊາຊົນຊາວຍີ່ປຸ່ນ.

2. <u>ວັດຖຸປະສົງຫລັກຂອງອົງການ</u>

ອົງການSVAເປັນອົງການຊ່ວຍເຫລືອເອກະຊົນໂດຍປັດສະຈາກການເມືອງແລະສາດສະຫນາໃດໆ , ເປັນອົງການອາສາສະມັກທີ່ເຮັດຫນ້າທີ່ຊ່ວຍເຫລືອສັງຄົມ, ພາຍໃຕ້ອຸດົມຄະຕິທີ່ວ່າ : <u>ດໍາລົງຊີວິດຢູ່ຮ່ວມກັນແລະຮຽນນໍາກັນ</u> ໃຫ້ອະໄພເຊີ່ງກັນແລະກັນ, ເຄົາຣົບນັບຖືຮີດຄອງປະເພນີ, ວັດທະນາທໍາ, ສາດສະຫນາແລະພາສາອັນດີງາມທີ່ແຕກຕ່າງກັນ. ມີຄວາມມຸ້ງຫມາຍເພື່ອດໍາເນີນການຮ່ວມມືພັດທະນາຊ່ວຍເຫລືອລະຫວ່າງປະຊາຊົນຢູ່ໃນປະເທດທີ່ພັດທະນາແລ້ວແລະປະຊາຊົນໃນປະເທດທີ່ກໍາລັງພັດທະນາ, ເພື່ອໃຫ້ປະຊາກອນໂລກໄດ້ມີຄວາມສະຫວ່າຜ່າເຜີຍແລະຕ່າງຄົນຕ່າງມີຄວາມຮັບຜິດຊອບແລະຮ່ວມມືພັດທະນາ.

3./ <u>ວັດຖຸປະສົງຂອງອົງການ SVA ທີ່ເຂົ້າມາດຳເນີນວຽກງານໃນປະເທດລາວ</u>

ສຳລັບປະເທດລາວອົງການ SVA ໄດ້ເລີ້ມດຳເນີນການຊ່ວຍເຫລືອ ທາງດ້ານການສຶກສາ (ຜະລິດອຸປະກອນການສຶກສາ )ແລະວຽກງານສົ່ງເສີມການອ່ານ. ການຮັກສາປະເພນີຮີດຄອງອັນດີງາມຂອງຊາດລາວໄວ້ ( ຮັກສາວັດທະນາທຳເກົ່າແກ່ ,ສິລະປະພື້ນເມືອງລາວ ) ໂດຍການຮ່ວມມືນຳສອງກະຊວງຄື ກະຊວງສຶກສາທິການ,ກະຊວງຖະແຫລງຂ່າວແລະວັດທະນາທຳ.

4. <u>ວຽກງານໂຄງການທີ່ດຳເນີນຢູ່ສປປລາວ</u> ( ແຕ່ປີ 1992-2000)

ໄລຍະດຳເນີນວຽກງານຢູ່ສປປລາວເປັນເວລາຫລາຍປີ, ອົງການSVA ພວກເຮົາໄດ້ຮັບຄວາມສົນໃຈແລະໄດ້ຮັບການປະກອບສ່ວນເປັນຢ່າງດີທັງພາກສ່ວນລັດແລະເອກະຊົນທັງສອງປະເທດ (ລາວ-ຍີ່ປຸ່ນ)ຈຶ່ງເຮັດໃຫ້ກິດຈະກຳຂອງພວກເຮົາຂະຫຍາຍໄດ້ຫລາຍ ໂຄງການດັ່ງນີ້ :

4.1. <u>ດ້ານການສຶກສາ</u>

- ໂຄງການຜະລິດອຸປະກອນການສຶກສາຂັ້ນພື້ນຖານ
- ໂຄງການປຸກສ້າງ ໂຮງຮຽນແລະປັບປຸງສະພາບແວດລ້ອມການສຶກສາຂອງຊຸມຊົນ
- ໂຄງການພັດທະນານິທານພື້ນເມືອງສຳລັບການສຶກສາຂັ້ນປະຖົມຂອງແຂວງເຊກອງ

4.1.1 <u>ໂຄງການຜະລິດອຸປະກອນການສຶກສາຂັ້ນພື້ນຖານ</u>

ເພື່ອປະກອບສ່ວນເຂົ້າໃນວຽກງານການປັບປຸງສະພາບການສຶກສາຂອງ ໂຮງຮຽນປະຖົມຢູ່ໃນສປປລາວ, ໂຄງການນີ້ໄດ້ເລີ້ມຕົ້ນມາແຕ່ປີ 1992 ໂດຍຜ່ານການຜະລິດແລະແຈກຢາຍອຸປະກອນການສຶກສາແບບງ່າຍເຊັ່ນ ເຄື່ອງພິມຜ້າໄໝ ໂຕຊາບານ (Toshaban) ,ກະດານດຳ,ແຜ່ນແມ່ສະກົດ,ແຜ່ນຕົວອັກສອນພາສາລາວ,ປື້ມຄູ່ມື ໂຕຊາບານ,ແຜ່ນທີ່ປົກຄອງ ອຸປະກອນເຫຼົ່ານີ້ຈະທຳການຜະລິດຢູ່ທີ່ສູນຜະລິດອຸປະກອນການສຶກສາ. ກິໂລແມັດທີ່ 8 ຖະໜົນທ່າເດື່ອ. ກຳແພງນະຄອນວຽງຈັນ

ນອກຈາກນັ້ນ ກໍ່ໄດ້ດຳເນີນການອົບຮົມແນະນຳວິທີການນຳໃຊ້ແລະບຳລຸງຮັກສາເຄື່ອງພິມຜ້າໄໝ ໂຕຊາບານໃຫ້ແກ່ຄູແລະພາກສ່ວນທີ່ໄດ້ຮັບເຄື່ອງພິມດັ່ງກ່າວ, ເປີດອົບຮົມໃຫ້ພະນັກງານເພື່ອປັບປຸງແລະຍົກລະດັບຄວາມສາມາດຂອງພະນັກງານ.

4.1.2 <u>ໂຄງການປຸກສ້າງ ໂຮງຮຽນແລະປັບປຸງສະພາບແວດລ້ອມການສຶກສາຊຸມຊົນ</u>

ໂຄງການນີ້ແມ່ນໃຫ້ການສະໜັບສະໜູນດ້ານແຫລ່ງທຶນ ເພື່ອກໍ່ສ້າງອາຄານຮຽນຕາມຄຳສະເໜີຂອງກະຊວງສຶກສາທິການ ເພື່ອເລັ່ງໃສ່ຄວາມຮຽກຮ້ອງຕ້ອງການຂອງການຂາດແຄນອາຄານຮຽນ, ພ້ອມທັງປັບປຸງສະພາບແວດລ້ອມຂອງຊຸມຊົນໄປພ້ອມໆກັນ

4.2.2 <u>ໂຄງການສົ່ງເສີມການອ່ານ</u>

ຫໍສະໝຸດແຫ່ງຊາດ (ກະຊວງຖະແຫລ່ງຂ່າວແລະວັດທະນາທໍາ) ໄດ້ຮັບເອົາໂຄງການຊ່ວຍເຫລືອລ້າຈາກອົງການSVA ເຊິ່ງເອີ້ນວ່າ " ໂຄງການສົ່ງເສີມການອ່ານ " ນັບແຕ່ປີ 1992 ຈົນຮອດປະຈຸບັນ.ມີມູນຄ່າທັງໝົດ 292.030 $ (ໂດລາສະຫະລັດ) ໂດຍແມ່ນ ອົງການ SVA ເປັນຜູ້ໃຫ້ການຊ່ວຍເຫລືອດ້ານທຶນຮອນ ແລະ ວິຊາການບາງຢ່າງ( ໂດຍສະເພາະການເຝິກອົບຮົມ ).

-ເພື່ອຊຸກຍູ້ແລະສົ່ງເສີມການອ່ານຂອງມະຫາຊົນໂດຍສະເພາະເຍົາວະຊົນໃຫ້ນັບມື້ໃຫ້ກວ້າງຂວາງ.

-ເພື່ອປູກຝັງນິໄສຮັກການອ່ານໃຫ້ແກ່ເດັກນ້ອຍໃນກໍາແພງນະຄອນ,ຊົນນະບົດແລະຕ່າງແຂວງ.

- ຂະຫຍາຍຕາໜ່າງຫ້ອງສະໝຸດໂດຍໃຊ້ຕູ້ສະໝຸດເຄື່ອນ ທີ່ແລະກິດຈະກໍາລົດເຄື່ອນທີ່ໃຫ້ກວ້າງ ແລະລົງສູ່ຊົນນະບົດໃຫ້ເພີ່ມຂຶ້ນ.

- ເປີດໂອກາດໃຫ້ເດັກນ້ອຍທີ່ຢູ່ຫ່າງໄກແລະຢູ່ຊົນນະບົດໄດ້ມີໂອກາດຊົມໃຊ້ຫ້ອງສະໝຸດ .

- ເພີ່ມທັກສະຂອງຄູຫຼືຜູ້ຮັບຜິດຊອບຫ້ອງອ່ານໃຫ້ເຂົ້າໃຈໃນການສ້າງກິດຈະກໍາສໍາລັບເດັກໂດຍໃຊ້ການອົບຮົມ.

5. <u>ສະພາບລວມໃນການປະຕິບັດໂຄງການ</u>

( ໄລຍະເວລາປະຕິບັດໂຄງການນັບແຕ່ວັນທີ່ 17/01/1992 - 17/07/2000 )

- <u>ຂໍ້ສະດວກ</u> : ອົງການພັດທະນາເດັກລາວ- ຍີ່ປຸ່ນ (SVA) ໄດ້ຮ່ວມວຽກວານນໍາຫໍສະໝຸດແຫ່ງຊາດແລະພາກສ່ວນທີ່ກ່ຽວຂ້ອງເຫັນວ່າ :

- ພະນັກງານຫໍສະໝຸດແຫ່ງຊາດໄດ້ມີຄວາມຮັບຜິດຊອບດີ ແລະມີຄວາມຫ້າວຫັນບຸກບືນໃນໜ້າທີ່ວຽກງານ.

- ພະແນກສຶກສາແຂວງ , ສຶກສາເມືອງ , ໂຮງຮຽນ ແລະ ອົງການຕ່າງໆທີ່ກ່ຽວຂ້ອງໃນທ້ອງຖິ່ນ, ທີ່ຄະນະພວກເຮົາໄດ້ຈັດຕັ້ງ ເຝິກອົບຮົມວຽກງານສົ່ງເສີມການອ່ານນັ້ນກໍ່ໄດ້ໃຫ້ຄວາມສະໜັບສະໜູນແລະອໍານວຍຄວາມສະດວກໃຫ້ແກ່ການເຝິກອົບຮົມ.

- ນັກສໍາມະນາກອນທຸກໆທ່ານທີ່ເຂົ້າຮັບການອົບຮົມກໍ່ມີຄວາມສົນໃຈແລະໃຫ້ການຮ່ວມມືຢ່າງເຕັມທີ່ໂດຍບໍ່ຮູ້ອິດຮູ້ເມື່ອຍ.

- <u>ຂໍ້ຫຍຸ້ງຍາກ</u> : ບາງຄັ້ງຄາວການພົວພັນລະຫວ່າງອົງການກັບພະແນກຮັບຜິດຊອບໂຄງສົ່ງເສີມການອ່ານຫຼືພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນຖ່ວງທັນແລະປະສານງານກັນຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

-ບາງຄັ້ງຄາວການເຮັດວຽກຊັກຊ້າແກ່ຍາວແລະບໍ່ໄປຕາມກໍານົດເວລາທີ່ວາງໄວ້,ສ່ວນໃຫຍ່ແມ່ນມາຈາກການລໍຖ້າຄໍາແນະນໍາຫຼືຕັດສິນບັນຫາເຊິ່ງຖືເປັນເລື່ອງປົກກະຕິທໍາມະດາຂອງການບໍລິຫານທີ່ຕ້ອງໃຊ້ຄວາມຮອບຄອບ,ເຊິ່ງເປັນເລື່ອງຂື້ນຈາກຫລາຍພາກສ່ວນເປັນພື້ນຖານ,ກວ່າຈະລົງມືປະຕິບັດວຽກງານແຕ່ລະໜ້າວຽກຕ້ອງເສຍເວລາຫລາຍ. ແຕ່ກໍ່ຄາດວ່າຈະໄດ້ຮັບການປັບປຸງແກ້ໄຂໃຫ້ດີຂື້ນໃນອານາຄົດ.

ຜ່ານການເຄື່ອນໄຫວເປັນເວລາດົນນານສົມຄວນພວກເຮົາຮູ້ໄດ້ເຖິງຄວາມຫຍຸ້ງຍາກເຊັ່ນຜ່ານມາເລີ້ງໃສ່ແຕ່ການປຸກສ້າງໂຮງຮຽນເທົ່ານັ້ນ ,ເພື່ອໃຫ້ການພັດທະນາເປັນຮູບປະທຳຫລາຍຂື້ນແລະໃຫ້ປະຊາຊົນມີຜົນປະໂຫຍດ ຫລາຍຂື້ນພວກເຮົາຈະທຳການກໍ່ສ້າງໂຮງຮຽນໄປພ້ອມໆກັບການພັດທະນາສະພາບແວດລ້ອມແບບມີສ່ວນຮ່ວມຢູ່ໃນຊຸມຊົນ.

4.1.3 <u>ໂຄງການພັດທະນານິທານພື້ນເມືອງສຳລັບການສຶກສາຂັ້ນປະຖົມຂອງແຂວງເຊກອງ</u>.

ໂຄງການນີ້ແມ່ນເພື່ອແນ່ໃສ່ການປັບປຸງສະພາບການສຶກສາຢູ່ແຂວງເຊກອງ ຖ້າທຽບໃສ່ແຂວງອື່ນໆຈຳນວນໂຮງຮຽນແລະອັດຕາການເຂົ້າໂຮງຮຽນຂອງເດັກຍັງໜ້ອຍຫຼາຍແລະໂຄງການນີ້ຫາກໍ່ເລີ້ມຕົ້ນໃນປີ2000.

ເພື່ອສ້າງຄວາມກະຕຸ້ນ,ສ້າງຄວາມສົນໃຈໃຫ້ເດັກນ້ອຍຢາກເຂົ້າໂຮງຮຽນແລະຮັກການອ່ານໃຫ້ຫລາຍຂື້ນຕ້ອງໃຊ້ສື່ການສອນເຂົ້າໃນການສອນ. ໂດຍນຳເອົານິທານພື້ນເມືອງອັນເປັນເອກະລັກສະເພາະຂອງແຂວງເຂົ້າໃນການສອນແລະການຜະລິດແຜ່ນອັກສອນປະກອບຮູບພາບ,ແຜ່ນທີ່ພົນລະເມືອງແລະປື້ມປະກອບການຮຽນການສອນໂດຍໃຫ້ແທດເໝາະກັບສະພາບຕົວຈິງຂອງແຂວງ.

4.2.<u>ດ້ານວັດທະນາທຳ</u>

-ໂຄງການສົ່ງເສີມການອ່ານ
-ໂຄງການເຮືອນເດັກເພື່ອວັດທະນາທຳແລະການສຶກສາ

4.2.1 <u>ໂຄງການເຮືອນເດັກເພື່ອວັດທະນາທຳແລະການສຶກສາ</u>

ເຮືອນເດັກເພື່ອວັດທະນາທຳແລະການສຶກສາໄດ້ເປີດເປັນທາງການໃນວັນທີ 9/7/96 ໂດຍອົງການພັດທະນາເດັກລາວ-ຍີ່ປຸ່ນ (SVA)ແລະສະຫະພັນແຮງງານ JICHIRO ແຫ່ງປະເທດຍີ່ປຸ່ນຮ່ວມກັບກະຊວງຖະແຫລງຂ່າວແລະວັດທະນາທຳ,ກະຊວງສຶກສາທິການ.

ໂຄງການນີ້ຈັດຂື້ນເພື່ອອຳນວຍຄວາມສະດວກເພື່ອຕອບສະໜອງຄວາມຕ້ອງການຂອງເດັກນ້ອຍໂດຍແນ່ໃສ່ການພັດທະນາການສຶກສາແລະວັດທະນາທຳ, ເຮືອນເດັກປະກອບດ້ວຍສູນແຫລ່ງການສຶກສາຕ່າງໆລວມທັງປື້ມສະເພາະເດັກໄດ້ຈັດວາງສະແດງແລະໃຫ້ຢືມໄປອ່ານ.

ເຮືອນເດັກແມ່ນເປີດຮັບເດັກແຕ່ອາຍຸ 5-15 ປີ ,ຢູ່ເຮືອນເດັກໄດ້ຈັດຕັ້ງຫ້ອງສະໝຸດເພື່ອເດັກ,ເຊິ່ງຈະເປີດບໍລິການທຸກໆມື້ຫ້ອງສະໝຸດມີປື້ມໄວ້ບໍລິການ 2.000 ຫົວ,ໃນຈຳນວນປື້ມດັ່ງກ່າວລວມມີປື້ມຮູບ,ປື້ມເລື່ອງຕ່າງໆເຊິ່ງນຳເຂົ້າຈາກຕ່າງປະເທດ (ປະເທດຍີ່ປຸ່ນ,ໄທ)ໄດ້ແປເປັນພາສາລາວກ່ອນຈະໃຫ້ບໍລິການ.

ນອກຈາກນີ້,ກໍ່ໄດ້ຈັດຫລັກສູດກ່ຽວກັບສິນລະປະວັດທະນາທຳພື້ນເມືອງໃຫ້ເດັກມີປະມານ 15 ປະເພດເຊັ່ນ : ດົນຕີພື້ນເມືອງ,ຟ້ອນ,ຕຳຫູກ ,ການແຕ່ງກິນແບບພື້ນເມືອງແລະອື່ນໆ.

SVA 12/12/2000

# ນະໂຍບາຍຂອງອົງການ SVA ໃນຕໍ່ໜ້າ

ຕະຫຼອດໄລຍະຂອງການເຮັດວຽກຫຼາຍປີຜ່ານມາ. ອົງການSVAໄດ້ຮັບຮູ້ເຖິງຫລາຍໆສະພາບທີ່ເກີດຂື້ນສະພາບຕົວຈິງຂອງທ້ອງຖິ່ນ, ເຂົ້າໃຈກ່ຽວກັບຄວາມຮຽກຮ້ອງຕ້ອງການຂອງເດັກນ້ອຍ, ຂອງປະຊາຊົນ. ສະພາບສັງຄົມທີ່ມີການພັດທະນາຂະຫຍາຍຕົວໃນທຸກດ້ານຂອງສັງຄົມປະຈຸບັນ.

ໃນອານາຄົດຕໍ່ໜ້ານີ້(ປີ2001-2003) ໂຄງການຫ້ອງສະໝຸດຂອງອົງການSVA ພວກເຮົາຈະມີການປັບປຸງໜ້າວຽກເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງທ້ອງຖິ່ນແລະຂອງສັງຄົມໃນເມືອງ. ໂດຍມີແຜນການໃນ 3 ປີຂ້າງໜ້າດັ່ງນີ້ :

1- ການແຈກຢາຍຕູ້ສະໝຸດເຄື່ອນທີ່. ໃນຕໍ່ໜ້າຈຳນວນຕູ້ຈະລຸດລົງແລະອາດຈະຫັນມາເປັນການແຈກປື້ມ ເຂົ້າຕູ້ສະໝຸດແລະຫ້ອງສະໝຸດແທນ.

2-ເປີດອົບຮົມກ່ຽວກັບການສ້າງກິດຈະກຳສຳລັບເດັກຢູ່ຫ້ອງອ່ານແລະລົງປະເມີນຜົນການນຳໃຊ້ຕູ້ສະໝຸດແລະຫ້ອງສະໝຸດ.

3-ຢາກຈະສ້າງຫໍສະໝຸດປະຈຳແຂວງ(ເປັນພາກເຊັ່ນ ພາກເໜືອ, ພາກກາງ, ພາກໃຕ້) ເພື່ອໃຫ້ເປັນ ຫໍສະໝຸດສູນກາງ(ຫໍສະໝຸດແມ່)ເພື່ອເປັນສະຖານທີ່ສຳລັບຈັດການອົບຮົມ, ຕິດຕໍ່ພົວພັນຂອງຫ້ອງສະໝຸດສາຂາຕ່າງໆໃນຂົງເຂດໃກ້ຄຽງ. ແຕ່ການສ້າງໃນລັກສະນະແບບນີ້ຕ້ອງມີການຮ່ວມມືນຳຫຼາຍພາກສ່ວນ, ທັງພາກສ່ວນທ້ອງຖິ່ນເອງ (ແຂວງ, ເມືອງ)ຫໍສະໝຸດແຫ່ງຊາດ, ອົງການຊ່ວຍເຫລືອສາກົນຫຼືພາກສ່ວນອື່ນໆ.

4-ສົ່ງເສີມການພິມປື້ມພາສາລາວ, ປື້ມຮູບພາບນິທານ, ປື້ມອ່ານສຳລັບເຍົາວະຊົນແລະໄວໜຸ່ມ.

5-ສົ່ງເສີມການຂຽນເລື້ອງຂອງນັກຂຽນ, ນັກແຕ້ມ.

ເວົ້າລວມແລ້ວພວກເຮົາປະຕິບັດ "ໂຄງການສົ່ງເສີມການອ່ານ "ນີ້ມາເປັນຂັ້ນເປັນຕອນແລະໄດ້ຄືສົມຄວນອົງການ SVA ເຊື່ອວ່າໝາກຜົນຂອງໂຄງການນີ້ຈະຖືກຜັນຂະຫຍາຍໃຫ້ກວ້າງຂວາງອອກໄປເລື້ອຍໆ , ຕາມເງື່ອນໄຂສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ ແລະ ແຕ່ລະໂຮງຮຽນໃນເຂດແຂວງທີ່ພວກເຮົາໄດ້ຈັດຕັ້ງການເຝິກອົບຮົມແລະ ແຈກຢາຍຕູ້ສະໝຸດໄປແລ້ວ.

ຜົນງານດັ່ງກ່າວນັ້ນໄດ້ມາຍ້ອນຄວາມບຸກບືນອອກເຫື່ອແຮງຂອງພະນັກງານຈຳນວນໜຶ່ງຂອງຫໍສະໝຸດແຫ່ງຊາດ, ຍ້ອນການປະກອບສ່ວນຮ່ວມມືຢ່າງເຕັມທີ່ຂອງພະນັກງານ,ຄູອາຈານໃນທ້ອງຖິ່ນທີ່ພວກເຮົາຈັດຕັ້ງການອົບຮົມແລະແຈກຢາຍຕູ້.

ອົງການSVAເຫັນວ່າໂຄງການນີ້ເປັນປະໂຫຍດຫລາຍໃຫ້ແກ່ການສຶກສາຂອງສປປລາວໂດຍສະເພາະກໍ່ແມ່ນຢູ່ຊົນນະບົດຫ່າງໄກສອກຫຼີກ. ໃນໂອກາດອົງການ SVA ຂໍສະແດງຄວາມຂອບໃຈນຳທ່ານນາງກົງເດືອນເນດຕະວົງຜູ້ອຳນວຍການຫໍສະໝຸດແຫ່ງຊາດ,ທັງເປັນຜູ້ຮັບຜິດຊອບຊີ້ນຳໂຄງການສົ່ງເສີມການອ່ານແຫ່ງຊາດ,ຂອບໃຈນຳພະນັກງານຫໍສະໝຸດແຫ່ງຊາດທຸກໆທ່ານ,ພະນັກງານຂັ້ນເມືອງ,ຂັ້ນແຂວງທຸກໆທ່ານແລະພະນັກງານອົງການSVAທຸກໆທ່ານທີ່ໄດ້ໃຫ້ຄວາມຮ່ວມມືປະຕິບັດໂຄງການນີ້ດ້ວຍດີຕະຫຼອດມາ.

ພິເສດຂໍຂອບໃຈນຳລັດແລະລັດຖະບານລາວທີ່ໃຫ້ການຊີ້ນຳເບິ່ງແຍງດ້ວຍດີຕະຫຼອດມາ.

# ບົດລາຍງານກ່ຽວກັບ
# ວຽກງານຫໍສະໝຸດ ແລະ ການເລົ່ານິທານເລື່ອງ ຢູ່ກໍາປູເຈຍ
# ສໍາລັບກອງປະຊຸມສໍາມະນາຢູ່ປະເທດລາວແຕ່ວັນທີ 15-18/12/2000


ບົດລາຍງານໂດຍ: **Mr Thong Sinto**
ຮອງຜູ້ອໍານວຍການຫ້ອງການແຂວງ ກອນດານ

ແປໂດຍ: ທ່ານ ອິນຕາຣີ ຄໍາພອນ
ພະນັກງານວິຊາການ ສັງກັດກົມບັນນາທິການ
ພາສາຕ່າງປະເທດຂອງວິທະຍຸກະຈາຍສຽງ ແຫ່ງຊາດ

# ບົດລາຍງານກ່ຽວກັບວຽກງານຫໍສະໝຸດ ແລະ ການເລົ່ານິທານເລື່ອງຢູ່ກໍາປູເຈຍ

## I. ການເຄື່ອນໄຫວວຽກງານຫໍສະໝຸດ:

### 1. ການເຄື່ອນໄຫວວຽກງານຫໍສະໝຸດ

ຫໍສະໝຸດແມ່ນບ່ອນຫລືສູນຮວບຮ່ວມເອກະສານ, ຄໍາພີບູຮານ, ໜັງສືສໍາລັບບໍລິການຜູ້ອ່ານ, ຜູ້ສຶກສາຄົ້ນຄວ້າຢູ່ໃນຄອບຄົວ, ສະມາຄົມ, ຢູ່ຕາມອາຄານສະຖານທີ່ສຶກສາຕ່າງໆຫລືຢູ່ຕາມອາຄານສາທາລະນະ (ເຮືອນ, ວັດວາອາຮາມ, ກະຊວງ, ພະແນກການຕ່າງໆ) ອີງຕາມການສຶກສາຄົ້ນຄວ້າຜ່ານມາເຫັນວ່າຢູ່ປະເທດກໍາປູເຈຍ ໄດ້ສ້າງຕັ້ງຫໍສະໝຸດມາເປັນເວລາດົນນານແລ້ວ (ອາດມີມາແຕ່ສະໄໝອອງໂກ) ຢູ່ຕາມທາງເຂົ້າພຣະສາດບູຮານທັງໝົດລ້ວນ ແຕ່ມີຫໍສະໝຸດສໍາລັບວາງເອກະສານ, ຕໍາລາ, ຄໍາພີບູຮານ ບັນດາເອກະສາເຫຼົ່ານັ້ນ ສ່ວນຫລາຍ ແມ່ນຍົກ ໃຫ້ເຫັນກ່ຽວກັບສາດສະໜາ, ແຕ່ວ່າພາຍຫລັງສະໄໝພະນະຄອນຮຸ່ງເຮືອງສັງຄົມຂະເມນໄດ້ຊຸດໂຊມລົງຢ່າງຮ້າຍແຮງດ້ວຍການແຊກແຊງຂອງຕ່າງປະເທດ, ບັນດາເອກະສານເຫຼົ່ານັ້ນຖືກເອົາປຸ້ນສະດົມ ແລະ ເຜົາທໍາລາຍຖິ້ມ, ຈົນຮອດສະຕະວັດທີ 19 ຢູ່ເກືອບທຸກວັດວາອາຮາມ ພຣະສົງ ແລະພຸດທະສາສະນິກະຊົນໄດ້ສ້າງ ກຸຕິສໍາລັບເກັບມ້ຽນເອກະສານ, ຄໍາພີບູຮານ, ຕໍາລາທີ່ເຂົາເຈົ້າເອີ້ນກັນວ່າ (ຫໍໄຕ).

- ໃນວັນທີ 15 ກຸມພາ 1921 ໄດ້ມີພະຣາດສະບັບຍັດອະນຸຍາດໃຫ້ມີການສ້າງຕັ້ງຫໍສະໝຸດແຫ່ງຊາດທີ່ທໍາໜ້າທີ່ບົວລະບັດປົກປັກຮັກສາທຸກໆວຽກງານທັງໝຸດເປັນພາສາຂະເມນ ແລະ ເອກະສານທີ່ຂຽນຂຶ້ນຫລືປະພັນຂຶ້ນດ້ວຍຊົນຊາດຂະແມ, ຫໍສະໝຸດແຫ່ງຊາດດັ່ງກ່າວ ໄດ້ເປີດປະຕູສູ່ສາທາລະນະຊົນໃນວັນທີ 24 ເດືອນຕຸລາ ປີ 1924. ແລ້ວມີເອກະສານຕ່າງໆ 2,879 ສະບັບ. ໃນປີ 1928 ປຶ້ມໄດ້ເພີ້ມຂຶ້ນ 10 ພັນຫົວ ,ແຂກຄົນເຂົ້າອ່ານມີຈໍານວນ 9,698 ເທື່ອຄົນ ແລະມີຜູ້ຢືມປຶ້ມໄປອ່ານ 11,152 ເທື່ອຄົນ. ທຸກໆໂຄງສ້າງສັງຄົມຂອງກໍາປູເຈຍທັງຫລາຍທັງປວງໄດ້ພັງທະລາຍຢູ່ໃນລະບອບໂປນປົດ (1975-79) ຫໍສະໝຸດແຫ່ງຊາດກໍາປູເຈຍໄດ້ປິດປະຕູອີກເທື່ອນຶ່ງໃນວັນທີ7 ມັງກອນ 1980 ແລະໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າໄວວາຈົນກະທັ້ງທຸກວັນນີ້.
- ຫໍສະໝຸດແຫ່ງຊາດໃນປະຈຸບັນຢູ່ພາຍໃຕ້ການຄຸ້ມຄອງຂອງກົມພິມປຶ້ມ ແລະ ການອ່ານທີ່ຂຶ້ນກັບກະຊວງວັດທະນາທໍາ ແລະ ວິຈິດຕະກໍາ. ສ່ວນຫໍສະໝຸດທີ່ຢູ່ຕາມໂຮງຮຽນ ແລະສາຍຕັ້ງກະຊວງສຶກສາຊາວໜຸ່ມ ແລະກິລາເປັນຜູ້ຄຸ້ມຄອງ ແລະຮັບຜິດຊອບໂດຍກົງ.

2. <u>ການເຄື່ອນໄຫວຫໍສະໝຸດຢູ່ຕາມອາຄານການສຶກສາ ແລະ ສະມາຄົມ,ວັດວາອາຮາມ ແລະ ສາທາລະນະກຳປູເຈຍ.</u>

ການເຄື່ອນໄຫວຫໍສະໝຸດທຸກວັນນີ້ຢູ່ປະເທດກຳປູເຈຍມີການເຕີບໃຫຍ່ຂະຫຍາຍຕົວເປັນທີ່ໜ້າພໍໃຈ, ຢູ່ຕາມໂຮງຮຽນທົ່ວໝົດໃນຂອບເຂດທົ່ວປະເທດ ແລະ ຢູ່ຕາມລະບົບໂຮງຮຽນຈຳນວນຫລາຍລ້ວນແຕ່ໄດ້ສ້າງຕັ້ງຫໍສະໝຸດສຳລັບນັກຮຽນ ແລະ ການຈັດຕັ້ງການອ່ານຄົ້ນຄວ້າ, ຕາມວັດວາອາຮາມເປັນຈຳນວນຫລວງຫລາຍກໍ່ມີສະຖານທີ່ເກັບມ້ຽນກຳພີໃບລານ ແລະ ເອກະສານສາດສະໜາສຳລັບພຣະສົງ ແລະ ພຸດທະສາສະນິກະຊົນໄດ້ອ່ານ ແລະ ຄົ້ນຄ້ວາເຊັ່ນກັນ. ໂດຍໄດ້ຮັບກາສະໜັບສະໜູນຈາກອົງການສາກົນຕ່າງໆ, ອົງການທີ່ບໍ່ສັງກັດລັດຖະບານຕ່າງໆ ( UNICEF,SVA,SIPAR,REDBARNA & ENFANT DU CAMBODGE ) ອາຄານສະຖານທີ່,ປື້ມແລະ ວິທີການເຮັດເຄື່ອງຫລິ້ນ ອື່ນໆຂອງເດັກນ້ອຍແມ່ນໄດ້ຮັບການສະໜັບສະໜູນເຮັດໃຫ້ຫໍສະໝຸດທັງຫລາຍໄດ້ເຄື່ອນໄຫວຢ່າງສົມບູນແບບ. ນັກຮຽນ, ນັກສຶກສາເຂົ້າອ່ານຢ່າງແຂງຂັນ, ຜູ້ສູງອາຍຸໄດ້ເຂົ້າອ່ານເປັນຈຳນວນຫລວງຫຼາຍແລະຢືມປື້ມທີ່ກ່ຽວພັນກັບປະຫວັດສາດ ແລະ ກ່ຽວພັນກັບພຸດທະສາສະໜາອື່ນໆ.

ແຂວງ-ກຳແພງກໍ່ໄດ້ມີການສ້າງຕັ້ງຫໍສະໝຸດກັນຢ່າງກວ້າງຂວາງ ເຊັ່ນ: ແຂວງຕາແກວ, ແຂວງກອນດາລ, ແຂວງບັດດອມບອງ, ນະຄອນພະນົມເປັນ, ແຂວງກອມໂປດ, ແຂວງກຳໂປງສະປື, ແຂວງໂປຊັດ ແລະ ແຂວງສະວາຍຣຽງ. ຢູ່ຕາມໂຮງຮຽນພວກເຮົາໄດ້ແບ່ງເວລາເຂົ້າຕິດຕາມນັກຮຽນ ນັກສຶກສາທົ່ວໝົດ 1 ຊົ່ວໂມງໃນ1ສັບປະດາ, ນອກນັ້ນນັກ ຮຽນຫລາຍໆຄົນ ໄດ້ເຂົ້າອ່ານຫລາຍໆເທື່ອນອກໂມງຮຽນຂອງຕົນ, ນັກຮຽນປະຖົມສ່ວນຫລາຍມັກອ່ານເລື່ອງນິທານ, ເລື່ອງນິທານພື້ນເມືອງ ຫລື ວ່າເລື່ອງຕະຫລົກປະກອບຮູບພາບ, ລັກສະນະວິທະຍາສາດ, ອານາໄມ ແລະ ອື່ນໆ, ໂຮງຮຽນຈຳນວນໜຶ່ງໄດ້ສ້າງຕັ້ງຫໍສະໝຸດກັບທີ່, ຫໍສະໝຸດເຄື່ອນທີ່. ພິເສດແມ່ນຢູ່ແຂວງຕາແກວ ແລະ ແຂວງບັດດອມບອງ, ແຂວງກອນດາລ, ນະຄອນພະນົມເປັນ, ແຂວງກອມໂປງສະປື,ແຂວງໂປຊັດ ແລະ ອື່ນໆ.

## <u>II.ການເຄື່ອນໄຫວນິທານເລື່ອງ:</u>

1. <u>ແຫລ່ງທີ່ມາຂອງເລື່ອງນິທານ.</u>

- ເລື່ອງນິທານເປັນເລື່ອງມໍລະດົກວັດທະນາທຳທີ່ໄດ້ເລົ່າສືບຕໍ່ກັນມາແຕ່ສະໄໝບູຮານ. ປະຊາຊົນກຳປູເຈຍເປັນຊົນຊາດໜຶ່ງໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ມີວັດທະນາທຳອັນເກົ່າແກ່ ແລະ ສົມບູນແບບທີ່ສຸດ. ອີງຕາມສີລາຈາລຶກທີ່ໄດ້ຄົ້ນພົບໄດ້ບົ່ງບອກວ່າຕົວໜັງສືຂະແມໄດ້ກຳເນີດເກີດຂຶ້ນມີຮູບຮ່າງຂື້ນມາແຕ່ກ່ອນສະຕະວັດທີ 6 ແລະ ຕົ້ນສະຕະວັດທີ 7 ໃນພຣະບາດວໍລະມັນ

ແຕ່ວ່ານິທານບູຮານຂະແມ ໄດ້ກຳເນີດຂຶ້ນໃນສະຕະວັດທີ ໜຶ່ງກ່ອນ ຄ. ສ ແຕ່ໃນເວລານັ້ນບໍ່ມີຕົວໜັງສືຄົນສະໄໝນັ້ນໄດ້ເລົ່ານິຍາຍຕໍ່ໆກັນມາຈົນກະທັ້ງທຸກວັນນີ້, ອີງຕາມການສຶກສາຄົ້ນຄວ້າເລື່ອງນິທານຂະແມທີ່ມີຢ່າງຫລວງຫລາຍບໍ່ອາດພັນລະນາ ແລະ ຈົດຈຳໄດ້ຖີ່ຖ້ວນ ຫລື ຮູ້ຈຳນວນອັນແນ່ນອນ ແຕ່ເຂົາສາມາດແຍກເລື່ອງເຫລົ່ານັ້ນອອກເປັນຈຳນວນດັ່ງນີ້:

1. ເລື່ອງທີ່ພົວພັນເຖິງປະຫວັດສາດ ເຊັ່ນ: ເລື່ອງ ພູທ້າວ-ພູນາງ( ນະຄອນທ້າວ-ນາງ) ເລື່ອງພູສຳເພົາ, ພູນາງກອງຣັຍ( ນາງມະໂນລາ) ແລະ ອື່ນໆ.
2. ເລື່ອງທີ່ພົວພັນເຖິງຕຸລາການ,ຕັດສິນຄະດີເຊັ່ນເລື່ອງສຸເພງຕົນສາຍ (ຊຽງໝ້ຽງ), ເລື່ອງກະເປີ (ພະຍາແຂ້) ແລະ ເລື່ອງນັກຂັບກວຽນ ແລະ ອື່ນໆ.
3. ເລື່ອງທີ່ມີການພົວພັນເຖິງຊາວປະມົງ, ຊາວລ່າເນື້ອ, ຄ້ອງສັດ, ຄ້ອງຊ້າງ ເປັນຕົ້ນ.
4. ເລື່ອງທີ່ມີການພົວພັນລະບົບລະບຽບ, ປະເພນີ, ງານດອງ (ງານສົມລົດ)ເປັນຕົ້ນ.
5. ເລື່ອງທີ່ມີການພົວພັນກັບການຫລີ້ນເຊັ່ນ: ເລື່ອງພຣະຈີນນະວົງ, ວໍຣະວົງ ແລະ ອື່ນໆ

- ບັນດາເລື່ອງເຫຼົ່ານີ້ລ້ວນແຕ່ເປັນເລື່ອງມ່ວນ ແລະ ມີສາລະປະໂຫຍດທີ່ສະແດງເຖິງຊົນຊັ້ນວັນນະ. ຄະຕີອັກສອນສາດ ແລະ ກໍ່ເປັນເລື່ອງບົ່ງບອກ ,ຊ່ວຍໃຫ້ຜູ້ອ່ານ, ຜູ້ຟັງເກີດມີສະຕິປັນຍາຈຳແນກຜິດຖືກໄດ້, ຮັບຸນຄຸນ, ຮູ້ໂທດ, ພິເສດແມ່ນຮູ້ຄະຕິທາງໂລກ ແລະ ທາງທຳທີ່ເຮັດໃຫ້ເຂົານຳໄປສືບຕໍ່ປະຕິບັດໃຊ້ໃນຊີວິດປະຈຳວັນ ກໍ່ຄືໃນອານາຄົດອີກດ້ວຍ. ສະເພາະເດັກການເລົ່ານິທານເລື່ອງແມ່ນພາໃຫ້ເດັກພາກພູມໃຈ, ເບີກບານມ່ວນຊື່ນ, ດຶງດູດເຂົາເຈົ້າ, ເຮັດໃຫ້ ເຂົາເຈົ້າເຫລົ່ານັ້ນຢາກຮູ້ຢາກເຫັນແລ້ວເກີດມີແນວຄິດຢາກອ່ານປຶ້ມດ້ວຍຕົນເອງ ແລະ ກໍ່ເປັນສ່ວນໜຶ່ງຈະຕ້ອງປະຕິບັດ ຫລື ສະແດງ ຄວາມສາມາດທັງ 4 ປະການ ຂອງເດັກນ້ອຍ, ໃນການຮຽນພາສາຄືຄວາມສາມາດໃນການເວົ້າ, ອ່ານ, ຟັງ ແລະ ຂຽນເດັກນ້ອຍເຫລົ່ານັ້ນອາດກຳນົດໄດ້ວ່ານິທານພື້ນເມືອງຫລືການເລົ່ານິທານຂະແມ ມີແຫລ່ງທີ່ມາໃຫຍ່ຫລວງ 3 ປະການໃຫຍ່ຄື:

1. ແຫລ່ງທີ່ມາຈາກວັດທະນາທຳຕົ້ນສະຕະວັດທີ ໜຶ່ງກ່ອນຄ. ສ
2. ແຫລ່ງທີ່ມາຈາກວັດວາອາຮາມ, ພຣະພຸດທະສາດສະໜາ

- ຕາມພຣະສົງນິມົນໄປສະແດງທຳສາດສະໜາ
- ວັດວາອາຮາມບ່ອນທີ່ຝຶກອົບຮົມວິຊາຊີບ. ສະໄໝກ່ອນຢູ່ປະເທດກຳປູເຈຍ ທັງທາງໂລກ ແລະທາງທຳລ້ວນແລ້ວແຕ່ອອກມາຈາກວັດທັງໝົດ.

3. ເລື່ອງນິທານພື້ນເມືອງຂະແມກຳເນີດມາຈາກແຫລ່ງປະຊາຊົນເປັນການເລົ່າສູ່ກັນຟັງ ອາດຈະເປັນບຸກຄົນຫລືກຸ່ມຢູ່ຕາມບ່ອນຊື້ຂາຍ,ລ່າເນື້ອ, ການປະກອບອາຊີບກະສິກຳ ແລະ ອື່ນໆ.

## 2. ການເຄື່ອນໄຫວນິທານເລື່ອງຢູ່ກຳປູເຈຍໃນປະຈຸບັນ.

- ໂດຍອີງຕາມຄວາມຮຽກຮ້ອງຕ້ອງການອັນຮີບດ່ວນໃນຄວາມໝາຍຍົກສະຕິພົນລະເມືອງ, ຄູກໍ່ຄືນັກຮຽນ ນັກສຶກສາໃຫ້ນັບມື້ນັບດີຂຶ້ນຕື່ມ ອາດີດອົງການ ( JSRC) ປະຈຸບັນຄືອົງການອາສາສະໝັກສັນຕິ ( SVA )ໄດ້ຮ່ວມກັບກະຊວງສຶກສາຊາວໜຸ່ມ ແລະ ກິລາ ກຳປູເຈຍ ໄດ້ກະກຽມ ເປີດຫໍສະໝຸດຢູ່ຕາມໂຮງຮຽນຕ່າງໆ ແລະ ໄດ້ສ້າງຕັ້ງຫໍສະໝຸດເຄື່ອນທີ່ໃນປີ 1993 ຢູ່ທີ່ໂຮງຮຽນ ໃນແຂວງບັດດອມບອງ, ຕາແກວ, ກອນດາລ, ນະຄອນຫລວງພະນົມເປັນ, ແຂວງກຳໂປງສະນັງ ແລະ ແຫລ່ງອື່ນໆ ໂດຍມີຈຸດປະສົງຍົກລະດັບຄວາມຮູ້ຄວາມສາມາດ ແລະ ຄວາມຮູ້ຄຸນຄ່າ ທາງດ້ານວັດທະນາທຳໃຫ້ແກ່ເດັກນ້ອຍ, ຊ່ວຍສົ່ງເສີມຍົກລະດັບການອ່ານປຶ້ມ ເຮັດໃຫ້ເລື່ອງນິທານ, ນິທານພື້ນເມືອງຂະແມຟື້ນຄືນມາ, ຊ່ວຍໃຫ້ເດັກຮູ້ຮຽນດ້ວຍຕົນເອງ, ຮູ້ຮັກການສຶກສາ, ຮູ້ຮັກມູນມໍລະດົກ ວັດທະນາທຳຂອງຊາດ ແລະ ເຮັດໃຫ້ທຸກພາກສ່ວນເຂົ້າຮ່ວມໃນວຽກງານສຶກສາຊາວໜຸ່ມ ແລະ ກິລາ.

-ການເຄື່ອນໄຫວດ້ານຫໍສະໝຸດແລະການເລົ່ານິທານຢູ່ກຳປູເຈຍໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງກວ້າງຂວາງ,ນັບແຕ່ປີ 1994-1995,ຄູສອນພະນັກງານຫ້ອງສະໝຸດ,ພະສົງແລະປະຊາຊົນທົ່ວໄປໄດ້ເຂົ້າໃຈແຈ້ງກ່ຽວກັບຄວາມສຳຄັນໃນນິທານເລື່ອງ,ເຂົາເຈົ້າເຂົ້າໃຈແຈ້ງແລະຂໍອາສາເຂົ້າຮ່ວມກິດຈະກຳໃນການເຄື່ອນໄຫວການເລົ່ານິທານເລື່ອງຢ່າງຫລວງຫລາຍ,ຈະຢູ່ຕາມໂຮງຮຽນ,ຮົ່ມໄມ້,ວັດວາອາຮາມແມ້ແຕ່ຢູ່ຕາມສະຖານທີ່ພັກເຊົາກໍ່ຕາມ.ວິທີການເລົ່າເລື່ອງຂອງເຂົາເຈົ້າແມ່ນມີຫຼາຍຮູບແບບທີ່ແຕກຕ່າງກັນເຊັ່ນ:

-ເລົ່ານິທານດ້ວຍວິທີໃຊ້ປຶ້ມ
-ເລົ່ານິທານປາກເປົ່າ ( ໂດຍໃຊ້ນ້ຳສຽງ,ສີໜ້າແລະການເຄື່ອນໄຫວ)
-ເລົ່ານິທານດ້ວຍການໃຊ້ຮູບພາບປະກອບ
-ເລົ່ານິທານດ້ວຍການໃຊ້ຕຸກກະຕາ,ຕຸກກະຕາເຈ້ຍ ຫຼື ເປັນຮູບ
-ສ້າງລະຄອນສາກສັ້ນໆ,ສາກຕະລົກ ແລະອື່ນໆ

-ປະຈຸບັນເຮົາໄດ້ນຳເລື່ອງຂອງຕ່າງປະເທດເປັນຈຳນວນຫລວງຫລາຍເຂົ້າມາ,ເພື່ອບໍລິການໃນໂຮງຮຽນ,ເຊິ່ງມີເລື່ອງມາຈາກປະເທດຍີ່ປຸ່ນ,ລາວ,ໄທ,ຈີນແລະເລື່ອງພູມມີປະເທດອີກຈຳນວນໜຶ່ງ.ເລື່ອງນິທານພື້ນເມືອງກໍ່ຄືເລື່ອງນິທານຕ່າງໆມັນບໍ່ພຽງແຕ່ສຳລັບຜູ້ເຖົ້າຜູ້ແກ່ເທົ່ານັ້ນ,ແຕ່ທຸກວັນນີ້ເດັກນ້ອຍອາຍຸ 5-12 ປີກໍ່ຮູ້ເລົ່ານິທານເລື່ອງດ້ວຍໃບໜ້າຍິ້ມແຍ້ມແຈ່ມໃສເຊັ່ນກັນ.

-ໝາກຜົນທີ່ເຮົາໄດ້ຮັບຄືນັບແຕ່ປີ 1994ຕະຫຼອດຮອດປີການສຶກສາໃໝ່ປີ 2000-2001ອັດຕາການເຂົ້າຮຽນຂອງເດັກໄດ້ເພີ້ມຂື້ນແລະຂະຫຍາຍຕົວເປັນກ້າວໆໃນທົ່ວທຸກແຫ່ງ.ອັດຕາການຄ້າງ

ຫ້ອງແລະອັດຕາການປະລະການຮຽນນັບມື້ລຸດໜ້ອຍຖອຍລົງ. ສ່ວນເລື່ອງນິທານແລະການເລົ່ານິທານໃນທຸກຮູບແບບແມ່ນນັບມື້ນັບຂະຫຍາຍຕົວ, ນັບແຕ່ເດັກນ້ອຍຕະຫຼອດເຖິງຜູ້ເຖົ້າຜູ້ແກ່ແລະພະສົງ

3. ການຮຽບຮຽງແລະການປະພັນບົດຫຼືປື້ມນິທານ

ໃນຊຸມປີຜ່ານມາໂດຍມີການປະສານງານອັນດີລະຫວ່າງກະຊວງສຶກສາຊາວໜຸ່ມແລະກິລາແລະອົງການອາສາສະມັກສັນຕິ ( SVA )ພວກເຮົາໄດ້ຈັດກອງປະຊຸມສຳມະນາເພື່ອອົບຮົບພະນັກງານຫ້ອງສະໝຸດ, ທັງການເລົ່ານິທານ, ການສອບເສັງຂຽນບົດເລື່ອງ, ລະຄອນຮູບແລະການຂຽນເລື່ອງນິທານຕ່າງໆ, ລ້ວນແລ້ວແຕ່ໄດ້ຮັບຜົນໃນລະດັບສູງ, ນັບຕັ້ງແຕ່ຖັນແຖວຂອງນັກຮຽນ, ນັກສຶກສາ, ພະນັກງານຫ້ອງສະໝຸດແລະຄູສອນ. ມາຮອດປະຈຸບັນນີ້ພວກເຮົາໄດ້ລັດເລືອກເອົາເລື້ອງໃໝ່ເຊິ່ງເປັນຮ້ອຍໆເລື່ອງແລະຢູ່ໃນການກວດແກ້ແລະກຽມພິມ, ພິມໂດຍກະຊວງສຶກສາຊາວໜຸ່ມແລະກິລາແລະອົງການສາກົນຕ່າງໆ, ພິມລະຄອນເຈັ້ຍໄດ້ຈຳນວນ 15 ເລື່ອງລວມທັງໝົດ 4.500ແຜ່ນ. ແລະອຸປະກອນຮັບໃຊ້ຫ້ອງສະໝຸດ, ຫໍສະໝຸດເຄື່ອນທີ່ແລະນິທານເລື່ອງ.

4. ການຝຶກອົບຮົມໃຫ້ແກ່ຄູແລະການເປີດສຳມະນາວ່າດ້ວຍການເຄື່ອນໄຫວຫໍສະໝຸດແລະການເລົ່ານິທານ

- ເພື່ອໃຫ້ຜູ້ເຂົ້າສຳມະນາ ຫຼືພະນັກງານຫໍສະໝຸດແລະຜູ້ເລົ່ານິທານໄດ້ເຂົ້າໃຈແຈ້ງຕໍ່ຈຸດປະສົງ, ຈາກຜົນປະໂຫຍດແລະວິທີການຄຸ້ມຄອງຫໍສະໝຸດແລະຍຸດທະວິທີໃນການເລົ່ານິທານ. ທາງກະຊວງໄດ້ສົມທົບກັບອົງການ SVA ເປີດຊຸດອົບຮົມໃນຮູບແບບຕ່າງໆໃຫ້ແກ່ຄູ, ພະນັກງານຫໍສະໝຸດແລະນັກເລົ່ານິທານ(ບຳລຸງໄລຍະສັ້ນ)ເປີດຊຸດສຳມະນາເຜີຍແຜ່ການເຄື່ອນໄຫວຫໍສະໝຸດແລະການເລົ່ານິທານ, ລົງທັດສະນະສຶກສາແລະແລກປ່ຽນບົດຮຽນນຳຫ້ອງສະໝຸດແຫ່ງຕ່າງໆ (ຈາກຫ້ອງສະໝຸດໜຶ່ງໄປຫາຫ້ອງສະໝຸດໜຶ່ງ) ຈາກໂຮງຮຽນໜຶ່ງໄປຫາໂຮງຮຽນໜຶ່ງ, ຈາກແຂວງໜຶ່ງໄປຫາອີກແຂວງໜຶ່ງ, ໂດຍໄດ້ເຄື່ອນໄຫວຫລາຍຕົບຫລາຍຕ່າວໃນພາກປະຕິບັດຕົວຈິງ.

- ບັນດານັກສຳມະນາກອນລະດັບສາກົນ, ກະຊວງ, ແຂວງ, ກຳແພງ, ເມືອງ, ວິຊາການໄດ້ຈັດສຳມະນາ 84 ເທື່ອ. ຄິດສະເລ່ຍຜູ້ເຂົ້າຮ່ວມປະມານ 6.720 ຄົນ.

-ການລົງໄປທັດສະນະສຶກສາ ໃກ້ແລະໄກ (ສູນກາງຫາທ້ອງຖິ່ນ) 7ເທື່ອ, ມີຜູ້ເຂົ້າຮ່ວມ 420ຄົນ

5. ສິ່ງຈູງໃຈຂອງເດັກກຳປູເຈຍສ່ວນຫລາຍແມ່ນນິທານ

- ຕາມການຕິດຕາມຜ່ານມາເຫັນວ່າເດັກນ້ອຍກຳປູເຈຍສ່ວນຫລາຍມັກໄປເບິ່ງລະຄອນເລື່ອງທີ່ມີລັກສະນະເປັນລະຄອນຕຸກກະຕາ ຫຼື ໜັງຕຸກກະຕາ, ສັງເກດເຫັນວ່າເວລາໂທລະພາບສາຍເລື່ອງທີ່ມີໂຕກະຕຸນ ເດັກນ້ອຍ 50%ແມ່ນຢຸດການຫລິ້ນເພື່ອໄປເບິ່ງລາຍການກະຕຸນ ,ແລະໃນເວລາທີ່ມີຜູ້ແທນລາວ-ໄທໄປສະແດງລະຄອນຕຸກກະຕາຢູ່ກຳປູເຈຍນັ້ນ, ພວກເຮົາກໍ່ສັງເກດເຫັນວ່າເດັກສ່ວນຫລາຍມັກລະຄອນຕຸກກະຕາເຫລົ່ານັ້ນເຊັ່ນກັນ, ໃນຂະນະທີ່ພະນັກງານພວກເຮົາໃຊ້ລະຄອນເຈ້ຍສະ

ແດງເດັກກໍ່ມັກເບິ່ງ. ພວກເຮົາຖືວ່າມັນເປັນອາຫານຕາອາລົມແຈ່ມໃສແລະມີຊີວິດຊີວາໄປພ້ອມໆກັບລີລາການເວົ້າຂອງຕົວລະຄອນແຕ່ລະຕົວ. ຢູ່ໃນກຳປູເຈຍການຮຽບຮຽງເລື່ອງນິທານເປັນລັກສະນະຕຸກກະຕາບໍ່ທັນໄດ້ດຳເນີນການໄດ້ດີເທື່ອດ້ວຍສາເຫດມາຈາກການຂາດເຂີນທາງດ້ານງົບປະມານແລະວິທີການສະແດງແລະອຸປະກອນຮັບໃຊ້ຕ່າງໆ ນອກຈາກລະຄອນຕຸກກະຕາເດັກກຳປູເຈຍຍັງສົນໃຈອ່ານປຶ້ມເລື່ອງທີ່ມີການພົວພັນກັບສັດທີ່ເປັນຕົວລະຄອນເຊັ່ນເລື່ອງສຸເພຽຕົນສາຍ(ເລື່ອງຊຽງມ້ຽງ), ເລື່ອງແຂ້ລືມຄຸນ, ເລື່ອງສິງ, ໝາຈອກແລະໝາປ່າ, ເລື່ອງໝາຈອກແລະກຸ້ງແລະອື່ນໆ ເລື່ອງເຫລົ່ານັ້ນລ້ວນແຕ່ເປັນເລື່ອງທີ່ມີອາລົມຈິດແຈ່ມໃສ, ເບີກບານມີຊີວິດຊີວາແລະສຶກສາໄປໃນຕົວ, ເວລາຈົບກໍ່ສາມາດຕີລາຄາເນື້ອເລື່ອງໄດ້ຢ່າງຖືກຕ້ອງ.

## III. ການຕີລາຄາ:

ດ້ານການວິນິໄສ, ຫໍສະໝຸດແລະການນິທານເລື່ອງຢູ່ກຳປູເຈຍໃນໄລຍະເກືອບ10ປີຜ່ານມາ ເຫັນວ່າມີການເຕີບໃຫຍ່ຂະຫຍາຍຕົວເປັນທີ່ໜ້າພໍໃຈ, ທຸກໆແຜນການຂອງໂຮງຮຽນລ້ວນແຕ່ມີຫ້ອງສະໝຸດປະຈຳ, ຄູສອນແລະປະຊາຊົນເປັນຈຳນວນຫລວງຫລາຍໄດ້ເຂົ້າຮ່ວມໃນການເລົ່ານິທານຢ່າງຕໍ່ເນື່ອງ, ພຽງແຕ່ຜົນໄດ້ຮັບຍັງບໍ່ທັນມີລັກສະນະເທົ່າທຽມກັນ, ບາງທ່ານກໍ່ມີປະສົບການດ້ານສຽງ, ບາງທ່ານກໍ່ມີປະສົບການຈຳກັດ, ແຕ່ພວກເຮົາຫວັງວ່າໃນອານາຄົດເຂົາເຈົ້າເຫຼົ່ານັ້ນຈະກາຍເປັນຜູ້ທີ່ມີຄວາມສຳນິສຳນານ, ແລ້ວເລື່ອງນິທານພື້ນເມືອງປະສົມປະສານກັບເລື່ອງຕ່າງປະເທດຈຳນວນໜຶ່ງຈະສືບຕໍ່ເສີມຂະຫຍາຍໄປທຸກສາລະທິດໃນປະເທດກຳປູເຈຍ, ຄຽງຄູ່ກັນນັ້ນພວກເຮົາກໍ່ຍັງມີຄວາມຫຍຸ້ງຍາກບາງປະການເຊິ່ງຕ້ອງໄດ້ຮັບການແກ້ໄຂ ເຊັ່ນວ່າການກະກຽມສ້າງລະຄອນຫຸ່ນຕຸກກະຕາ ການພິມປຶ້ມເລື່ອງສັ້ນ, ວິທີການດ້ານນະໂຍບາຍຕໍ່ພະນັກງານຫໍສະໝຸດເຄື່ອນທີ່ໆລົງໄປເຜີຍແຜ່ທຸກໆແຫ່ງແລະສິ່ງຊຸກຍູ້ດ້ານນ້ຳໃຈ, ຕໍ່ພະນັກງານຫໍສະໝຸດເຄື່ອນທີ່, ທີ່ມີຜົນງານດີເດັ່ນໃນການປະຕິບັດວຽກງານການເລົ່ານິທານໄດ້ດີ.

# ບົດລາຍງານກ່ຽວກັບ

## ພຣະຣາຊະອານາຈັກກຳປູເຈຍ
## ຊາດ- ສາດສະໜາ-ພຣະມະຫາກະສັດ

ບົດລາຍງານໂດຍ : Mr Nath Bunroeun
ຜູ້ອຳນວຍການກົມສ້າງກໍ່ສ້າງຄູ,ກະຊວງສຶກສາຊາວໜຸ່ມແລະກິລາ

ແປໂດຍ: ທ່ານ ອິນຕູີ ຄຳພອນ
ພະນັກງານວິຊາການ ສັງກັດກົມບັນນາທິການ
ພາສາຕ່າງປະເທດຂອງວິທະຍຸກະຈາຍສຽງແຫ່ງຊາດ

24/VII
ຫ້າມຈຳໜ່າຍ

พระราຊະອານາຈັກກຳປູເຈຍ

ຊາດ - ສາດສະໜາ - ພຣະມະຫາກະສັດ

---

1. ສະພາບລວມ:

- ປະເທດກຳປູເຈຍເປັນປະເທດໜຶ່ງທີ່ຕັ້ງຢູ່ພາກພື້ນອາຊີຕາເວັນອອກສຽງໃຕ້, ເຊິ່ງມີຊາຍແດນຕິດຈອດກັບປະເທດຫວຽດນາມ, ລາວ, ໄທ ແລະອາວໄທທີ່ມີຊາຍທະເລຍາວເຖິງ 440 km, ປະເທດກຳປູເຈຍມີເນື້ອທີ່ທັງໝົດ 181,035 km (ກິໂລແມັດກະເຣ). ຄືປະມານ $^1/_3$ ຂອງປະເທດໄທ ຫລື ເທົ່າກັບ 293 ເທື່ອຂອງປະເທດສິງກະໂປ.
- ຕັ້ງຢູ່ລະຫວ່າງກາງຂອງເສັ້ນຂະໜານເໜືອແລະເສັ້ນແວ່ງ, ປະເທດກຳປູເຈຍມີພູມມີອາກາດຮ້ອນ,ຊຸ່ມ. ມີອຸນະພູມສະເລ່ຍປະຈຳປີ 28,5 C, ມີສອງລະດູທີ່ແຕກຕ່າງກັນຄື: ລະດູແລ້ງແລະລະດູຝົນ, ລະດູຝົນມີ 6 ເດືອນ ຄື ນັບແຕ່ເດືອນພະຈິກ ຫາເດືອນເມສາ ສ່ວນລະດູຝົນກໍ່ມີ 6 ເດືອນ ເຊິ່ງມີຝົນຕົກແຮງ,ລົມ ຄື ເລີ້ມແຕ່ເດືອນພຶດສະພາ ຫາເດືອນ ຕຸລາ.
- ປະເທດກຳປູເຈຍໄດ້ແຍກອອກເປັນ 20 ແຂວງ, ແລະມີ 4 ຕົວເມືອງໃຫຍ່ ເຊິ່ງເມືອງຫລວງຊື່ວ່າ ພະນົມເປັນ, ນະຄອນຫລວງພຣະສີຫະນຸ, ນະຄອນຫລວງແກບ, ແລະນະຄອນຫລວງໄປຫລິນ, ພະນົມເປັນຊາສະຖານີ ມີປະຊາຊົນປະມານໜຶ່ງລ້ານ. ເຊິ່ງແບ່ງອອກເປັນ7ຕົວເມືອງ,ແລະໃນ7ຕົວເມືອງນັ້ນແມ່ນຂຶ້ນກັບຣາສະຖານີພະນົມ ເປັນ.
- ຕາມການສຳຫລວດພົນລະເມືອງໃນເດືອນມີນາປີ 1998, ປະເທດກຳປູເຈຍມີປະຊາກອນຈຳນວນ 11,5 ລ້ານຄົນ. ໃນຈຳນວນນີ້ມີຜູ້ຍິງເຖິງ 51,78 %, ໂດຍທົ່ວໄປແລ້ວປະຊາຊົນຂະເໝນສ່ວນໃຫຍ່ປະກອບອາຊີບ ກະສິກຳ, ອາໄສຢູ່ຕາມຊົນນະບົດ. ສ່ວນຜູ້ທີ່ອາໄສຢູ່ຕາມເຂດຕົວເມືອງນັ້ນ ມີພຽງແຕ່ 15,7 % ເທົ່ານັ້ນ. ສະນັ້ນອັດຕາການເກີດຂອງປະຊາກອນປະຈຳປີສະເລ່ຍແລ້ວມີປະມານ 2,5%. ອັດຕານີ້ອາດຈະເຮັດໃຫ້ປະຊາຊົນເພີ້ມຂຶ້ນ 2ເທົ່າຕົວໃນໄລຍະບໍ່ຮອດ 30 ປີ.
- ຕາມສະຖິຕິຈຳນວນເດັກນ້ອຍອາຍຸແຕ່ 0 ປີ ຫາ 17 ປີ ຍັງບໍ່ທັນຮອດ 18 ປີ ມີເຖິງ 50,5 %, ໃນຈຳນວນປະຊາກອນທັງໝົດ. ສ່ວນປະຊາກອນທີ່ສາມາດປະກອບອາຊີບໄດ້ ແຕ່ອາຍຸ 18 ປີຫາ 60 ປີ ມີພຽງແຕ່ 44,1% ເທົ່ານັ້ນ ໃນຈຳນວນປະຊາກອນໃນທົ່ວປະເທດ.

2. <u>ສະພາບປະຈຸບັນໃນການສຶກສາອົບຮົມຢູ່ໃນປະເທດກຳປູເຈຍ:</u>

- ຊັ້ນປະຖົມສຶກສາ ເປັນແຫລ່ງສຶກສາຂັ້ນທຳອິດຂອງລະບົບການສຶກສາຢູ່ໃນປະເທດ ກຳປູເຈຍ, ໃນຕົ້ນປີ 1979 ໂຮງຮຽນ ຈຶ່ງໄດ້ເລີ້ມດຳເນີນການຟື້ນຄືນໃຫມ່, ພາຍຫລັງທີ່ຖືກທຳລາຍມ້າງເພທມົດກົກເຫງົ້າທີ່ນະຄອນຂະເມນແດງ, ການທີ່ເປີດໃຫ້ມີການຮຳຮຽນຄືນໃຫມ່, ມັນເປັນການດຳເນີນເລີ້ມຕົ້ນລະບົບຫນຶ່ງທີ່ບໍ່ມີຫຍັງເລີຍ, ແຕ່ດ້ວຍການ ບຸກເບີກຂອງປະຊາຊົນ, ອຳນາດການປົກຄອງ ລວມທັງກະຊວງສຶກສາ ປະສານງານ ກັນທຸກສິ່ງຢ່າງຈຶ່ງໄດ້ສ້າງຂຶ້ນເປັນກ້າວ ໆ ຈົນໄດ້ຮັບຜົນສຳເລັດໃນລະບົບການສຶກສາ ອົບຮົມ.
- ມາຮອດປີ 1998-1999 ໂຮງຮຽນອະນຸບານສຶກສາ ມີເຖິງ 808 ແຫ່ງດ້ວຍກັນ, ໃນນັ້ນມີຫ້ອງຮຽນ 1,414 ຫ້ອງ. ມີເດັກເຂົ້າຮຽນເຖິງ 45,068 ຄົນ, ແລະມີຄູສອນ 1,793ຄົນ. ສ່ວນຊັ້ນປະຖົມສຶກສາມີ 5,156 ແຫ່ງ, ມີຫ້ອງຮຽນ 48,370 ຫ້ອງ, ມີນັກຮຽນ 127,247 ຄົນ. ແລະມີຄູສອນ 8,114 ຄົນ. ຂັ້ນມະທາວິທະຍາໄລມີຈຳນວນເຖິງ 132 ແຫ່ງ, ມີຫ້ອງຮຽນ 4,257 ຫ້ອງ, ມີນັກຮຽນ 180,920 ຄົນ, ແລະມີຄູສອນ 9,210 ຄົນ. ໂຮງຮຽນວິຊາຊີບມີ 31 ແຫ່ງ, ມີນັກສຶກສາ 6,011 ຄົນ, ແລະຂັ້ນອຸດົມສຶກສາ 9 ແຫ່ງ, ມີນັກສຶກສາຈຳນວນ 7,122 ຄົນ. ບຸກຄະລາກອນທີ່ສຶກສາໃນທົ່ວປະເທດມີ 86,652 ຄົນ, ແລະໃນນັ້ນມີຍິງ 29,934 ຄົນ.
- ການປ່ຽນແປງທາງດ້ານນະໂຍບາຍ ແລະສັງຄົມເສດຖະກິດ ໄດ້ກຳນົດໃຫ້ມີການດັດແກ້ລະບົບການສຶກສາຢ່າງຕໍ່ເນື່ອງ. ກະຊວງສຶກສາຊາວຫນຸ່ມ ແລະກິລາໄດ້ດັດແກ້ລະບົບການສຶກສາຕາມແຜນຕຳລາການສຶກສາໃຫມ່ຢ່າງຕໍ່ເນື່ອງ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ບັນດາຄູ ທີ່ຍັງບໍ່ທັນໄດ້ມາດຖານ, ເພື່ອໄປປະຕິບັດລະບົບການສຶກສາ12 ປີ ຄື (6+3+3), ລະບົບການສຶກສາໃຫມ່ໄດ້ເພີ່ມໂມງສຶກສາສຳລັບທຸກລະດັບຫ້ອງຢູ່ໃນຊັ້ນປະຖົມສຶກສາ.
- ວິທີການສຶກສາຕົວຈິງຂອງນັກຮຽນຊັ້ນປະຖົມສຶກສາ, ຈຸດປະສົງເພື່ອສຶກສາໃຫ້ນັກຮຽນໄດ້ຮຽນຮູ້ກ່ຽວກັບ

  2.1. ຮູ້ຈັກພັດທະນາບຸຄະລິກະພາບຂອງຕົນໃຫ້ສອດຄ່ອງກັບສັງຄົມ.

  2.2. ໃຫ້ສາມາດໃຊ້ພາສາຂະເຫມນ ເຊິ່ງເປັນພາສາປະຈຳຊາດໃຫ້ໄດ້ຢ່າງຖືກຕ້ອງ.

  2.3. ໃຫ້ມີແນວຄິດຂັ້ນພື້ນຖານໃນດ້ານຄະນິດສາດ ແລະວິທະຍາສາດ, ເທັກໂນໂລຊີ.

  2.4. ໃຫ້ຮູ້ຈັກຮັກສາອະນາໄມ, ແລະຮັກສາສຸຂະພາບໃຫ້ດີ.

  2.5. ໃຫ້ຮູ້ຈັກວິພາກ ຫລືຈຳແນກເຫດແລະຜົນ, ອອກຄຳຄິດເຫັນ, ຮູ້ຈັກແກ້ໄຂບັນຫາ

ທັງຂອງຕົນແລະຄອບຄົວ.

2.6. ມີກິລິຍາມາລະຍາດອ່ອນໂຍນ, ແລະຮູ້ຈັກໃຊ້ໃຫ້ຖືກຕາມກາລະເວລາຂອງມະນຸດຊາດແລະປະເພນີອັນດີງາມຂອງປະເທດກຳປູເຈຍ, ຄົບຣົບສິດທິມະນຸດ ເພື່ອໃຫ້ເກີດປະໂຫຍດຕໍ່ຂອງຕົນແລະຜູ້ອື່ນ.

2.7. ໃຫ້ຮູ້ຈັກເສີມຂະຫຍາຍຄຸນນະສົມບັດຂອງຕົນ, ເຄົາຣົບຕົນເອງ, ແລະໃຫ້ຄວາມໄວ້ເນື້ອເຊື່ອໃຈຕົນເອງ, ເຂົ້າໃຈການສຶກສາເປັນສິ່ງສຳຄັນ ແລະພູມໃຈໃນຊາດຂອງຕົນເປັນປະຈຳ.

2.8. ໃຫ້ຮັກການອອກແຮງງານ, ສາມາດເຮັດວຽກຮ່ວມກັບຜູ້ອື່ນໃຫ້ສຳເລັດດ້ວຍດີ.

2.9. ໃຫ້ຮັບຮູ້ໃນການພັນແປຂອງສັງຄົມ ແລະສາມາດເຮັດໃຫ້ສຳເລັດໃນໜ້າທີ່ວຽກງານທີ່ຖືກມອບໝາຍຂອງການຈັດຕັ້ງຂອງຕົນ.

2.10. ໃຫ້ຮູ້ຈັກຖະນຸຖະໜອມ ປົກປັກຮັກສາບໍລິເວນສະຖານທີ່ ສິລະປະວັດທະນາທຳຢູ່ໃນການຈັດຕັ້ງຂອງຕົນ ໃຫ້ຍືນຍົງຕລອດໄປ.

3. <u>ສະພາບວຽກງານຫໍສະໝຸດແລະເລື່ອງນິທານ:</u>

- ນິທານແມ່ນມູນມໍລະດົກທາງວັດທະນະທຳອັນລ້ຳຄ່າຢ່າງໜຶ່ງ, ທີ່ມີການເລົ່າສືບຕໍ່ກັນມາຕັ້ງແຕ່ສະໄໝບູຮານນະການ ເຖິງປະຈຸບັນນີ້. ດັ່ງນັ້ນຜູ້ເຖົ້າຜູ້ແກ່ທຸກຍຸກທຸກສະໄໝ ຈຶ່ງມີການເລົ່ານິທານໃຫ້ເດັກຟັງ. ໂດຍສະເພາະພິເສດແມ່ຄູສອນຢູ່ຕາມໂຮງຮຽນອະນຸບານສຶກສາ ແລະປະຖົມສຶກສາ, ແລະບໍ່ມີເດັກນ້ອຍຜູ້ໃດດອກທີ່ບໍ່ມັກຟັງນິທານ. ເພາະຜ່ານການຮັບຟັງນິທານແລ້ວ ເດັກຈະໄດ້ຄວາມຮູ້ຢ່າງກວ້າງຂວາງ ບໍ່ວ່າຈະເປັນທາງດ້ານອາດີດຕະການ ຫລືອານາຄົດຕະການ ລວມທັງປະເທດຕ່າງ ໆ ອີກຢ່າງຫລວງຫລາຍ. ດັ່ງນັ້ນນິທານບໍ່ພຽງແຕ່ເຮັດໃຫ້ເດັກມີຄວາມເບີກບານມ່ວນຊື່ນເທົ່ານັ້ນ, ແລະຍັງເປັນການສຶກສາຂັ້ນພື້ນຖານ ເພື່ອອົບຮົມເດັກໄປໃນຕົວອີກດ້ວຍ.
- ແລະນອກຈາກນັ້ນ ນິທານບໍ່ແມ່ນພຽງແຕ່ສັ່ງສອນ ຫລືເຮັດໃຫ້ເດັກຈື່ຈຳເລື່ອງໄດ້ເທົ່ານັ້ນ, ຂໍ້ສຳຄັນແມ່ນຕ້ອງໃຫ້ເດັກມ່ວນ,ປະທັບໃຈ, ແລະຊ່ວຍພັດທະນາດ້ານຄວາມຄິດສະຕິປັນຍາ,ພາສາຂອງເດັກນຳ.
- ໂດຍທີ່ເຮົາຫລິ້ງເຫັນເຖິງຄວາມສຳຄັນດັ່ງທີ່ໄດ້ກ່າວມານັ້ນ, ທາງກະຊວງສຶກສາຊາວໜຸ່ມແລະກິລາຈຶ່ງໄດ້ມີການສ້າງຫໍສະໝຸດຂຶ້ນມາແລະມີການຈັດລະບົບການເລົ່ານິທານເຂົ້າໃນການສຶກສາ. ດັ່ງນັ້ນຈຶ່ງເຮັດໃຫ້ຂະບວນການພັດທະນາເດັກ ນັບມື້ນັບມີ

ການຂະຫຍາຍຕົວຂຶ້ນຢ່າງກວ້າງຂວາງທົ່ວທຸກທົ່ນແຫ່ງ ໃນທົ່ວປະເທດ. ໂດຍສະເພາະແມ່ນ ທາງອົງການ JSRC (Japan Sotoshu Relief Committee) ປະຈຸບັນນີ້ໄດ້ປ່ຽນຊື່ໃຫມ່ເປັນ SVA (Shanti Volunteer Association) ເຊິ່ງໄດ້ຊ່ວຍອຸປະຖໍາກະຊວງສຶກສາ ເພື່ອດໍາເນີນການເພື່ອຍົກລະດັບພະນັກງານຫໍສະຫມຸດ ແລະຜູ້ທີ່ຈະເລົ່າ ໂດຍຜ່ານກອງປະຊຸມສໍາມະນາດເຝິກອົບຮົມ ພ້ອມທັງມີການແຂ່ງຂັນຄັດເລືອກນັກເລົ່ານິທານເລື້ອງດີເດັ່ນ ຢູ່ຕາມໂຮງຮຽນ, ພາຍໃນແຂວງກໍາແພງນະຄອນ. ແລະນອກຈາກທີ່ອົງການ SVA ໄດ້ຊ່ວຍສ້າງຫໍສະຫມຸດແລ້ວ, ຍັງມີຫ້ອງສະຫມຸດເຄື່ອນທີ່ອີກ, ພ້ອມທັງມີການພິມປຶ້ມນິທານເພື່ອແຈກຍາຍໃຫ້ພາຍໃນກໍາແພງແລະຕ່າງແຂວງ,ເພື່ອເຮັດໃຫ້ວຽກງານທີ່ໄດ້ກ່າວມາຂ້າງເທິງໄດ້ຮັບຜົນດີ.

- ຢູ່ທາງໂຮງຮຽນສ້າງຄູ ແລະທີ່ທໍາການຂອງແຂວງ,ກໍາແພງ, ກະຊວງໄດ້ສ້າງຂະບວນການພິເສດສໍາລັບນັກສຶກສາສ້າງຄູດ້ວຍຮູບການແບບນໍາເອົາວິທີການຫ້ອງສະຫມຸດເຂົ້າໃນຊົ່ວໂມງຮຽນ ໂດຍມີການເລົ່ານິທານຫນຶ່ງຊົ່ວໂມງຕໍ່ອາທິດ ເພື່ອສ້າງໃຫ້ນັກສຶກສາສ້າງຄູເຫຼົ່ານັ້ນມີລະບຽບວິໄນດີ ແລະມີສະມັດຖະພາບທີ່ດີໃນການຄຸ້ມຄອງນັກຮຽນຂອງຕົນໃນອານາຄົດ.ໃນຮູບການການເຄື່ອນໄຫວກິດຈະກໍາການເລົ່ານິທານດັ່ງກ່າວມັນໄດ້ສອດຄ່ອງກັບ ລະບົບການສຶກສາຊັ້ນໂຮງຮຽນປະຖົມ, ດັ່ງນັ້ນທາງກະຊວງສຶກສາຈຶ່ງໄດ້ສ້າງຂະບວນການຫ້ອງສະຫມຸດແລະການເລົ່ານິທານໃຫ້ກວ້າງຂວາງ. ເພື່ອດຶງດູດໃຫ້ເດັກທັນມາສົນໃຈຕໍ່ການສຶກສາ,ຮໍ່າຮຽນຫລາຍຂຶ້ນ,ອີກປະການຫນຶ່ງມັນຊ່ວຍຫລຸດຜ່ອນອັດຕາການຄ້າງຫ້ອງຂອງນັກຮຽນ,ທີ່ປະລະການຮໍ່າຮຽນ.ຢູ່ໃນຊັ້ນປະຖົມໂດຍສະເພາະນັກຮຽນຊັ້ນອະນຸບານໃຫ້ມີຈິດໃຈຢາກເຂົ້າໂຮງຮຽນ,ບັນເທົາພາລະຂອງຄອບຄົວ ແລະປະກອບສ່ວນໃນການສຶກສາອົບຮົມສົນລະທໍາໃຫ້ເດັກເຫຼົ່ານັ້ນກາຍເປັນເດັກທີ່ມີຄຸນນະພາບແລະທັງເປັນການກໍ່ສ້າງຊັບພະຍາກອນມະນຸດທີ່ມີຄຸນຄ່າຂອງຊາດ.

4. <u>ການຄາດຄະເນ</u>:

- ການເຄື່ອນໄຫວວຽກງານຫໍສະຫມຸດແລະການເລົ່ານິທານທີ່ປະເທດກໍາປູເຈຍນັ້ນ, ໄດ້ດໍາເນີນການຢ່າງຕໍ່ເນື້ອງ ພ້ອມທັງຈັດເຂົ້າໃນຫລັກສູດການສຶກສາຢ່າງເປັນທາງການ, ເພື່ອຮັບປະກັນປະສິດທິພາບເຮັດໃຫ້ເດັກນ້ອຍແລະນັກຮຽນ, ນັກສຶກສາ ຮັກການອ່ານ,ຮັກການຄົ້ນຄວ້າ, ຮັກການສຶກສາຮໍ່າຮຽນມີຄວາມສາມັກຄີຮັກແພງ, ຊ່ວຍເຫລືອເຊິ່ງກັນແລະກັນເພື່ອຕອບສະຫນອງ ໃຫ້ແກ່ເປົ້າຫມາຍການສຶກສາອົບ

ນິມແຫ່ງຊາດກໍ່ສ້າງຄົນທີ່ສົມບູນ. ຈະເລີນງອກງາມທຸກສາຂາອາຊີບໄປພ້ອມໆ ກັນ, ນັ້ນໃຫ້ມີຄວາມສົມບູນສົມບູນທາງດ້ານສຸຂະພາບຮ່າງກາຍແລະແນວຄິດສະຕິປັນຍາ,ເປົ້າໝາຍດັ່ງກ່າວແມ່ນເພື່ອຮັບປະກັນໃຫ້ແກ່ການກໍ່ສ້າງພົນລະເມືອງທີ່ມີຄຸນຄ່າ,ມີຄວາມຮູ້ຄວາມສາມາດເຕັມປ່ຽມໄປດ້ວຍສິນລະທຳ,ເຄົາລົບລະບຽບກົດໝາຍ,ສິດທິມະນຸດ,ຮູ້ຈັກຮັກສາເຜີຍແຜ່ແລະຍົກສູງຄຸນຄ່າວັດທະນາທຳ,ອາລິຍະທຳຂອງຊາດ,ເປັນເຈົ້າຕົນເອງ,ເຊື່ອໝັ້ນຕົນເອງ,ຮູ້ຈັກແກ້ໄຂບັນຫາຊີວິດປະຈຳວັນ,ມີທັດສະນະຄິດປະດິດສ້າງ,ມີສະຕິຮັບຜິດຊອບສູງ,ມີຄວາມສາມາດຮັກສາສຸຂະພາບຂອງຄອບຄົວແລະສາມາດເຂົ້າຮ່ວມວຽກງານປ້ອງກັນຊາດ,ຟື້ນຟູແລະພັດທະນາປິຕຸພູມອັນແສນຮັກ, ໂດຍອີງໃສ່ຄວາມຕື່ນຕົວແບບປະຊາທິປະໄຕ,ເນື້ອໃນໃຈຄວາມການອົບຮົມກຳປູເຈຍຖືກຮັບປະກັນໃນການຍົກລະດັບບຸກຄະລາກອນທຸກໆຂະແໜງການ ບໍ່ວ່າຈະເປັນຊັ້ນຖົມ, ມັດທະຍົມຕອນຕົ້ນ,ຕອນປາຍ,ເພື່ອບັນຈຸເຂົ້າໃນຄວາມຮຽກຮ້ອງຕ້ອງການຂອງສັງຄົມແລ້ວກໍ່ຖືກຮັບປະກັນໃນການກໍ່ສ້າງໃນໄວອັນຄວນເຂົ້າໃນການຄຸ້ມຄອງ,ຊີ້ນຳ,ນຳພາເຂົ້າໃນການຄົ້ນຄວ້າວິທະຍາສາດສຳລັບການພັດທະນາ ພຣະຣາຊະອານາຈັກກຳປູເຈຍ, ຊາດ, ສາດສະໜາ, ພຣະມະຫາກະສັດ.

## ກຸ່ມທີ່ 1

### 1. ການນຳໃຊ້ຕູ້ປຶ້ມ,ຖົງປຶ້ມ

#### ຈຸດດີ

- ຄູອາຈານ,ນັກຮຽນມີປຶ້ມອ່ານເສີມ
- ເດັກ,ນັກຮຽນຮູ້ນິທານພື້ນເມືອງ,ນິທານຕ່າງໆ
- ນັກຮຽນມີຄວາມສາມາດສະແດງອອກ
- ຊ່ວຍພັດທະນາດ້ານຄວາມຮູ້ໃຫ້ແກ່ຄູ ຕົວຢ່າງ . ປຶ້ມກະເສດ,ປຶ້ມກົດໝາຍ ແລະອື່ນໆ
- ຖົງປຶ້ມມີຄວາມສະດວກຕໍ່ໂຮງຮຽນທີ່ຢູ່ຫ່າງໄກສອກຫຼີກ

#### ຂໍ້ຄົງຄ້າງ

- ຕູ້ບັນຈຸໄດ້ນ້ອຍ
- ປຶ້ມຂາດໄວກວ່າຕູ້

#### ວິທີແກ້ໄຂ

- ຂອດຄວາມຮັບຜິດຊອບດ້ານການບໍລິການຕ້ອງເຮັດໃຫ້ດີ
- ຕ້ອງຖ່າຍທອດໃຫ້ຄູປະຈຳຫ້ອງແຕ່ລະຊັ້ນຮຽນ
- ຄວນຈັດໃຫ້ມີເວລາອ່ານປຶ້ມ
- ນຳເອົາປຶ້ມໄປບໍລິການໃນຈຸດໃດໜຶ່ງ
- ແລກປ່ຽນປຶ້ມອ່ານລະຫວ່າງໂຮງຮຽນຕໍ່ໂຮງຮຽນ

### 2. ວິທີການດຶງດູດເດັກມາຊົມໃຊ້ປຶ້ມມີຄື

- ຄູຕ້ອງເຮັດກິດຈະກຳເປັນປະຈຳ
- ເລົ່ານິທານເປັນປະຈຳ
- ຫຼິ້ນເກມເປັນປະຈຳ
- ປະດິດເຄື່ອງຫຼິ້ນເປັນປະຈຳ
- ສ້າງຄວາມເປັນກັນເອງກັບເດັກ

### 3. ການພົວພັນລະຫວ່າງບ້ານ, ໂຮງຮຽນ,ສຶກສານິເທດ

- ຕ້ອງມີການພົວພັນກັນຢ່າງຕໍ່ເນື່ອງແບບຕ່ອງໂສ້ແຕ່ເທິງລົງລຸ່ມ,ແຕ່ລຸ່ມຂຶ້ນເທິງ
- ການປະສານງານລະຫວ່າງອົງການຕໍ່ອົງການ
- ສຶກສານິເທດຂອງເມືອງຕ້ອງຕິດຕາມຊຸກຍູ້ປຸກລະດົມແລະສະໜັບສະໜູນວຽກງານນີ້

### 4. ການຈັດເຝິກອົບຮົມຜ່ານມາເປັນຄື

ດ້ານດີ : ໄດ້ຄວາມຮູ້ວິຊາບັນນາລັກເບື້ອງຕົ້ນ

- ໄດ້ເຝິກປະຕິບັດຕົວຈິງ

ດ້ານອ່ອນ : ເວລາສັ້ນໂພດ

## 5. ຂໍ້ສະເໜີ

- ຂໍໃຫ້ເພີ່ມການເຝິກອົບຮົມຢ່າງນ້ອຍປີລະ 2 ຄັ້ງ
- ສະເໜີໃຫ້ອົງການຕ່າງໆສືບຕໍ່ຊຸກຍູ້ຊ່ວຍເຫຼືອດ້ານຜະລິດປື້ມ, ພິມປື້ມ
- ເຝິກອົບຮົມບຸກຄະລາກອນ
- ຊ່ວຍສ້າງຫ້ອງອ່ານປະຈຳໂຮງຮຽນໃຫ້ມີກອງປະຊຸມຖອດຖອນບົດຮຽນຂັ້ນເມືອງແລະຂັ້ນແຂວງ
- ວິທີຂະຫຍາຍສົ່ງເສີມການອ່ານຫຼືປັບປຸງ
- ໃຫ້ນັກຮຽນສືບຕໍ່ຜະລິດປື້ມບູນຊູໃຫ້ໄດ້ດີ ແລະແລກປ່ຽນກັນລະຫວ່າງໂຮງຮຽນກັບໂຮງຮຽນ,
- ກຸ່ມກັບກຸ່ມແລະຮີບໂຮມໄວ້ຫໍສະໝຸດແຫ່ງຊາດ
- ສືບຕໍ່ສົ່ງປື້ມໃຫ້ບັນດາໂຮງຮຽນຫຼືກຸ່ມໂຮງຮຽນແບບໝູນວຽນ
- ສືບຕໍ່ຜະລິດອຸປະກອນການຮຽນການສອນ,ເກມຫຼິ້ນທີ່ມີຢູ່ໃນທ້ອງຖິ່ນ

## ກຸ່ມທີ່ 2

### 1. ການນຳໃຊ້ຕູ້ປຶ້ມ,ຖົງປຶ້ມ

#### ຈຸດດີ

- ນັກຮຽນສາມາດອ່ານ,ຂຽນ,ເລົ່າສູ່ກັນຟັງໄດ້
- ນັກຮຽນມີຄວາມສະຫລາດ,ມີທັດສະນະຄິດປະດິດສ້າງແລະຮູ້ວິທີການຕ່າງໆໃນຊີວິດປະຈຳວັນ
- ປະຊາຊົນບັນດາເຜົ່າມີຄວາມສົນໃຈແລະຮັບຮູ້ດ້ານວິຊາຊີບຕ່າງໆ,ການລົບລ້າງແລະບຳລຸງວັດທະນະທຳ

#### ຈຸດຄ້າງຄາ

- ມີບາງໂຮງຮຽນໄດ້ຮັບຖົງປຶ້ມແລະຕູ້ປຶ້ມແມ່ນບໍ່ໄດ້ເປີດບໍລິການເປັນປະຈຳ (ເວລາ,ສະຖານທີ່ແລະການບໍລິການ)

### 2. ວິທີດຶງດູດເດັກມາຊົມໃຊ້

- ຄູຕ້ອງປະກາດແຈ້ງການໃຫ້ບັນດານັກຮຽນ,ຄູອາຈານ,ອຳນາດການປົກຄອງພໍ່ແມ່ປະຊາຊົນຮັບຮູ້
- ຄູຕ້ອງໃຊ້ເວລາທີ່ເໝາະສົມເພື່ອອ່ານຫຼືເລົ່ານິທານ,ປຶ້ມຮູບຕ່າງໆໃຫ້ນັກຮຽນຮູ້,ເຫັນເພື່ອປູກຈິດສຳນຶກແລະສົນໃຈໃນການອ່ານ
- ຄູຕ້ອງນຳໃຊ້ການສະແດງ(ເລົ່ານິທານ,ຫຼິ້ນເກມ,ສ້າງເປັນຕົວລະຄອນ....)

### 3. ການພົວພັນລະຫວ່າງບ້ານ,ໂຮງຮຽນ,ສຶກສານິເທດແລະພາກສ່ວນອື່ນໆ

#### ຈຸດດີ

- ໂຮງຮຽນເມື່ອໄດ້ຮັບຖົງປຶ້ມແລ້ວແມ່ນໄດ້ເປີດບໍລິການໃຫ້ແກ່ນັກຮຽນ,ຄູອາຈານແລະພໍ່ແມ່ປະຊາຊົນບັນດາເຜົ່າຕາມເວລາທີ່ເໝາະສົມ
- ການສົມທົບແຕ່ຂັ້ນເທິງລົງຮອດຂັ້ນພື້ນຖານແມ່ນໄດ້ດີ

#### ຂໍ້ຄົງຄ້າງ

- ການປະສານສົມທົບລະຫວ່າງສາຍຕັ້ງແລະສາຍຂວາງສຶກສານິເທດແລະການສົ່ງເສີມການອ່ານຍັງບໍ່ທັນໄດ້ດີເທົ່າທີ່ຄວນ
- ມີບາງບ່ອນລະດັບຄວາມຮັບຮູ້,ຄວາມເຂົ້າໃຈຂອງຄູຕໍ່ບັນຫາດັ່ງກ່າວຍັງມີຂອບເຂດຈຳກັດ

### 4. ການເຝິກອົບຮົມຜ່ານມາ

#### ຈຸດດີ

- ເຮັດໃຫ້ຄູເຂົ້າໃຈຂອດບໍລິການໄດ້ດີ
- ຄູ,ນັກຮຽນ,ພໍ່ແມ່ປະຊາຊົນມີຄວາມສະຫງວນມັກໃນການອ່ານ

#### ຈຸດຄ້າງຄາ

24/VII
ຫ້າມຈຳໜ່າຍ

- ຄູບາງຄົນເມື່ອຝຶກອົບຮົມແລ້ວຍັງຂາດຄວາມຮັບຜິດຊອບໃນຂອດການບໍລິການໄດ້ດີເທົ່າທີ່ຄວນ

## 4. ຂໍ້ສະເໜີ

- ໂຮງຮຽນຕ້ອງແຊກຊ້ອນກິດຈະກຳສົ່ງເສີມການອ່ານເຂົ້າໃນບາງວິຊາໃນແຕ່ລະຊັ້ນໂດຍຄວາມເໝາະສົມ
- ການຈັດຕັ້ງທຸກພາກສ່ວນຄວນເປັນເຈົ້າການຕິດຕາມ,ກວດກາຊຸກຍູ້ເປັນປົກກະຕິ
- ຄວນຈັດຕັ້ງຝຶກອົບຮົມຂອດບໍລິການຕໍ່ຜູ້ທີ່ປ່ຽນແທນໃໝ່
- ຄູທີ່ຖືກຍ້າຍຕ້ອງມີການມອບໝາຍວຽກດັ່ງກ່າວໃຫ້ຄົນອື່ນດ້ວຍຄວາມຮັບຜິດຊອບ
- ການບໍລິການແລະປົກປັກຮັກສາປື້ມຄວນແມ່ນໜ້າທີ່ຂອງໝົດທຸກຄົນ

## ກຸ່ມທີ່ 3

1. ການນຳໃຊ້ຕູ້ປື້ມ, ຖົງປື້ມ

**ຈຸດດີ**

- ຄູແລະນັກຮຽນໄດ້ນຳໃຊ້ເຂົ້າໃນວຽກງານການຮຽນການສອນ
- ເຮັດໃຫ້ນັກຮຽນແລະຊຸມຊົນມີຄວາມສົນໃຈໃນການອ່ານ
- ເດັກສາມາດອ່ານໄດ້ໄວຂຶ້ນ

**ຂໍ້ຄົງຄ້າງ**

- ສະຖານທີ່ເກັບມ້ຽນບໍ່ຖາວອນ
- ການບໍລິການແລະຊົມໃຊ້ບໍ່ທົ່ວເຖິງ
- ຜູ້ຮັບຜິດຊອບມີການປ່ຽນແປງ

**ວິທີແກ້ໄຂ**

- ຕ້ອງມີສະຖານທີ່ເກັບມ້ຽນຖາວອນ
- ສືບຕໍ່ຂະຫຍາຍການບໍລິການລົງສູ່ທ້ອງຖິ່ນໃຫ້ທົ່ວເຖິງ
- ຜູ້ຮັບຜິດຊອບຕ້ອງມອບໝາຍແນະນຳໃຫ້ແກ່ຜູ້ປ່ຽນແທນ

2. ວິທີດຶງດູດເດັກເຂົ້າຊົມໃຊ້

- ຄູມີການເລົ່ານິທານກ່ອນຈະສອນບົດຮຽນໃນແຕ່ລະມື້ຂອງແຕ່ລະຊົ່ວໂມງສອນ, ຫຼືເກມຕ່າງໆ
- ມີປື້ມໃໝ່ເພີ່ມແຕ່ລະປີ
- ຄູມີອາລົມດີ, ມີພອນສະຫວັນຕໍ່ເດັກຮັບຜິດຊອບໂດຍສະເພາະ
- ຄູມີການໂຄສະນາເພື່ອສ້າງໃຫ້ເດັກສົນໃຈ

3. ການພົວພັນລະຫວ່າງບ້ານ,ໂຮງຮຽນ,ຄູນິເທດ

- ປຸກລະດົມໂຄສະນາຊຸມຊົນ
- ຜູ້ຮັບຜິດຊອບຕູ້,ຖົງປື້ມໄດ້ປະສານງານກັບອົງການຈັດຕັ້ງທຸກຂັ້ນໃນທ້ອງຖິ່ນ
- ສຶກສານິເທດໄດ້ປຸກລະດົມຊຸກຍູ້ຜູ້ຮັບຜິດຊອບໃນການບໍລິການ

4. ການຈັດການອົບຮົມຜ່ານມາ

- ສ້າງບຸກຄະລາກອນຜູ້ຮັບຜິດຊອບຕູ້, ຖົງປື້ມຫຼືຫ້ອງອ່ານໃນທ້ອງຖິ່ນ
- ຜູ້ຮັບຜິດຊອບຕູ້,ຖົງ,ຫ້ອງອ່ານສາມາດນຳໄປບໍລິການ
- ປູກແນວຄິດໃຫ້ເດັກນ້ອຍມີນິດໄສມັກອ່ານແຕ່ຍັງນ້ອຍ

5.ຂໍ້ສະເໜີ

- ໃຫ້ສືບຕໍ່ຂະຫຍາຍຕູ້,ຖົງຫ້ອງອ່ານໄປສູ່ບ່ອນທີ່ບໍ່ທັນມີ

- ສ້າງປື້ມເລື່ອງໃໝ່ ແລະເພີ່ມປື້ມເຂົ້າໃສ່ຕູ້,ຖົງຫ້ອງອ່ານໃຫ້ຫລາຍຂຶ້ນ
- ເພີ່ ມເວລາໃນການເຝິກອົບຮົມໃຫ້ຍາວອອກ (ຫລາຍວັນ)
- ການຈັດອົບຮົມໃນແຕ່ລະຄັ້ງຄວນໃຫ້ມີວິຊາການ,ຄູນິເທດຂັ້ນແຂວງ,ຂັ້ນເມືອງເຂົ້າຮ່ວມນຳ
- ແຕ່ລະປີຂໍໃຫ້ໄດ້ມີການຖອດຖອນບົດຮຽນໃນແຕ່ລະຂັ້ນ
- ອັດຕາກິນຂໍໃຫ້ເພີ່ມອີກເພາະເຫັນວ່າບໍ່ພຽງພໍກັບຄ່າຄອງຊີບປະຈຸບັນ
- ການຈັດກອງປະຊຸມເທື່ອໜ້າບໍ່ໃຫ້ຖືກວັນພັກລັດຖະການ

# ກຸ່ມທີ່ 4

## 1. ການນຳໃຊ້ຕູ້ປຶ້ມ ແລະຖົງປຶ້ມ.

ກ. ຈຸດດີ

- ເດັກນ້ອຍມີຄວາມສົນໃຈໃນການມາໂຮງຮຽນ ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ, ສ້າງໃຫ້ເດັກນ້ອຍນຳໃຊ້ເວລາຫວ່າງໃຫ້ເປັນຜົນປະໂຫຍດ.
- ເຮັດໃຫ້ເດັກຢູ່ຫ່າງໄກສອກຫຼີກໄດ້ມີໂອກາດອ່ານເມື່ອອ່ານແລ້ວເດັກມີຄວາມຮູ້ຄວາມສະຫລາດ.

ຂ . ວິທີແກ້ໄຂ

- ສຶກສາອົບຮົມໃຫ້ເດັກແລະມະຫາຊົນໃຫ້ມີສ່ວນຮ່ວມກັບຄູອາຈານເພື່ອຮັບຜິດຊອບຕູ້ປຶ້ມ, ຖົງປຶ້ມ
-ເມື່ອເດັກຫຼືບຸກຄົນຢືມແລ້ວໃຫ້ສົ່ງຕາມກຳນົດ.
- ຜູ້ຮັບຜິດຊອບຕູ້ປຶ້ມ,ຖົງປຶ້ມຕ້ອງເປັນເຈົ້າການ.

## 2. ວິທີດຶງດູດສ້າງຄວາມສົນໃຈ

- ເພື່ອເຮັດໃຫ້ເດັກມັກອ່ານແລະນຳໃຊ້ປຶ້ມ ຄູຕ້ອງມີແບບວິທີການນຳໃຊ້ໃຫ້ເດັກຕິດອົກຕິດໃຈ

ເຊັ່ນ : ເລົ່າເລື່ອງ, ນິທານ.

## 3. ການພົວພັນລະຫວ່າງບ້ານ,ໂຮງຮຽນ ແລະຄູສຶກສານິເທດ

- ຕ້ອງປະສານສົມທົບກັບພໍ່ແມ່ນັກຮຽນ,ຊຸມຊົນຕ່າງໆ ເພື່ອໃຫ້ເຂົາເຂົ້າໃຈ, ເພື່ອຊຸກຍູ້ລູກຫລານຂອງເຂົາເຈົ້າໄປຮ່ຳຮຽນ,ໄປອ່ານແລະຊ່ວຍປົກປັກຮັກສາ.
- ສົມທົບກັບຄູນິເທດເພື່ອຊຸກຍູ້ໃນການຄົ້ນຄ້ວາຮ່ຳຮຽນ.

## 4 . ການຈັດອົບຮົມໃນໄລຍະຜ່ານມາ

- ການເຝິກອົບຮົມໄລຍະຜ່ານມາແມ່ນມີເນື້ອໃນຄົບຖ້ວນແລະລະອຽດສົມຄວນ, ແຕ່ບຸກຄະລະກອນຈຳນວນໜຶ່ງທີ່ສົ່ງມາເຝິກອົບຮົມແມ່ນບໍ່ຖືກຕາມເປົ້າມາຍມີບາງຄົນທີ່ໄດ້ມາເຝິກອົບຮົມແລ້ວກໍ່ຍັງບໍ່ທັນໄປເຜີຍແຜ່ໃຫ້ໝູ່ເພື່ອນທີ່ຢູ່ເຂດຕົນເອງໄດ້ດີເທົ່າທີ່ຄວນ ໃນນັ້ນບາງຄົນໄດ້ມາເຝິກແລ້ວກໍ່ຖືກຍ້າຍໄປເຮັດວຽກອື່ນໆ.

## 5. ຂໍ້ສະເໜີເພື່ອປັບປຸງແກ້ໄຂ.

- ຖ້າມີການເຝິກອົບຮົມໃນເທື່ອໜ້າຂໍໃຫ້ເອົາຫົວໜ້າຫຼືຄະນະສຶກສາແຂວງ, ສຶກສາເມືອງ, ຄູນິເທດ, ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມນຳ.
- ຂໍໃຫ້ທາງອົງການຫຼືຂັ້ນເທິງລົງຕິດຕາມຊຸກຍູ້ຊ່ວຍເຫຼືອຢູ່ຂັ້ນພື້ນຖານເປັນແຕ່ລະໄລຍະ.
- ແຕ່ລະປີໃຫ້ມີການໄປທັດສະນະແລກປ່ຽນບົດຮຽນລະຫວ່າງແຂວງ-ແຂວງ ຫຼືຕ່າງປະເທດ.

## ກຸ່ມທີ່ 5

## ຈຸດດີ

1. ການນຳໃຊ້ຕູ້ແລະຖົງປື້ມ
   - ສະດວກໃນການຈັດວາງ, ຍົກຍ້າຍໄປມາງ່າຍແລະຕໍ່ການນຳໃຊ້.
   - ສາມາດນຳໃຊ້ເຂົ້າໃນການສອນ.
   - ເປັນວິຊາເສີມໃຫ້ແກ່ນັກຮຽນ
   - ຊ່ວຍໃຫ້ນັກຮຽນອ່ານ ແລະຂຽນ
   - ເປັນການເຝິກແອບຄວາມສາມາດໃຫ້ນັກຮຽນມີຄວາມຈື່ຈຳແລະຮູ້ເລົ່ານິທານ.
2. ວິທີການດຶງດູດ :
   - ນຳພາຫຼິ້ນເກມ, ເລົ່ານິທານຕ່າງໆ ຕອບຄຳຖາມໃຫ້ລາງວັນ
3. ການພົວພັນບ້ານ, ໂຮງຮຽນ, ນິເທດ
   - ບ້ານມີສ່ວນຮ່ວມໃນການປົກປັກຮັກສາ ແລະ ຊົມໃຊ້.
   - ໂຮງຮຽນໄດ້ສ້າງລະບຽບໃນການນຳໃຊ້.
   - ນິເທດມີສ່ວນຮ່ວມໃນການຕິດຕາມກວດກາຊຸກຍູ້.
4. ການຈັດເຝິກອົບຮົມຜ່ານມາ
   - ມີປະໂຫຍດໃຫ້ແກ່ພວກເຮົາໄດ້ຮັບບົດຮຽນຫລາຍ,ຮູ້ວິທີຈັດປຶ້ມ, ລົງທະບຽນອື່ນໆ.
5. ຂໍ້ສະເໜີ
   - ໂຄງການຄວນຕອບສະໜອງປຶ້ມໃຫ້ແຕ່ລະໂຮງຮຽນຢ່າງເໝາະສົມ
   - ໃຫ້ມີການປະເມີນຜົນໂຄງການສົ່ງເສີມການອ່ານທຸກໆປີ.
   - ສະເໜເຝິກອົບຮົມວິທີນຳໃຊ້ຕູ້, ຖົງປຶ້ມໃຫ້ພະນັກງານຮັບຜິດຊອບຕູ້, ຖົງປຶ້ມແຕ່ລະແຂວງຕື່ມອີກ
   - ຄວນຈັດເຝິກອົບຮົມໃຫ້ຜູ້ຮັບຜິດຊອບຫ້ອງສະໝຸດປີລະ 2 ຄັ້ງ.
   - ຂໍປຶ້ມວັດຈະນານຸກົມປະກອບຮູບພາບສຳລັບເດັກແລະປຶ້ມປະຫວັດຂອງທ່ານຜູ້ນຳໃຫ້ແຕ່ລະໂຮງຮຽນ
   - ຖ້າມີການເຝິກອົບຮົມຂໍສະເໜີເພີ່ມອັດຕາກິນຕື່ມ.

## ຈຸດຄົງຄ້າງ

ຂໍ້ທີ 1

- ຄວາມຮັບຜິດຊອບຂອງພະນັກງານຍັງບໍ່ທັນສູງ, ເຮັດໃຫ້ປຶ້ມຈີກຂາດ ແລະ ຕົກເຮ່ຍເສຍຫາຍ.
- ການບໍລິການຊຸມຊົນຍັງບໍ່ທັນທົ່ວເຖິງ
- ສະຕິຜູ້ນຳໃຊ້ຍັງຕ່ຳ

ຂໍ້ທີ 2

- ເຕັກນິກການເລົ່ານິທານຂອງຜູ້ນຳພາຍັງບໍ່ທັນຄ່ອງແຄ້ວ

ຂໍ້ທີ 3

- ການປະສານສົມທົບກັບບ້ານ,ໂຮງຮຽນ,ນິເທດຍັງບໍ່ທັນມີວິທີການລະອຽດ.

ຂໍ້ທີ 4

- ການຈັດເຝິກອົບຮົມຜ່ານມາສັ້ນໂພດ.
- ການນໍາໄປປະຕິບັດຂອງຜູ້ຮັບຜິດຊອບບໍ່ໄດ້ດີເທົ່າທີ່ຄວນ

## ວິທີແກ້ໄຂ

ຂໍ້ທີ 1

- ເລືອກເອົາຜູ້ທີ່ມີພອນສະຫວັນ ແລະ ສະທາງວນມັກ
- ຕ້ອງເປັນຄົນດຸໝັ່ນຫ້າວຫັນ.
- ສຶກສາອົບຮົມແລະຕັກເຕືອນ

ຂໍ້ທີ 2

- ຕ້ອງເປັນຄົນອາລົມດີ ຍີ້ມແຍ້ມແຈ່ມໃສ

ຂໍ້ທີ 3

- 3 ພາພສ່ວນຕ້ອງມີວິທີການຮ່ວມກັນໃນການຄຸ້ມຄອງ ແລະນໍາໃຊ້

ຂໍ້ທີ 4

- ຄວນເພີ້ມເວລາຝຶກອົບຮົມໃຫ້ຫລາຍກວ່າເກົ່າ

## ກຸ່ມທີ່ 6

### 1. ການນຳໃຊ້ຕູ້ປື້ມແລະຖົງປື້ມ

**ຈຸດດີ :**

- ເມື່ອໄດ້ຮັບຖົງປື້ມແລະຕູ້ປື້ມແລ້ວນັກຮຽນຊັ້ນປະຖົມມີພຶດຕິກຳປ່ຽນແປງເຊິ່ງມັນໄດ້ສແດງອອກຄື : ອ່ານໜັງສືໄດ້ດີກວ່າເກົ່າ.
- ຄູສາມາດນຳໃຊ້ຄວາມຮູ້ເພີ່ມຈາກການອ່ານປື້ມເລື່ອງຕ່າງໆ –ເຂົ້າໃນບົດຮຽນຊັ້ນປະຖົມຫລາຍຂຶ້ນ

**ຂໍ້ຄົງຄ້າງ**

- ຜູ້ຮັບຜິດຊອບຖົງປື້ມແລະຕູ້ປື້ມຍັງຂາດຄວາມເອົາໃຈໃສ່ຈຶ່ງເຮັດໃຫ້ປື້ມເສຍຫາຍໂດຍບໍ່ມີເຫດຜົນ ເປັນບາງຄົນ.
- ສະຖານທີ່ບໍລິການບາງບ່ອນຢູ່ຫ່າງໄກສອກຫຼີກມີການຫຍຸ້ງຍາກ.
- ບ່ອນເກັບມ້ຽນຖົງປື້ມແລະຕູ້ປື້ມບໍ່ຮັບປະກັນ.

**ວິທີແກ້ໄຂ**

- ຄູຕ້ອງໝູນໃຊ້ນັກຮຽນ ປ4-ປ5ເຂົ້າຊ່ວຍໃນການບໍລິການ.
- ອຳນາດການປົກຄອງແລະຄູອາຈານທຸກຄົນຕ້ອງເປັນເຈົ້າການ ໃນການປົກປັກຮັກສາຖົງປື້ມ.

### 2. ວິທີດຶງດູດເດັກມາຊົມໃຊ້ປື້ມມີຄື :

- ຜູ້ຮັບຜິດຊອບຕູ້ປື້ມຖົງປື້ມຕ້ອງເປັນຜູ້ທີ່ມີທັດສະນະນິ້ມນວນ ແລະ ມຕີກນິກ.
- ຜູ້ຮັບຜິດຊອບຕ້ອງມີກິດຈະກຳໃຫ້ເດັກຫຼີ້ນເຊັ່ນ : ເລົ່າເລື່ອງ, ຫຼີ້ນເກມ, ຮູບພາບ, ຄຳທວາຍ ແລະອື່ນໆ

### 3. ການພົວພັນລະຫວ່າງບ້ານ, ໂຮງຮຽນ, ສຶກສານິເທດ ແລະພາກສ່ວນອື່ນໆ.

- ສະເໜີໃຫ້ພໍ່ແມ່ນັກຮຽນ,ນາຍບ້ານແນວໂຮມ ແລະ ການຈັດຕັ້ງອື່ນໆຮັບຮູ້ນຳເມື່ອເວລາໄດ້ຮັບຖົງປື້ມ ຕູ້ປື້ມ, ເພື່ອຂໍຄວາມຊ່ວຍເຫຼືອນຳພາກສ່ວນຕ່າງໆ
- ພວກສຶກສານິເທດຕ້ອງມີການກວດກາແລະຊຸກຍູ້ຊ່ວຍວຽກງານດັ່ງກ່າວເປັນຢ່າງດີ.

### 4. ການຈັດເຝິກອົບຮົມຜ່ານມາ

- ການຈັດເຝິກອົບຮົມຜ່ານມາແມ່ນສັ້ນໂພດ (ASPB) ເຮັດ ສຳມະນາກອນບໍ່ເຂົ້າໃຈດີ –ໃນການປະ ຕະບັດຕົວຈິງ

### 5. ຂໍ້ສະເໜີເພື່ອປັບປຸງແກ້ໄຂຕໍ່ໂຄງການ

- ສະເໜີໃຫ້ທາງສຶກສາແຂວງ, ສຶກສາເມືອງເອົາໃຈໃສ່ປັງປຸງແລະຊຸກຍູ້ຕິດຕາມວຽກໂຄງການສົ່ງເສີມການອານນີ້ຢ່າງໄກ້ສິດແລະຕໍ່ເນື່ອງ,ໃຫ້ຖືເອົາວຽກນີ້ເປັນໜ້າທີ່ສຳຄັນ.
- ສະເໜີທາງໂຄງການສົ່ງເສີມການອ່ານ (SVA) ຫຼື ASBP) ແຈກຢາຍຕູ້ປື້ມແລະຖົງປື້ມຕື່ມອີກ ເຫັນວ່າຫລາຍແຂວງຍັງບໍ່ພຽງພໍແລະທົ່ວເຖິງເຂດຫ່າງໄກສອກຫຼີກ.
- ການປະເມີນສິບປີແມ່ນຊ້າເກີນໄປຂໍໃຫ້ຈັດ 2 ປີ 1 ເທື່ອພໍເປັນໄປໄດ້, ເພື່ອຈະມີໂອກາດໄດ້ມີໂອກາດໄດ້ມາຖອດຖອນບົດຮຽນນຳກັນເພື່ອເຮັດໃຫ້ວຽກສົ່ງເສີມການອ່ານດີຂື້ນ.

## ທິດທາງວາງແຜນໃນອານາຄົດ

## ກຸ່ມທີ່ 1

### 1. ທິດທາງການຕອບສະໜອງບຸກຄະລາກອນຂອງແຕ່ລະພາກສ່ວນ

- ຂໍໃຫ້ທາງກະຊວງສຶກສາທິການແຈ້ງການລົງຫາແຂວງກ່ຽວກັບການຈັດຕັ້ງປະຕິບັດ, ແຕ່ງຕັ້ງຄະນະຮັບຜິດຊອບຂັ້ນເມືອງຂັ້ນແຂວງ

- ຝຶກອົບຮົມທຸກຄັ້ງຄະນະກຳມະການຂັ້ນເມືອງຂັ້ນແຂວງຈະຕ້ອງໄດ້ເຂົ້າຮ່ວມ

- ຊອກເລືອກເຟັ້ນບຸກຄະລາກອນທີ່ມີຄວາມມັກຄວາມສົນໃຈຕໍ່ວຽກງານສົ່ງເສີມການອ່ານ,ມາຮັບຜິດຊອບລວມ,ໄປເຝິກອົບຮົມແລ້ວຖ່າຍທອດໃຫ້ຄູໃນໂຮງຮຽນນັ້ນ

### 2.ດ້ານນະໂຍບາຍ

- ຕໍ່ຜູ້ຮັບຜິດຊອບໂຄງການສົ່ງເສີມການອ່ານປະຕິບັດນະໂຍບາຍຍ້ອງຍໍ

- ບຳເນັດ (ໃຫ້ບຳເນັດຫຼືລາງວັນ )

- ໄປທັດສະນະສຶກສາ (ໃນພາຍໃນແລະຕ່າງປະເທດ)

- ສືບຕໍ່ຜະລິດປຶ້ມແຕ່ງເລື່ອງ- ໃຫ້ຄະນະກຳມະການຂັ້ນເມືອງ,ຂັ້ນແຂວງພົວພັນກັບສູນກາງໂດຍກົງ

# ທິດທາງວາງແຜນໃນອານາຄົດ

## ກຸ່ມທີ່ 2

## 1. ທິດທາງການຕອບສະໜອງບຸກຄະລາກອນຂອງແຕ່ລະພາກສ່ວນມີ

- ບຸກຄະລາກອນທີ່ຈະມາຮັບຜິດຊອບຖືງປື້ມ:ຕູ້ປື້ມ,ຫ້ອງສະໝຸດຕ້ອງຖືກເງື່ອນໄຂຄົບຖ້ວນ (ມີພອນສະຫວັນ......)
- ຜູ້ບໍລິຫານການສຶກສາແຕ່ລະຂັ້ນ,ນິເທດ,ຂະແໜງການຕ່າງໆ ຕ້ອງເປັນເຈົ້າການຢ່າງຮອບດ້ານ. (ກະຕຸກຊຸກຍູ້ແນະນຳຊ່ວຍເຫຼືອ)
- ອຳນາດການປົກຄອງ,ສະມາຄົມພໍ່ແມ່ນັກຮຽນ,ສະມາຄົມອຸດໜູນການສຶກສາ ແລະ ອົງການຈັດຕັ້ງມະຫາຊົນຕ້ອງໃຫ້ການຮ່ວມມື

## 2. ນະໂຍບາຍກ່ຽວກັບວຽກງານສົ່ງເສີມການອ່ານ

- ໂຮງຮຽນຕ້ອງແບ່ງງົບປະມານສ່ວນໃດສ່ວນໜຶ່ງເຂົ້າໃນວຽກງານສົ່ງເສີມການອ່ານ (ສ້ອມແປງປື້ມ, ຈັດຊື້ປື້ມເພີ່ມ....)
- ຖ້າມີເງື່ອນໄຂບາງໂຮງຮຽນທີ່ມີຄູເຫຼືອຕ້ອງໃຫ້ຄູຜູ້ນັ້ນຮັບຜິດຊອບໂດຍກົງ

## 3. ການພົວພັນຮ່ວມມືແຕ່ລະຂັ້ນພື້ນຖານເຖິງສູນກາງ

- ຕ້ອງມີການຈັດຕັ້ງຄະນະຮັບຜິດຊອບ
- ຜູ້ຮັບໃຊ້ແລະຜູ້ຊົມໃຊ້ຕ້ອງໃຫ້ການຮ່ວມມືໃນການປົກປັກຮັກສາ
- ຜູ້ຮັບຜິດຊອບແຕ່ລະຂັ້ນຕ້ອງມີການລາຍງານ

24/VII
ห้ามจำหน่าย

## ທິດທາງວາງແຜນໃນອະນາຄົດ

## ກຸ່ມທີ່ 3

### 1. ທິດທາງການຕອບສະໜອງບຸກຄະລາກອນຂອງແຕ່ລະພາກສ່ວນມີແນວໃດ

- ປັບປຸງຈັດຕັ້ງບຸກຄະລາກອນຜູ້ຮັບຜິດຊອບຂັ້ນແຂວງ ເມືອງ ແລະໂຮງຮຽນ,ພະແນກສຶກສາແຂວງ ຫ້ອງການສຶກສາເມືອງ, ໂຮງຮຽນ,ຖະແຫລງຂ່າວວັດທະນະທຳແຂວງ,ຖະແຫລງຂ່າວວັດທະນະທຳເມືອງ, ບ້ານ

### 2. ນະໂຍບາຍກ່ຽວກັບວຽກງານສົ່ງເສີມການອ່ານແຕ່ລະພາກສ່ວນມີແນວໃດ

- ສ້າງຫ້ອງອ່ານໃຫ້ແຂວງ, ເມືອງ, ກຸ່ມໂຮງຮຽນ ເປັນບ່ອນທົດລອງຫຼືຈຸດສຸມ
- ສະເໜີເພີ່ມຕູ້ໃຫ້ບ່ອນບໍ່ທັນມີ ແລະເສີມປື້ມເຂົ້າໃສ່ຕູ້ທີ່ມີແລ້ວ
- ສະເໜີໃຫ້ເພີ່ມຖົງປື້ມໃຫ້ບາງແຂວງ, ເມືອງ, ໂຮງຮຽນທີ່ບໍ່ທັນໄດ້ຮັບ

### 3. ການພົວພັນຮ່ວມມືແຕ່ຂັ້ນພື້ນຖານເຖິງຂັ້ນສູນກາງມີຄືແນວໃດ

- ຜູ້ຮັບຜິດຊອບຂັ້ນໂຮງຮຽນຕ້ອງຮ່ວມມືກັບບ້ານໃຫ້ການຮັບຜິດຊອບຫຼືບໍລິການໃຫ້ເດັກຊົມໃຊ້ ແລ້ວລາຍງານເມືອງປີລະ 2 ຄັ້ງ
- ສຶກສານິເທດຕ້ອງຮ່ວມມືກັບວັດທະນະທຳໃນການຕິດຕາມກວດກາລາຍງານໃຫ້ຂັ້ນແຂວງປີ 2ຄັ້ງ
- ຂັ້ນແຂວງຕ້ອງໄດ້ກວດກາຕິດຕາມປະເມີນຜົນແລ້ວລາຍງານຜົນໄດ້ຮັບໃຫ້ຂັ້ນກະຊວງປີລະ 2ຄັ້ງ

# ທິດທາງວາງແຜນໃນອະນາຄົດ

## ກຸ່ມທີ່4

## 1.ທິດທາງຕອບສະໜອງບຸກຄະລາກອນໃນແຕ່ລະພາກສ່ວນ

- ຫລັງຈາກສຳເລັດກອງປະຊຸມຄັ້ງນີ້ແລະຈະນຳເອົາເນື້ອໃນຈິດໃຈຂອງກອງປະຊຸມນີ້ໄປສະເໜີຂັ້ນ

  ແຂວງເພື່ອຈັດຕັ້ງປະຕິບັດເຊັ່ນ :

- ກວດກາແລະຈັດຕັ້ງຄືນກ່ຽວກັບຜູ້ຮັບຜິດຊອບແຕ່ລະຂັ້ນເຊັ່ນ : ຂັ້ນແຂວງ, ຂັ້ນພື້ນຖານ
- ເປີດກອງປະຊຸມຂັ້ນແຂວງດ້ວຍການນຳເອົາພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມນຳ
- ຂັ້ນແຂວງ, ເມືອງຕ້ອງມີນະໂຍບາຍອັນຖືກຕ້ອງໃນການຍົກຍ້າຍພະນັກງານ
- ມີການລົງຕິດຕາມຊຸກຍູ້ອຳນາດການປົກຄອງທ້ອງຖິ່ນໃຫ້ມີສ່ວນຮັບຜິດຊອບນຳ

## 2.ນະໂຍບາຍກ່ຽວກັບວຽກງານສົ່ງເສີມການອ່ານໃນແຕ່ລະພາກສ່ວນ

ພາກສ່ວນການຈັດຕັ້ງ : ຂັ້ນແຂວງມີນະໂຍບາຍແລະອຳນວຍຄວາມສະດວກໃຫ້ແກ່ຄູຜູ້ຮັບຜິດຊອບໄດ້ມີໂອກາດເຂົ້າຮ່ວມກອງປະຊຸມເຝິກອົບຮົມແລະຖອດຖອນບົດຮຽນ

ກ. - ຂັ້ນເມືອງ ມີນະໂຍບາຍໃຫ້ຄູຜູ້ທີ່ຮັບຜິດຊອບວຽກງານນີ້

- ລຸດຜ່ອນຊົ່ວໂມງສອນ, ອຳນວຍຊ່ວຍເຫຼືອສະຖານທີ່ເຊັ່ນໂຮງຮຽນຫ້ອງສະໝຸດ
- ຍ້ອງຍໍ
- ອຳນວຍຄວາມສະດວກບາງຢ່າງທີ່ມີເງື່ອນໄຂ

ຂ. ພາກສ່ວນອົງການ

- ຂໍໃຫ້ສະໜອງອຸປະກອນ, ປື້ມຕຳລາໃໝ່ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ
- ມີນະໂຍບາຍໄປທັດສະນະແລະຖອດຖອນບົດຮຽນ
- ປຸກສ້າງຫໍສະໝຸດໃຫ້ແກ່ບ່ອນທີ່ມີເງື່ອນໄຂ

## 3. ການພົວພັນຮ່ວມມືແຕ່ລະຂັ້ນພື້ນຖານເຖິງສູນກາງ

- ຂັ້ນແຂວງ, ຂັ້ນກະຊວງຕ້ອງມີການພົວພັນປະສານສົມທົບກັນເພື່ອວາງແຜນລົງຕິດຕາມກວດກາຈັດກອງປະຊຸມເພີ່ມຖອດຖອນບົດຮຽນໃນແຕ່ລະໄລຍະເພື່ອແກ້ໄຂແລະວາງແຜນການປະຕິບັດໃນຂັ້ນຕໍ່ໄປ
- ຂັ້ນເມືອງ, ໂຮງຮຽນ,ອຳນາດການປົກຄອງຕ້ອງມີການປະສານສົມທົບເຊິ່ງກັນແລະກັນເພື່ອພ້ອມກັນຊຸກຍູ້ສົ່ງເສີມວຽກງານນີ້ດຳເນີນໄປໄດ້ດີເຊັ່ນ :
- ເອື້ອອຳນວຍຄວາມສະດວກໃຫ້ແກ້ຜູ້ຮັບຜິດຊອບຕູ້ສະໝຸດ, ສະຖານທີ່ເກັບມ້ຽນ,ໂຄສະນາໃຫ້ພໍ່,ແມ່ປະຊາຊົນຊ່ວຍຊຸກຍູ້ສົ່ງເສີມລູກຫລານໄປຮຽນ (ອ່ານ)
- ມີການສ່ອງແສງລາຍງານເປັນແຕ່ລະໄລຍະແຕ່ຂັ້ນລຸ່ມຮອດຂັ້ນເທິງ

## ທິດທາງວາງແຜນໃນອະນາຄົດ

## ກຸ່ມທີ່5

### 1. ທິດທາງການຕອບສະໜອງບຸກຄະລາກອນຂອງແຕ່ລະພາກສ່ວນ

- ສ້າງຜູ້ຮັບຜິດຊອບວຽກສົ່ງເສີມການອ່ານຂັ້ນແຂວງໂດຍແມ່ນພະນັກງານພະແນກວັດທະນະທຳເປັນຜູ້ຮັບຜິດຊອບ
- ຈັດການເຝິກອົບຮົມໃຫ້ຜູ້ຮັບຜິດຊອບຂັ້ນແຂວງ, ເມືອງບ້ານແລະໂຮງຮຽນ

### 2. ດ້ານນະໂຍບາຍ

- ດ້ານນະໂຍບາຍ : ສ້າງຫ້ອງສະໝຸດໃຫ້ໂຮງຮຽນມັດທະຍົມຕົ້ນ, ມັດທະຍົມປາຍ ແລະກຸ່ມໂຮງຮຽນປະຖົມຕ່າງໆ
- ແຕ່ລະປີຕ້ອງມີການປະຊຸມຂັ້ນແຂວງ, ຂັ້ນເມືອງປີລະ 1 ເທື່ອ
- ຂັ້ນສູນກາງມີກອງປະຊຸມ 3 ປີ ຕໍ່ 1 ເທື່ອ
- ຜູ້ໃຫ້ທຶນຕ້ອງສະໜອງປື້ມໃຫ້ພຽງພໍ
- ຄວນໃຫ້ໂອກາດຜູ້ຮັບຜິດຊອບວຽກງານນີ້ໄດ້ໄປຖອດຖອນບົດຮຽນບ່ອນທີ່ເຮັດໄດ້ດີ.

### 3. ການພົວພັນຮ່ວມມືປຕ່ຂັ້ນພື້ນຖານເຖິງສູນກາງ

- ແຕ່ງຕັ້ງຄະນະຮັບຜິດຊອບແຕ່ຂັ້ນແຂວງຮອດພື້ນຖານ

# ທິດທາງວາງແຜນໃນອະນາຄົດ

## ກຸ່ມທີ່6

## 1. ທິດທາງການຕອບສະໜອງບຸກຄະລາກອນຂອງແຕ່ລະພາກສ່ວນມີຄື :

- ສະເໜີໃຫ້ທາງກະຊວງສຶກສາມີຂໍ້ຕົກລົງແຕ່ງຕັ້ງຜູ້ຮັບຜິດຊອບວຽກງານສົ່ງເສີມການອ່ານ,ຂັ້ນແຂວງ ຂັ້ນເມືອງຢ່າງລະອຽດ
- ໃຫ້ມີແຜນແລະການກວດກາຕູ້ປຶ້ມ,ຖົງປຶ້ມຄືນໃໝ່ແຕ່ລະແຂວງ:ແຕ່ລະເມືອງທີ່ໄດ້ຮັບຜ່ານມາ
- ສະເໜີໃຫ້ໂຮງຮຽນໝວດເປັນຜູ້ຄຸ້ມຄອງປົກປັກຮັກສາຕູ້ປຶ້ມ,ຖົງປຶ້ມເພື່ອຮັບປະກັນໃນການ ນໍາໃຊ້ທົ່ວເຖິງ

## 2. ນະໂຍບາຍວຽກງານສົ່ງເສີມການອ່ານມີຄື :

- ຕອບສະໜອງປຶ້ມຄືນໃໝ່,ໃຫ້ຕູ້ປຶ້ມ ແລະ ຖົງປຶ້ມທີ່ໄດ້ຮັບໃນເມື່ອກ່ອນ
- ຂໍໃຫ້ເຝິກອົບຮົມວິທີການນໍາໃຊ້ແລະປົກປັກຮັກສາຕູ້ປຶ້ມ,ຖົງປຶ້ມຄືນໃໝ່ໃຫ້ຜູ້ຮັບຜິດຊອບ
- ຄວນໃຫ້ມີປະສົບການໄປຖອດຖອນບົດຮຽນບ່ອນທີ່ເຮັດໄດ້ດີ

## 3. ການພົວພັນຮ່ວມມືແຕ່ລະຂັ້ນພື້ນຖານເຖິງສູນກາງມີຄື

- ທຸກອົງການຈັດຕັ້ງຂັ້ນພື້ນຖານມີສ່ວນຮ່ວມ (ນາຍບ້ານ,ສະມາຄົມພໍ່ແມ່ນັກຮຽນຊາວໜຸ່ມ.....)

ໃນການປົກປັກຮັກສາວຽກງານສົ່ງເສີມການອ່ານ

- ໃຫ້ມີການສະຫລຸບວຽກງານສົ່ງເສີມການອ່ານໃຫ້ຂັ້ນເທິງຊາບແຕ່ລະໄລຍະ
- ຂໍຄວາມຊ່ວຍເຫຼືອຈາກພາກສ່ວນຕ່າງໆແຕ່ລະທ້ອງຖິ່ນທີ່ມີເງື່ອນໄຂປະກອບສ່ວນທາງດ້ານການເງິນ ແລະ ວັດຖຸ
- ຂໍໃຫ້ທາງໂຄງການຊ່ວຍສ້າງຫ້ອງຮັກອ່ານຫຼືຫ້ອງສະໝຸດປະຈໍາໝວດໂຮງຮຽນທີ່ມີຄວາມພ້ອມ

# ມະຕິຕົກລົງຂອງກອງປະຊຸມປະເມີນຜົນ

ຜ່ານການຄົ້ນຄ້ວາຈຳແນກບັນຫາສະພາບການໃນທົ່ວທຸກພາກ ຜ່ານຜູ້ເຂົ້າຮ່ວມໃນກອງປະຊຸມໃນຄັ້ງນ ຄະນະຈັດຕັ້ງໄດ້ສັງລວມບັນຫາຂໍ້ສະເໜີ ແລະ ວິທີການແກ້ໄຂຕ່າງໆໄວ້ ແລະຕົກລົງເປັນມະຕິເຊິ່ງທຸກພາກສ່ວນທີ່ມີສ່ວນກ່ຽວຂ້ອງຈະນຳໄປປະຕິບັດນຳກັນເພື່ອປັບປຸງໃຫ້ໂຄງການສົ່ງເສີມການອ່ານໃນ ສ.ປ.ປ.ລາວບັນລຸເປົ້າໝາຍ.

ດັ່ງນັ້ນກອງປະຊຸມ ແລະຄະນະປະເມີນຜົນຈຶ່ງຕົກລົງກຳນົດບາງມະຕິດັ່ງນີ້ ເພື່ອນຳສະເໜີຕໍ່ຂັ້ນເທິງກໍຄື ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ແລະ ກະຊວງສຶກສາທິການພິຈາລະນາ

1. ດ້ານວິຊາການ, ຈະຕ້ອງມີການເຝິກບຣິມຫລາຍລະດັບ (ສຳຫລັບຜູ້ທີ່ມີພອນສະຫວັນ, ຄັດເລືອກໂດຍທາງສຶກສານິເທດ, ສຶກສາແຂວງ)

- ການບຳລຸງຍົກລະດັບໃຫ້ແກ່ຜູ້ປະຕິບັດມາແລ້ວ ຍຶດເວລາເຝິກອົບຮົມ ແລະ ເຮັດຫລາຍເທື່ອຕໍ່ປີ ຕາມເງື່ອນໄຂຕົວຈິງ ໂດຍມອບໃຫ້ທາງແຂວງເປັນເຈົ້າການ

2. ເພື່ອສ້າງຂໍ້ສະດວກໃນການປະຕິບັດ ອີງໃສ່ກົດລະບຽບຂອງກົມສາມັນສຶກສາ ( ໃຫ້ມີຫ້ອງສະໝຸດມີສູນສັບພະຍາກອນ) ໃຫ້ແຕ່ລະໂຮງຮຽນ, ຄູຜູ້ຮັບຜິດຊອບນຳເອົາກິດຈະກຳສົ່ງເສີມການອ່ານ, ການເລົ່ານິທານ, ອ່ານປື້ມ.....ເຂົ້າໃນຫລັກສູດຂອງຕົນເລີຍ (ເຊິ່ງບາງບ່ອນໄດ້ເຮັດມາແລ້ວ ແລະ ໄດ້ຮັບຜົນຢ່າງເພິ່ງພໍໃຈ)

3. ໃຫ້ມີຄະນະກຳມະການຮັບຜິດຊອບຂັ້ນແຂວງ (ໂດຍສະເໜີທ່ານເຈົ້າແຂວງເປັນປະທານຊີ້ນຳລວມວຽກງານສົ່ງເສີມການອ່ານແຫ່ງຊາດ, ຮ່ວມກັບພະແນກສຶກສາ, ວັດທະນະທຳ ແລະພະແນກອື່ນໆ ອ້ອມຂ້າງ.

4. ສ້າງເງື່ອນໄຂໃຫ້ຊຸມຊົນທ້ອງຖິ່ນເຂົ້າມາຮ່ວມສະນັບສະໜູນໂຄງການເຊັ່ນໃຫ້ມີສະມາຄົມສົ່ງເສີມການອ່ານຫລາຍຮູບແບບ (ພໍ່ແມ່ປະຊາຊົນ,ສ້າງກອງທຶນເພື່ອສະໜັບສະໜູນການຈັດພິມປື້ມ,ສ້າງຫ້ອງສະໝຸດ,ຮ່ວມກັບທຸກພາກສ່ວນການຈັດຕັ້ງ

24/VII

ห้ามจำหน่าย

## ສະຫລຸບລາຍຈ່າຍກອງປະຊຸມ

<u>ງົບປະມານທັງໝົດທີ່ໄດ້ຮັບ</u>

| | |
|---|---|
| 1. ຈາກອົງການ UNICEF | 11.242.000 ກີບ |
| 2. ຈາກອົງການ SVA | 20.600.000 ກີບ |
| 3. ຈາກອົງການ ASPB | 20.600.000 ກີບ |

**ລວມ : <u>52.442.000 ກີບ</u>**

ງົບປະມານນີ້ໄດ້ໃຊ້ຈ່າຍໃນກອງປະຊຸມລະອຽດມີດັ່ງນີ້ :

| | |
|---|---|
| 1. ຈ່າຍຄ່າເດີນທາງຜູ້ແທນກໍາປູເຈຍ | 7.366.560 ກີບ |
| 2. ຈ່າຍຄ່າເດີນທາງສໍາມະນາກອນ | 14.167.500 ກີບ |
| 3. ຄ່າເບັຍລ້ຽງສໍາມະນາກອນແລະຄະນະຈັດຕັ້ງ | 9.240.000 ກີບ |
| 4. ຄ່າທີ່ພັກຂອງສໍາມະນາກອນ | 7.500.000 ກີບ |
| 5. ຄ່າໃຊ້ຈ່າຍຕ່າງ ໆ ເຊັ່ນ: ຄ່າຫ້ອງປະຊຸມ, ເອກະສານ ອາຫານຫວ່າງ, ກິນລ້ຽງ ແລະອື່ນ ໆ | 14.167.940 ກີບ |

**ລວມຄ່າໃຊ້ຈ່າຍທັງໝົດ : <u>52.440.000 ກີບ</u>**

ສາທາລະນລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ບົດສະຫລຸບ

ກອງປະຊຸມປະເມີນຜົນໂຄງການສົ່ງເສີມການອ່ານແຫ່ງຊາດຄົບຮອບ 10 ປີ 1999-2000
ຄັ້ງທີ I 15-18 / 12 / 2000 ທີ່ຫໍວັດທະນະທຳແຫ່ງຊາດ ກຳແພງນະຄອນວຽງຈັນ.

ອີງຕາມໃບອະນຸຍາດເປີດກອງປະຊຸມຂອງກະຊວງຖະແຫລງຂ່າວແລະວັດທະນະທຳ ເລກທີ 1423/ ຫກ ລົງວັນທີ 30/11/2000 ແລະແຈ້ງການຂອງການກະຊວງສຶກສາເລກທີ່ 1493/ຫກສມ ລົງວັນທີ 26/ 10/ 2000 ກ່ຽວກັບໃຫ້ສົ່ງພະນັກງານສຶກສາມາຮ່ວມປະຊຸມປະເມີນຜົນສົ່ງເສີມການອ່ານ

## I. ການເຄື່ອນໄຫວກິດຈະກຳ

ໃນວັນທີ 15/12/2000 ເວລາ 8.45 ໂມງ ກອງປະຊຸມໄດ້ຈັດຂື້ນເປັນທາງການເປັນກຽດຂົ້າຮ່ວມໃນພິທີດັ່ງກ່າວ ມີທ່ານ ແຂກແກ້ວ ສ້ອຍໄຊຍະ ລັດຖະມົນຕີຊ່ວຍກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ທ່ານຄຳຮຸ່ງ ສັກລໍຄຳ ຫົວໜ້າກົມສາມັນສຶກສາ ກະຊວງສຶກສາທິການ, ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ ຫົວໜ້າກົມກໍ່ສ້າງແລະບຳລຸງຄູ ກະຊວງສຶກສາທິການ, ທ່ານ ນາງ ພວງຄຳ ສົມສະນິດ ຄະນະອຳນວຍການສະຖາບັນຄົ້ນຄວ້າວທະຍາສາດການສຶກສາແຫ່ງຊາດ , ທ່ານ ທອງ ຊິນໂຕ ຮອງຜູ້ອຳນວຍການຫ້ອງການແຂວງ ກອນດາລ, ທ່ານ ນັດ ບຸນເຮືອນ ຫວົໜ້າອຳນວຍການກົມກໍ່ສ້າງຄູກະຊວງສຶກສາຊາວໜູ່ມແລະກິລາປະເທດກຳປູເຈຍ, ທ່ານ ອາຈານດຣ. ເພັນສີ ຜູ້ຈັດການສຳນັກງານພູມີພາກເອເຊຍໂອຊີເນຍຂອງສະຫະພັນລະຫວ່າງປະເທດ ວ່າດ້ວຍສະມາຄົມ ແລະ ສະຖາບັນຫ້ອງສະໝຸດ, ຄະນະອາຈານຈາກສະຖາບັນວິໃຈ ສິລະປະວັດທະນາທຳອີສານ ມາຫາວິທະຍາໄລມະຫາສາຣະຄາມ, ຕາງໜ້າອົງການ UNDP ຕາງໜ້າອົງການ CAA, ຕາງໜ້າອົງການ ປາແດກ, ຕາງໜ້າອົງການ ສູນມົນໄຊ, ຕ່າງໜ້າອົງການ  CWS, ຕາງໜ້າສູນຂໍ້ມູນຂ່າວສານສະຫະພັນແມ່ຍິງ, ທ່ານ ປາທຣີຊີອາ ນໍແລນດ ເລຂາສອງສະຖານທູດອາເມລິກາ. ສຳມະນາກອນທີ່ມາຈາກທົ່ວປະເທດຈຳນວນ 48 ທ່ານ ພ້ອມດ້ວຍປະທານກອງປະຊຸມແລະ ຄະນະຮັບຜິດຊອບກອງປະຊຸມ.

ຈາກນັ້ນອາຈານ ກິງເດືອນ ເນດຕະວົງ ຫວົໜ້າໂຄງການ ສົ່ງເສີມການອ່ານ ແຫ່ງຊາດ ຫຼື ອຳນວຍການຫໍສະໝຸດແຫ່ງຊາດ ໄດ້ຂຶ້ນອ່ານບົດລາຍງານສະຫລຸບຜົນງານຂອງໂຄງການສົ່ງເສີມການອ່ານຄົບຮອບ 10 ປີ ແຕ່ ປີ 1990-2000 ໂດຍມີຫົວຂໍ້ດັ່ງນີ້:

1. ຄວາມເປັນມາ ແລະການດຳເນີນງານໂຄງການ.
2. ທີ່ມາຂອງໂຄງການສົ່ງເສີມການອ່ານແຫ່ງຊາດ.

3. ການດຳເນີນງານໂຄງການ ແລະ ສະໜັບສະໜູນຂອງຜູ້ອຸປະຖຳ.

4. ໝາກຜົນທີ່ໄດ້ຮັບ ສັງເກດຕີລາຄາຖອດຖອນບົດຮຽນຈາກການດຳເນີນໂຄງການ

5. ນະໂຍບາຍຕໍ່ໜ້າຂອງວຽກງານສົ່ງເສີມການອ່ານແຫ່ງຊາດ.

6. ພາກສະເໜີຫລືຄຳຮຽກຮ້ອງຕໍ່ພາກລັດຖະບານກັບຜູ້ອຸປະຖຳ.

ຈາກນັ້ນທ່ານ ແສກແກ້ວ ສ້ອຍໄຊຍະ ລັດຖະມົນຕີຊ່ວຍວ່າການກະຊວງຖະແຫລງຂ່າວແລະວັດທະນະທຳໄດ້ຂຶ້ນມີຄຳເຫັນມີບາງຕອນທ່ານໄດ້ກ່າວຕໍ່ກອງປະຊຸມໃນຄັ້ງນີ້ວ່າເປັນເວລານານພໍສົມຄວນເປັນໄລຍະເວລາ 10 ປີ ຈຶ່ງໄດ້ຈັດຕັ້ງກອງປະຊຸມ, ແຕ່ໃນນັ້ນທ່ານກໍໄດ້ກ່າວກ່ຽວກັບວຽກງານຂອງໂຄງການສົ່ງເສີມການອ່ານເປັນວຽກງານທີ່ສຳຄັນແລະຈຳເປັນທີ່ສຸດສຳຫລັບການສ້າງຊັພຍາກອນມະນຸດ, ສິ່ງສຳຄັນຈະຕ້ອງສ້າງເດັກນ້ອຍໃຫ້ມີນິໃສມັກອ່ານຕັ້ງແຕ່ເຍົາວັຍ, ຢາກເຮັດໄດ້ຢ່າງນັ້ນກໍຕ້ອງມີສິ່ງຊັກຈູງ, ກະຕຸກຊຸກຍູ້ໃຫ້ເດັກນ້ອຍມີສິ່ງປະຈັກຕາຂອງເຂົາເຈົ້າເປັນຕົ້ນຈະຕ້ອງມີປຶ້ມນິທານ, ມີກິດຈະກຳຕ່າງ ໆໃຫ້ເຂົາເຈົ້າໄດ້ປະຕິບັດໄປພ້ອມເພື່ອເປັນການສ້າງສັງຄົມການອ່ານໃນທົ່ວປວງຊົນ. ຈາກນັ້ນທ່ານ ຕາເກະຣິໂລະ ໂອໂນະ ຫົວໜ້າອົງການ SVA ໄດ້ຂຶ້ນອ່ານບົດລາຍງານຂອງອົງການໂດຍມີຫົວຂໍ້ດັ່ງນີ້:

1. ເລົ່າປະຫວັດຄວາມເປັນມາຂອງອົງການ.
2. ວັດຖຸປະສົງຫລັກຂອງອົງການທີ່ເຂົ້າມາດຳເນີນວຽກງານໃນປະເທດລາວ.
3. ວຽກງານໂຄງການທີ່ດຳເນີນຢູ່ ສ.ປ.ປ.ລາວ ( ແຕ່ປີ 1992-2000 )
4. ສະພາບລວມໃນການປະຕິບັດໂຄງການແລະນະໂນບາຍຂອງອົງການ SVA ໃນຕໍ່ໜ້າ.

ຈາກນັ້ນທ່ານນາງ ສົມເພັດ ພົງພະຈັນ ຜູ້ປະສານງານຂອງອົງການ ASPB ໄດ້ຂຶ້ນກ່າວບົດສະຫລຸບໂດຍຫຍໍ້ເລີ່ມແຕ່ປີ 1982-1990 ດັ່ງມີຫົວຂໍ້ດັ່ງນີ້ :

1. ເລົ່າຄວາມເປັນມາແລະການສະໜັບສະໜູນຂອງສະມາຄົມ.
2. ກິດຈະກຳ, ການສະໜັບສະໜູນຂອງສະມາຄົມຕໍ່ວຽກງານສົ່ງເສີມການອ່ານ.
3. ໝາກຜົນທີ່ໄດ້ຮັບ ຖອດຖອນບົດຮຽນຈາກການປະຕິບັດໂຄງການ

ຈາກນັ້ນທ່ານຄຳຮຸ່ງ ສັກລໍຄຳ ຫົວໜ້າກົມສາມັນສຶກສາກະຊວງສຶກສາທິການໄດ້ຂຶ້ນປະກອບຄຳເຫັນມີບາງຕອນທ່ານໄດ້ກ່າວວ່າ ກົມສາມັນສຶກສາໄດ້ໃຫ້ຄວາມຮວ່ມມືກັບຫໍສະໝຸດແຫ່ງຊາດມາໂດຍຕະຫລອດ, ທ່ານໄດ້ເໜັ້ນຄືນວ່າອີງຕາມຫລັກການຄຸ້ມຄອງແລະກົດລະບຽບຂອງໂຮງຮຽນສາມັນແລະອະນຸບານສຶກສາ 1997 ໃນພາກທີ 2 " ວ່າດ້ວຍການກໍ່ສ້າງພື້ນຖານແລະການອະນຸມັດຈັດຕັ້ງໂຮງຮຽນສາມັນສຶກສາ" ໃນຂໍ້ທີ 2.2.2 ໂຮງຮຽນແຕ່ລະແຫ່ງຕ່ຳສຸດຕ້ອງມີຫ້ອງການສຳຫລັບຄະນະອຳນວຍການ ຄູອາຈານ, ຫ້ອງຮຽນ, ຫ້ອງສະໝຸດຫລືມຸມໜັງສື, ຫໍຂ່າວ, ເດີ່ນຫລິ້ນກິລາແລະພລະສຶກສາສຳຫລັບຕົວເມືອງໃຫຍ່ຕ້ອງມີວິດ, ນ້ຳໃຊ້ຢ່າງພຽງພໍ, ໃນນນັ້ທ່ານກໍໄດ້ກ່າວຄວາມສຳຄັນຂອງຫ້ອງສະໝຸດກັບການສຶກສາເປັນສິ່ງທີ່ຂາດກັນບໍ່ໄດ້ເພາະຫ້ອງສະໝຸດເປັນຄັງສາງແຫ່ງຄວາມຮູ້, ເປັນບ່ອນຮວບຮວມເອກະສານແລະ

ສິ່ງພິມຕ່າງ ໆເພື່ອໃຫ້ນັກຮຽນ, ນັກສຶກສາໄດ້ສຶກສາຄົ້ນຄວ້າ, ຈາກນນັ້ທ່ານ ທອງ ຊິນໂຕ ຮອງຜູ້ອຳນວຍການແຂວງກອນດາລ ຈາກປະເທດກະປູເຈຽ ໄດ້ເລົ່າສພາບຄວາມເປັນມາແລການເຄື່ອນໄຫວວຽກງານຫ້ອງສະໝຸດແລະກິດຈະກຳສຳຫລັບເດັກແລະການຕີລາຄາວຽກງານສົ່ງເສີມການອ່ານໃນກຳປເຈຽ ເວົ້າລວມ ສະພາບກໍຄາຍຄືກັນກລຢູ່ໃນສປປລາວ.

ໃນພາກບ່າຍ ແມ່ນການແນະນຳຕົວຂອງຜູ້ເຂົ້າຮ່ວມ ຕໍ່ມາແມ່ນການຟັງລາຍງານລະອຽດຂອງຫົວໜ້າໂຄງການ ໃນນັ້ນ ມີການຍົກຕົວຢ່າງບາງແຂວງທີ່ເຮ ັດໄດ້ດີ ແລະຊີ້ໃຫ້ບາງບ່ອນທີ່ຍັງປະຕິບັດບໍ່ໄດ້ ຈາກນນັ້ ທ່ານ ນັດ ບຸນເຮືອນ ຜູ້ອຳນວຍການກົມສ້າງຄູ, ກະຊວງສຶກສາຊາວໜຸ່ມແລະກິລາວິທະຍາກອນຈາກປະເທດກຳປູເຈຽ ໄດ້ສະເໜີບົດຮຽນຂອງປະເທດ ກກປູເຈຽ ໃນນັ້ນ ມີຈຸດສຳຄັນດັ່ງນີ້ :

1. ເປັນການຮັກສາມູນເຊື້ອນິທານພື້ນເມືອງ.
2. ເປັນການເສີມຂະຫຍາຍແລະເຜີຍແຜ່ນິທານໃຫ້ກວ້າງຂວາງ.

ແລະເນັ້ນວ່າ ຢາກສົ່ງເສີມການອ່ານໃຫ້ໄດ້ດີ ຕ້ອງສ້າງໃຫ້ເດັກມີທັກສະ : ຟັງ ເວົ້າ ອ່ານ ແລະຂຽນ ຈາກນນັ້ ກໍ່ມີການສົນທະນາເປີດກວ້າງແລະຕອບຄຳຖາມຈາກກອງປະຊຸມ, ດຣ ເພັນສີ ຜູ້ສັງເກດການຈາກອົງການ IFLA ໄດ້ສະແດງຄວາມຊົມເຊີຍຄວາມພະຍາຍາມຂອງຄົນລາວ ກໍຄືຄະນະສົ່ງເສີມການອ່ານແຫ່ງຊາດເຖິງຈະມີຄວາມຫຍຸ້ງຍາກລຳບາກພຽງໃດກໍ່ໄດ້ຜ່ານຜ່າຕໍ່ອຸປະສັກນາ ໆປະການ.

ວັນທີ 16 / 12 / 2000 ເພື່ອສ້າງບັນຍາກາດ ໄດ້ມີການສະເໜີໃຫ້ສຳມະນາກອນແຕ່ງຄຳຂວັນສົ່ງເສີມການອ່ານ, ຈາກນັ້ນ ແມ່ນການຟັງລາຍງານ ຂອງ ສະມາຄົມ ສະເໜີໂດຍ ອາຈານ ຈັນທະສອນ ອິນທະວົງ ປະທານສະມາຄົມສົ່ງປື້ມຮູບໃຫ້ແກ່ເດັກລາວແຫ່ງຍີ່ປຸ່ນ ( ASPB ) ເພີ່ມເຕີມໂດຍ ນາງອາກາຍ ທີ່ເນັ້ນໃຫ້ເຫັນເຖິງຈຸດປະສົງໃຫຍ່ຂອງ ສະມາຄົມ ( ASPB ) , ເຊິ່ງມີຫົວ ຂໍ້ດັ່ງນີ້ :

1. ເພື່ອແຈກຢາຍປື້ມ
2. ສົ່ງເສີມໃຫ້ເດັກໄດ້ອ່ານຫລາຍຂຶ້ນ
3. ສ້າງຫ້ອງສະຫມຸດປວງຊົນ
4. ຢາກໃຫ້ ຄູທຸກຄົຟນຕ້ອງມີສ່ວນຮ່ວມ
5. ຂໍໃຫ້ເອົາວຽກວຽກງານສົ່ງເສີມການອ່ານເຂົ້າໃນຊົ່ວໂມງຮຽນ.

ຕໍ່ມາ ກອງປະຊຸມ ໄດ້ຮັບຟັງບົດລາຍງານຂອງອົງການ ໂດຍນາງ ສຸພາພອນ ວິຊາປຣາ ໃນນັ້ນໄດ້ເວົ້າເຖິງຄວາມສຳຄັນຂອງການເລົ່ານິທານ ແລະສາຍພາບສະໄລ້ສະແດງເຖິງການເຄື່ອນໄຫວ ຂອງອົງການແລະສຸດທ້າຍໄດ້ສະເໜີນະໂຍບາຍໃນຕໍ່ຫນ້າຂອງອົງການ ດັ່ງລຸ່ມນີ້ :

1.ຈະຫລຸດຜ່ອນຈຳນວນຕູ້ປື້ມ ແຕ່ເພີ່ມຈຳນວນປຶມໃຫ້ຫລາຍຂຶ້ນ
2.ເປີດອົບຮົມເຮັດກິດຈະກຳແລະປະເມີນຜົນໄປພ້ອມ
3. ສ້າງຫ້ອງສະຫມຸດປະຈຳແຂວງ
4. ສົ່ງເສີມການພິມປຶມພາສາລາວ ນັກແຕ້ມ ນັກຂຽນ

5. ຈັດຕັ້ງສະມາຄົມນັກຂຽນ ນັກແຕ້ມສໍາລັບເດັກ

ຫລັງຈາກທີ່ໄດ້ຈັດກຸ່ມແລ້ວໃນພາກບ່າຍແຕ່ລະກຸ່ມໄດ້ຄົ້ນຄວ້າກ່ຽວກັບບັນຫາຕ່າງໆທີ່ມີຈຸດດີ,ຈຸດອ່ອນ ວິທີແກ້ໄຂຂອງການສົ່ງເສີມການອ່ານ,ຈາກນັ້ນຜູ້ຕິດຕາມແຕ່ລະກຸ່ມໄດ້ຂຶ້ນລາຍງານຕໍ່ປະທານກອງປະຊຸມໃນການເຄື່ອນໄຫວຂອງແຕ່ລະກຸ່ມແລະຫົວໜ້າກຸ່ມຂຶ້ນລາຍງານ.

ວັນທີ17/12 /2000 ແຕ່ລະກຸ່ມໄດ້ສືບຕໍ່ລາຍງານ,ຫຼັງຈາກນັ້ນທ່ານອາຈານ ກິງເດືອນ ເນດຕະວົງ ໄດ້ອ່ານກ່ຽວກັບຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບໂຄງການການສຶກສາເພື່ອທຸກຄົນ,ການຄຸ້ມຄອງການນໍາໃຊ້ປື້ມຕໍາລາແບບຮຽນແລະໂຄງການການອ່ານສໍາລັບເຍົາວະຊົນລາວ ຂອງລັດຖະມົນຕີກະຊວງສຶກສາສະບັບເລກທີ່ 496/ສ.ກ/90 ລົງວັນທີ 4 ເດືອນຕຸລາ ປີ 1990, ຈາກນັ້ນກໍໄດ້ສືບຕໍ່ສົນທະນາກ່ຽວກັບບັນຫາທີ່ແຕ່ລະກຸ່ມໄດ້ລາຍງານຂໍ້ສະດວກ,ຂໍ້ຫຍຸ້ງຍາກແລະ ວິທີແກ້ໄຂເພື່ອປັບປຸງໃ ນຕໍ່ໜ້າ,ພາກບ່າຍສໍາມະນາກອນກໍໄດ້ສືບຕໍ່ຄົ້ນຄວ້າກ່ຽວກັບນະໂຍບາຍ, ແຜນການຈະເຮັດແນວໃດເພື່ອໃຫ້ວຽກງານສົ່ງເສີມການອ່ານໄດ້ບັນລຸເປົ້າໝາຍ.

ວັນທີ 18/12/2000 ຕອນເຊົ້າສໍາມະນາກອນໄດ້ອອກເດີນທາງໄປທັດສະນະໂຮງຮຽນຕ່າງໆທີ່ມີຫ້ອງສະໝຸດ,ຕູ້ສະໝຸດ ເຊັ່ນ: ໂຮງຮຽນ ໜອງໜ້ຽວ, ໂຮງຮຽນ ໜອງບົວທອງ, ໂຮງຮຽນ ໂພນທັນແລະໂຮງຮຽນ ສວນມອນ,ຫລັງຈາກນັ້ນກໍໄດ້ຖອດຖອນບົດຮຽນຮ່ວມກັນແລະກອງປະຊຸມກໍໄດ້ປິດ.

II. <u>ຈຸດດີ</u>

- ກະຊວງຖະແຫລງຂ່າວ ແລະວັດທະນະທໍາ & ກະຊວງສຶກສາທິການໄດ້ໃຫ້ຄວາມສະດວກ.
- 3 ອົງການ ( UNICEF, SVA, ASPB )ໄດ້ອຸປະຖໍາງົບປະມານ.
- ບັນຍາກາດຟົດຟື້ນ, ເຖິງຈະເປັນວັນເສົາ, ອາທິດ ແຕ່ສໍາມະນາກອນແຕ່ລະທ່ານກໍໄດ້ມີຄວາມອົດທົນແລະຕັ້ງໃຈຄົ້ນຄວ້າ.
- ສາມາດຕີລາຄາການປະກອບສ່ວນໃນກອງປະຊຸມໄດ້ 90%

III. <u>ຈຸດອ່ອນ</u>

- ປະຕິບັດໂມງເວລາບໍ່ໄດ້ຕາມຕາຕະລາງທີ່ກໍານົດໄວ້.
- ຍັງມີສໍາມະນາກອນບາງທ່ານບໍ່ໄດ້ປະກອບຄໍາເຫັນ.
- ການຈັດສົ່ງເອກະສານໃຫ້ປະທານກອງປະຊຸມບໍ່ທັນເວລາ, ໄດ້ຮັບຂໍ້ມູນພຽງ 9 ແຂວງເທົ່ານັ້ນ.

IV. <u>ຂໍ້ສະເໜີ</u>

- ຄວນປັບປຸງເງື່ອນໄຂການກິນຢູ່ຂອງຜູ້ເຂົ້າຮ່ວມກອງປະຊຸມໃຫ້ດີກວ່າເກົ່າ.

24 / VII ຫ້າມຈໍາໜ່າຍ

## V. ຜົນທີ່ໄດ້ຮັບ

- ຄູ, ນັກຮຽນໄດ້ມີປື້ມອ່ານເພີ່ມຫລາຍຂຶ້ນ.
- ການອ່ານ, ຂຽນຂອງນັກຮຽນດີຂຶ້ນ.
- ນັກຮຽນມີຄວາມກ້າຫານ, ກ້າສະແດງອອກໃນການຕອບຄຳຖາມຂອງຄູ, ອາຈານ.
- ໄດ້ພັດທະນາແນວຄວາມຄິດຈາກການອ່ານ.

ສຸດທ້າຍຂໍອວຍພອນໃຫ້ແກ່ແຂກທີ່ເຂົ້າຮ່ວມກອງປະຊຸມ, ປະທານແລະຄະນະຮັບຜິດຊອບກອງປະຊຸມຈົ່ງມີຄວາມສຸກ, ອວຍພອນໃຫ້ແກ່ສຳມະນາກອນທຸກ ໆທ່ານຈົ່ງມີຄວາມສຸກແລະເດີນທາງດ້ວຍຄວາມປອດພັຍ.

ຂໍຂອບໃຈ

# ຮູບພາບການເຄື່ອນໄຫວຂອງກອງປະຊຸມ



ຄະນະຜູ້ແທນແລະສຳມະນາກອນເຂົ້າຮ່ວມພິທີເປີດກອງປະຊຸມ




ສຳມະນາກອນຟັງການບັນລະຍາຍຂອງປະທານກອງປະຊຸມ




ໃນເວລາພັກຜ່ອນສຳມະນາໄດ້ອ່ານປື້ມທີ່ນຳມາວາງສະແດງ



ສຳມະນາກອນແຕ່ລະໜ່ວຍໄດ້ຄົ້ນຄວ້າກ່ຽວກັບວຽກງານສົ່ງເສີມການອ່ານ



ຕາງໜ້າສຳມະນາກອນໄດ້ຂຶ້ນສາທິດໃນການເລົ່ານິທານ



ສຳມະນາກອນແຕ່ລະໜ່ວຍໄດ້ຄົ້ນຄວ້າກ່ຽວກັບວຽກງານສົ່ງເສີມການອ່ານ
ແລະ ໄດ້ວາງແຜນທິດທາງໃນອະນາຄົດ

24/VII



ສຳມະນາກອນໄດ້ໄປທັດສະນະສຶກສາແລະຢ້ຽມຢາມຊົມຫ້ອງສະໝຸດ
ທີ່ເຮັດໄດ້ດີ




ທ່ານ ຈັນທະພິລິດ ຈຽມສີສຸລາດ ຫົວໜ້າກົມພິມຈຳໜ່າຍແລະຫໍສະໝຸດ
ໄດ້ກ່າວປິດພິທີກອງປະຊຸມ